# ມາດຕະການທາງກົດໝາຍຕໍ່ການສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ຢູ່ແຂວງຈໍາປາສັກ

# Legal Measure to Promote Small and Medium Size Enterprise in Champasak Province

ໂດຍ: ນາງ ບຸນເຜີ້ງ ມະນີປະກອນ

ວິທະຍານິພົນລະດັບປະລິນຍາໂທ

ຫຼັກສູດປະລິນຍາໂທນິຕິສາດ

ສາຂາ ກົດໝາຍທຸລະກິດ

ມະຫາວິທະຍາໄລແຫ່ງຊາດ

2018

# ມາດຕະການທາງກົດໝາຍຕໍ່ການສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ຢູ່ແຂວງຈຳປາສັກ

# Legal Measure to Promote Small and Medium Size Enterprise in Champasak Province

ໂດຍ: ນາງ ບຸນເພັງ ມະນີປະກອນ

ວິທະຍານິພົນລະດັບປະລິນຍາໂທ

ຫຼັກສູດປະລິນຍາໂທນິຕິສາດ

ສາຂາ ກົດໝາຍທຸລະກິດ

ມະຫາວິທະຍາໄລແຫ່ງຊາດ

**2018**

# ມາດຕະການທາງກົດໝາຍຕໍ່ການສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ຢູ່ແຂວງຈຳປາສັກ

# Legal Measure to Promote Small and Medium Size Enterprise in Champasak Province

ວິທະຍານິພົນນີ້ດຳເນີນຕາມຫຼັກສູດການສຶກສາປະລິນຍາໂທນິຕິສາດ
ສາຂາ ກົດໝາຍທຸລະກິດ ຄະນະນິຕິສາດ ແລະ ລັດຖະສາດ
ມະຫາວິທະຍາໄລແຫ່ງຊາດ
ໄດ້ຜ່ານການປ້ອງກັນ, ຄັ້ງວັນທີ 08 ທັນວາ 2017

ໂດຍ: ນາງ ບຸນເພັງ ມະນີປະກອນ
**Miss: Bounpheng MANIPAKON**
**ລະຫັດນັກສຶກສາ: MFLP 0032/16**

ວິທະຍານິພົນນີ້ເປັນສ່ວນໜຶ່ງຕາມຫຼັກສູດການສຶກສາປະລິນຍາໂທນິຕິສາດ
ສາຂາ ກົດໝາຍທຸລະກິດ ຂອງຄະນະນິຕິສາດ ແລະ ລັດຖະສາດ
ມະຫາວິທະຍາໄລແຫ່ງຊາດ

**2018**

ວິທະຍານິພົນນີ້ຮັບຮອງໂດຍ:

ທ່ານ ປທ. ເກດສະໜາ ພິມມະຈັນ          ອາຈານທີ່ປຶກສາ:..............................

ທ່ານ ປທ. ເລັ່ງສັກ ບຸນທະລາດ          ອາຈານຜູ້ຊ່ວຍທີ່ປຶກສາ:..............................

ຄະນະກຳມະການປ້ອງກັນບົດ:

1. ທ່ານ ສຈ.ປທ. ເກດ ກຽດຕິສັກ          ປະທານ ..............................

2. ທ່ານ ຮສ.ປທ. ວຽງວິໄລ ທ່ຽງຈັນໄຊ          ກຳມະການ..............................

3. ທ່ານ ຮສ ປທ. ບຸນທ່ຽງ ພິມມະຈັນ          ກຳມະການ..............................

4. ທ່ານ ຮສ ປທ. ໄພມະນີ ໄຊວົງສາ          ກຳມະການ..............................

5. ທ່ານ ປທ ສຸລິຍັນ ລຸນຈັນທາ          ກຳມະການ..............................

ຄະນະບໍດີ:

ວັນທີ:.............................. 05 FEB 2018

ລາຍເຊັນ:..............................

ຮສ. ວຽງວິໄລ ທ່ຽງຈັນໄຊ

# ຄຳຂອບໃຈ

ຂ້າພະເຈົ້າ ດຳເນີນການສຶກສາວິທະຍານິພົນປະລິນຍາໂທນິຕິສາດ ສາຂາກົດໝາຍທຸລະກິດ ໃນຫົວຂໍ້: **ມາດຕະການທາງກົດໝາຍຕໍ່ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຢູ່ແຂວງຈຳປາສັກ** ທີ່ປະສົບຜົນສຳເລັດໄປດ້ວຍດີນັ້ນ ຂໍສະແດງຄວາມຮູ້ບຸນຄຸນ ແລະ ຂໍຂອບໃຈມາຍັງການຈັດຕັ້ງ ແລະ ບຸກຄົນ ທີ່ໄດ້ປະກອບສ່ວນອັນເປັນປະໂຫຍດໃຫ້ແກ່ການຂຽນ ດັ່ງຕໍ່ໄປນີ້:

ຂໍສະແດງຄວາມຂອບໃຈ ມາຍັງທ່ານ ທ່ານ ປທ. ເກດສະໜາ ພົມມະຈັນ ຫົວໜ້າກົມຮ່ວມມືສາກົນ ກະຊວງຍຸຕິທຳ ອາຈານທີ່ປຶກສາ ແລະ ທ່ານ ປທ. ເລັ່ງສັກ ບຸນທະລາດ ຜູ້ຊ່ວຍອາຈານທີ່ປຶກສາ ທີ່ໄດ້ໃຫ້ຄວາມຊ່ວຍເຫຼືອດ້ານຕ່າງໆໃນການຂຽນວິທະຍານິພົນສະບັບນີ້ ຈົນສຳເລັດໄປດ້ວຍດີ. ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນ ມາຍັງບັນດາອາຈານທີ່ສິດສອນໃນຫຼັກສູດປະລິນຍາໂທນິຕິສາດ ສາຂາກົດໝາຍທຸລະກິດ ຮຸ່ນທີ່ 1 ທຸກທ່ານທີ່ໄດ້ຖ່າຍທອດຄວາມຮູ້ທາງດ້ານກົດໝາຍວິຊາຕ່າງໆໃນຂັ້ນສູງໃຫ້ແກ່ຂ້າພະເຈົ້າ.

ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນ ມາຍັງພະນັກງານການນຳ ທັງຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ, ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ຫົວໜ້າຫ້ອງການແຜນການ ແລະ ການລົງທຶນເມືອງ, ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ພ້ອມດ້ວຍພະນັກງານວິຊາການ, ພະນັກງານບໍລິຫານຕ່າງໆ ແລະ ນັກທຸລະກິດຢູ່ແຂວງຈຳປາສັກ ທີ່ໄດ້ສະລະເວລາໃນການຕອບແບບສອບຖາມ ແລະ ໃຫ້ສຳພາດໃນການເກັບກຳຂໍ້ມູນອັນເປັນປະໂຫຍດຕໍ່ການສຶກສາໃນຄັ້ງນີ້.

ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນ ມາຍັງຄະນະກຳມະການປ້ອງກັນວິທະຍານິພົນ ທີ່ໄດ້ໃຫ້ຄຳແນະນຳໃນການປັບປຸງບົດຈົບສົມບູນ, ຂໍຂອບໃຈມາຍັງ ພະນັກງານພາຍໃນພະແນກການສຶກສາຫຼັງປະລິນຍາຕີ ຄະນະນິຕິສາດ ແລະ ລັດຖະສາດ ທີ່ໄດ້ກວດກາທາງດ້ານເຕັກນິກຂອງບົດໃຫ້ຖືກຕ້ອງ ແລະ ສົມບູນ.

ຂໍຂອບໃຈມາຍັງຄອບຄົວ, ພີ່ນ້ອງ ແລະ ໝູ່ເພື່ອນ ທີ່ໄດ້ປະກອບສ່ວນທາງດ້ານທຶນຮອນ ແລະ ໃຫ້ກຳລັງໃຈໃນການສຶກສາຈົນສຳເລັດ.

ຂໍອວຍພອນໄຊ ອັນປະເສີດໃຫ້ບັນດາທ່ານ ຈົ່ງມີສຸຂະພາບເຂັ້ມແຂງ ປະສົບຜົນສຳເລັດໃນໜ້າທີ່ການງານດ້ວຍເຖີດ.

**ຂໍສະແດງຄວາມຂອບໃຈ**

**ບຸນເພັງ ມະນີປະກອນ**

**ນັກສຶກສາປະລິນຍາໂທນິຕິສາດ ສາຂາກົດໝາຍທຸລະກິດ ຮຸ່ນທີ 1**

# ບົດຄັດຫຍໍ້

ການສຶກສາວິທະຍານິພົນປະລິນຍາໂທນິຕິສາດ ສາຂາກົດໝາຍທຸລະກິດໃນຫົວຂໍ້: **ມາດຕະການທາງກົດໝາຍຕໍ່ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ** ມີຈຸດປະສົງເພື່ອສຶກສາຫຼັກການຕ່າງໆກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ; ສຶກສາວິທີການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ; ສຶກສາບັນຫາ ແລະ ການຊອກຫາວິທີການແກ້ໄຂບັນຫາໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ. ການສຶກສານີ້ ດຳເນີນການເກັບກຳຂໍ້ມູນທາງປະລິມານ ແລະ ຄຸນນະພາບ ຈາກຕົວຢ່າງທີ່ກຳລັງປະຕິບັດໜ້າທີ່ວຽກງານທີ່ກ່ຽວຂ້ອງກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ ຈຳນວນ 100 ຄົນ ແລະ ສຳພາດອີກ 5 ທ່ານ. ການວິເຄາະຂໍ້ມູນແບບປະລິມານ ແມ່ນການຊອກຫາຈຳນວນ ແລະ ສ່ວນຮ້ອຍຕໍ່ຄຳຖາມ, ສ່ວນການວິເຄາະຂໍ້ມູນແບບຄຸນນະພາບ ທີ່ໄດ້ຈາກການສຳພາດ ແມ່ນການສັງລວມເປັນໝວດຄຳເຫັນ.

ຜົນການສຶກສາພົບວ່າ, ຜູ້ຕອບແບບສອບຖາມຈຳນວນ 55% ເຫັນວ່າ ກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ກຳນົດເລື່ອງການສົ່ງເສີມໄວ້ຄົບຖ້ວນພຽງພໍແລ້ວລະດັບຫຼາຍ, ຈຳນວນ 49% ເຫັນວ່າ ມາດຕະການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີຄວາມສອດຄ່ອງກັບສະພາບຕົວຈິງໃນລະດັບປານກາງ, ຈຳນວນ 55% ເຫັນວ່າວິທີການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີຄວາມສອດຄ່ອງກັບສະພາບຕົວຈິງໃນລະດັບປານກາງ,ຈຳນວນ 49% ເຫັນວ່າການເຂົ້າໃຊ້ມາດຕະການສົ່ງເສີມຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີຄວາມສອດຄ່ອງກັບສະພາບຕົວຈິງໃນລະດັບປານກາງ ແລະ ຈຳນວນ 46% ເຫັນວ່າ ຄວາມເຂົ້າໃຈຕໍ່ມາດຕະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຂອງອົງການທີ່ກ່ຽວຂ້ອງມີຄວາມພຽງພໍແລ້ວໃນລະດັບປານກາງ.

ຜູ້ໃຫ້ສຳພາດເຫັນວ່າ ນິຕິກຳ ແລະ ຫຼັກການຕ່າງໆກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງກຳນົດຂັ້ນຕອນ ແລະ ວິທີການສົ່ງເສີມໄວ້ພຽງພໍ ແລະ ລະອຽດຊັດເຈນແລ້ວ ໂດຍສະເພາະກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງສະບັບລົງວັນທີ 21 ທັນວາ 2011. ບັນຫາ ແລະ ອຸປະສັກ ປະກອບມີຫຼາຍບັນຫາເປັນຕົ້ນແມ່ນ ໂຄງປະກອບການຈັດຕັ້ງພະນັກງານຮັບຜິດຊອບພາກລັດບໍ່ມີ, ຫ້ອງການ ແລະ ພະນັກງານທີ່ເຮັດວຽກກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງໂດຍກົງຍັງບໍ່ມີ, ບໍ່ມີຄະນະຊີ້ນຳຂັ້ນແຂວງໂດຍສະເພາະເຈາະຈົງ, ບໍ່ມີກອງທຶນສົ່ງເສີມ, ຂາດ

ການປະສານງານລະຫວ່າງຂັ້ນທ້ອງຖິ່ນກັບສູນກາງ ແລະ ພາກສ່ວນທີ່ກ່ຽວຂ້ອງ, ບໍ່ມີຂໍ້ມູນທີ່ຊັດເຈນກ່ຽວກັບບັນຫາຂອງຜູ້ປະກອບການ, ຕະຫຼາດໃນການຈຳໜ່າຍສິນຄ້າມີຈຳກັດ, ສິນຄ້າທີ່ຜະລິດໂດຍຄົນພື້ນລະເມືອງລາວຍັງບໍ່ມີຄຸນນະພາບເທົ່າທີ່ຄວນ ແລະ ບໍ່ໄດ້ມາດຕະຖານຕາມຕະຫຼາດຕ້ອງການ ເຮັດໃຫ້ບໍ່ສາມາດແຂ່ງຂັນກັບສິນຄ້າຂອງຜູ້ປະກອບການທີ່ເປັນຄົນຕ່າງປະເທດໄດ້ນອກຈາກນັ້ນລາຄາສິນຄ້າທີ່ຜະລິດອອກມາຍັງບໍ່ໝັ້ນຄົງຍັງຂຶ້ນລົງເລື້ອຍໆ ເປັນຕົ້ນ.

ເພື່ອເປັນການປັບປຸງການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ ຈຶ່ງສະເໜີວ່າ: ຄວນຜັນຂະຫຍາຍນິຕິກຳລະບຽບການໃຫ້ກວ້າງຂວາງ ແລະ ເຂົ້າເຖິງນັກລົງທຶນທີ່ເປັນຜູ້ປະກອບການວິສາຫະກິດຂະໜາດນ້ອຍຂັ້ນທ້ອງຖິ່ນໃຫ້ທົ່ວເຖິງ ແລະ ຄວນສ້າງວິຊາການທີ່ເຂັ້ມແຂງຂຶ້ນກວ່າເກົ່າ ເພື່ອຝຶກອົບຮົມໃຫ້ແກ່ຜູ້ປະກອບການທີ່ເປັນວິສາຫະກິດຂະໜາດນ້ອຍ; ຕ້ອງມີການເປີດກອງປະຊຸມປຶກສາຫາລືໃຫ້ກຳນົດນະໂຍບາຍທີ່ມີຄວາມເປັນເອກະພາບລະຫວ່າງພາກລັດກັບນັກທຸລະກິດ ນອກຈາກນັ້ນຄວນຊອກຫາຕະຫຼາດໃຫ້ເຂົາເຈົ້າ ເພື່ອເປັນການສົ່ງເສີມ ແລະ ຂະຫຍາຍຕະຫຼາດສູ່ພາຍນອກ, ໃຫ້ມີການພັດທະນາແຫຼ່ງທຶນໃຫ້ຫຼາຍຂຶ້ນເພື່ອເຂົ້າເຖິງແຫຼ່ງທຶນໄດ້ສະດວກກວ່າເກົ່າ.

# Abstract

The tittle of a master thesis level investigated on "Legal Measures to Promote Small and Medium Enterprises in Champasak Province". The Purposes of the study were to study the principles of promoting Small and Medium Enterprises, to examine how to promote it and ways to address its issues. The mixed research methods as quantitative and qualitative were adopted and used for the data collection. Whereas 100 distributed questionnaires were applied for the quantitative data collection, five in-depth interviews were data collected within the qualitative approach. The quantitative data analysis was described by the amount and percentage for question while coding and categorizing methods were applied for the qualitative data analysis.

The result of the findings indicated that study found that 55% of the respondents stated that Small and Medium Enterprise Law included the principles of its promotion was at many level while 49% of them mentioned its relation at moderate level. 55% of the respondents also indicated that there were moderately relation between options given and actual situation. 49% of them said that understandings of the authority concerns were relatively moderate and 46% said that it was moderately enough.

The results from the interviewing indicated that regulations and principles related to the promotion of the Small and Medium Enterprise were clearly sufficient particularly the Small and Medium Enterprise Law issued on 21 of December 2011. However, there were some issues of the implementation by authority concerns due to lack of clear guidance, budget, information, cooperation, marketing and poor quality of Lao products. Therefore, Lao products could not complete to others.

In order to promote the Small and Medium Enterprises in Champasak Province, it is proposed that regulation concerns should be widely spread particularly access investors and a strong need of the executional. It also needed types of trainings and workshops among private businesses and state authority concerns whereas more internal and external markets need to be expanded, and fund developed and easier access to financial sources.

# ສາລະບານ

**ໜ້າ**

ຄຳຂອບໃຈ....................................................................................................i
ບົດຄັດຫຍໍ້ພາສາລາວ ......................................................................................ii
ບົດຄັດຫຍໍ້ພາສາອັງກິດ..................................................................................iv
ສາລະບານ ....................................................................................................v
ພາກທີ I ພາກສະເໜີ.......................................................................................1
1. ຄວາມເປັນມາຂອງບັນຫາ..........................................................................1
2. ເຫດຜົນ ແລະ ຄວາມສຳຄັນຂອງບັນຫາ.........................................................3
3. ຈຸດປະສົງຂອງການຄົ້ນຄວ້າ........................................................................4
4. ຄຳຖາມຄົ້ນຄວ້າ .......................................................................................4
5. ສົມມຸດຕິຖານໃນການຄົ້ນຄວ້າ ...................................................................4
6. ຄາດຄະເນຜົນຈະໄດ້ຮັບຈາກການຄົ້ນຄວ້າ.....................................................4
7. ນິຍາມຄຳສັບທີ່ໃຊ້ເຂົ້າໃນການຄົ້ນຄວ້າ........................................................5
ພາກທີ II ທົບທວນທິດສະດີ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ .......................................7
1. ທົບທວນເອກະສານທີ່ກ່ຽວຂ້ອງ ..................................................................7
1.1 ແນວທາງນະໂຍບາຍຂອງພັກປະຊາຊົນປະຕິວັດລາວຕໍ່ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ......................................7
1.2 ນະໂຍບາຍຂອງລັດກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ..........................................................................8
1.3 ຫຼັກການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ.10
1.4 ຫຼັກການກ່ຽວກັບການສ້າງຕັ້ງວິສາຫະກິດ.........................................11
1.5 ຫຼັກການກ່ຽວກັບວຽກງານການສົ່ງເສີມການລົງທຶນ .............................11
1.6 ຫຼັກການກ່ຽວກັບວຽກງານພາສີ ......................................................12
1.7 ຫຼັກການກ່ຽວກັບວຽກງານສ່ວຍສາອາກອນ........................................13
2. ຄວາມຮັບຮູ້ທົ່ວໄປກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ..........................................................................................13
2.1 ຄວາມສຳຄັນຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ.........13
2.2 ປະເພດຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ...............14
2.3 ການຈັດແບ່ງຂະໜາດຂອງວິສາຫະກິດຂະໜາດນ້ອຍ ແລະຂະໜາດກາງ15

2.4 ມາດຕະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ .....16
2.5 ອົງການຄຸ້ມຄອງ ແລະ ກວດກາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດ ກາງ.....20
2.5.1 ອົງການຄຸ້ມຄອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ....20
2.5.2 ອົງການກວດກາວິສາຫະກິດຂະໜາດນ້ອຍ ແລະ ຂະ ໜາດກາງ..23
3. ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະຂະໜາດກາງຢູ່ແຂວງຈຳປາສັກ 25
3.1 ສະພາບຈຸດພິເສດຂອງແຂວງຈຳປາສັກ.....25
3.2 ຈຸດປະສົງຂອງການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຢູ່ແຂວງຈຳປາສັກ.....27
3.3 ມາດຕະການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດ ກາງຢູ່ແຂວງຈຳປາສັກ.....28
3.3.1 ການສ້າງສະພາບແວດລ້ອມທີ່ເອື້ອຍອຳນວຍໃຫ້ແກ່ການສ້າງ ແລະ ດຳເນີນທຸລະກິດ.....28
3.3.2 ການສົ່ງເສີມການເຂົ້າເຖິງແຫຼ່ງທຶນ.....29
3.3.3 ການເພີ່ມຜະລິດຕະພາບ.....29
3.3.4 ການຂະຫຍາຍ ແລະ ເຂົ້າເຖິງຕະຫຼາດ.....30
3.3.5 ການຊຸກຍູ້ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການ ສ້າງຕັ້ງອົງການຈັດຕັ້ງທຸລະກິດ.....30
3.3.6 ເສີມຂະຫຍາຍທັດສະນະຄະຕິ ແລະ ຄຸນລັກສະນະຂອງນັກປະກອບ ກິດຈະການໃນສັງຄົມ.....31
3.4 ວິທີການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງ ຈຳປາສັກ.....31
3.4.1 ການປັບປຸງສະພາບແວດລ້ອມທາງດ້ານລະບຽບການ ແລະ ການຄຸ້ມ ຄອງຂອງລັດຕໍ່ການເຄື່ອນໄຫວທຸລະກິດ.....31
3.4.2 ປັບປຸງການເຂົ້າຫາແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ຂະ ໜາດກາງ.....31
3.4.3 ການກໍ່ສ້າງຜູ້ປະກອບກິດຈະການໃໝ່.....32
3.4.4 ເພີ່ມທະວີການໃຫ້ການຊ່ວຍເຫຼືອ ແລະ ການບໍລິການພັດທະນາທຸລະ ກິດ.....32

3.4.5 ສົ່ງເສີມການເພີ່ມຜະລິດຕະພາບ ເພື່ອຍົກລະດັບຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ແລະ ການບໍລິການຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ....................................................33
3.4.6 ສົ່ງເສີມການເຂົ້າຫາຕະຫຼາດ ແລະ ການຂະຫຍາຍຕະຫຼາດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ....................................33
3.5 ອົງການທີ່ຮັບຜິດຊອບໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ........................................................33
3.5.1 ອົງການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ.................................................................33
3.5.2 ການຈັດຕັ້ງປະຕິບັດມາດຕະການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຢູ່ແຂວງ ຈຳປາສັກໃນໄລຍະຜ່ານມາ............34
3.5.3 ແຜນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຢູ່ແຂວງ ຈຳປາສັກໃນຕໍ່ໜ້າ...................................................37
3.6 ບັນຫາ ແລະ ການແກ້ໄຂບັນຫາໃນການສົ່ງເສີມວິສາຫະກິດສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ............................39
3.6.1 ບັນຫາການສົ່ງເສີມວິສາຫະກິດສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ .................................................39
3.6.2 ການແກ້ໄຂບັນຫາໃນການສົ່ງເສີມວິສາຫະກິດສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ...........................40
4. ບົດຄົ້ນຄວ້າທີ່ກ່ຽວຂ້ອງ .....................................................................41
ພາກທີ III ວິທີການສຶກສາ........................................................................43
1. ວິທີການສຶກສາ..................................................................................43
2. ຂອບເຂດດ້ານສະຖານທີ່ ແລະ ເວລາ ....................................................43
3. ປະຊາກອນ ແລະ ກຸ່ມຕົວຢ່າງ...........................................................43
4. ວິທີ ແລະ ເຄື່ອງມືເກັບກຳຂໍ້ມູນ.........................................................44
5. ວິທີວິເຄາະຂໍ້ມູນ ແລະ ແປຜົນ .........................................................44
ພາກທີ IV ຜົນການສຶກສາ........................................................................45
1. ຜົນການສຶກສາ....................................................................................45
1.1 ຄຸນລັກສະນະທົ່ວໄປຂອງຜູ້ຕອບແບບສອບຖາມ ...........................45
1.2 ທັດສະນະຂອງຜູ້ຕອບແບບສອບຖາມກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ ....................48

1.2.1 ທັດສະນະຕໍ່ນິຕິກຳ ແລະ ຫຼັກການຕ່າງໆກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ..........................48
1.2.2 ວິທີການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ ..........................53
1.2.3 ບັນຫາ ແລະ ອຸປະສັກ ໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ..........................56
1.2.4 ການແກ້ໄຂບັນຫາ ແລະ ອຸປະສັກ ໃນການສົ່ງເສີມວິສາຫະກິດຂະໜາດນ້ອຍແລະ ຂະໜາດກາງຢູ່ແຂວງຈຳປາສັກ ..........................62
1.3 ສັງລວມການສຳພາດ ..........................67
2. ວິເຄາະຜົນການສຶກສາ..........................69
ພາກທີ V ສະຫຼຸບ ແລະ ຂໍ້ສະເໜີ..........................73
1. ສະຫຼຸບ ..........................73
2. ຂໍ້ສະເໜີ ..........................75
ເອກະສານອ້າງອີງ
ເອກະສານຊ້ອນທ້າຍ
ປະຫວັດຫຍໍ້ຜູ້ສຶກສາ

# ພາກທີ I

# ພາກສະເໜີ

## 1. ຄວາມເປັນມາຂອງບັນຫາ

ຕະຫຼອດໄລຍະແຫ່ງການປົກປັກຮັກສາ ແລະ ພັດທະນາປະເທດຊາດ ກໍຄືການສ້າງບັນດາປະຖົມປັດໄຈເພື່ອກ້າວໄປສູ່ສັງຄົມນິຍົມເທື່ອລະກ້າວ ໂດຍສະເພາະ 30 ປີທີ່ຜ່ານມາແມ່ນໄລຍະແຫ່ງການດຳເນີນພາລະກິດປ່ຽນແປງໃໝ່ຂອງພັກ ເຊິ່ງແມ່ນກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 5 ສະໄໝທີ IV (ປີ 1986) ພັກໄດ້ມີແນວທາງຫັນຈາກກົນໄກລວມສູນບໍລິຫານເກື້ອກູນ ໄປສູ່ກົນໄກໄລ່ລຽງຂະຫຍາຍເສດຖະກິດຫຼາຍພາກສ່ວນດ້ວຍຮູບການທຸລະກິດທີ່ເໝາະສົມ ຮັບຮູ້ຜົນປະໂຫຍດຂອງບຸກຄົນ, ຜົນປະໂຫຍດລວມໝູ່ ແລະ ຜົນປະໂຫຍດຂອງລັດຢ່າງຖືກຕ້ອງ ເຊິ່ງໄດ້ເຮັດໃຫ້ການຜະລິດກະສິກຳ, ອຸດສາຫະກຳ-ຫັດຖະກຳ, ການຄ້າ ແລະ ການບໍລິການຂອງປະເທດເຮົາມີການຂະຫຍາຍຕົວ ແລະ ໄດ້ປະກອບສ່ວນຢ່າງຕັ້ງໜ້າໃນແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ. ໂດຍສະເພາະ ວິສາຫະກິດຂະໜາດນ້ອຍ ແລະ ກາງ ແມ່ນມີບົດບາດສຳຄັນຫຼາຍໃນການພັດທະນາເສດຖະກິດ-ສັງຄົມ ເຊິ່ງແມ່ນການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ ປະກອບສ່ວນເຂົ້າໃນການສ້າງວຽກເຮັດງານທຳໃຫ້ປະຊາຊົນ ກໍຄືການສ້າງປະຖົມປັດໄຈໃຫ້ແກ່ການຫັນເປັນອຸດສາຫະກຳ ແລະ ທັນສະໄໝເທື່ອລະກ້າວເຮັດໃຫ້ເສດຖະກິດຂອງຊາດມີການຂະຫຍາຍຕົວຕໍ່ເນື່ອງ. ການພັດທະນາ ແລະ ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ນອກຈາກຈະມີຕົ້ນທຶນຕ່ຳແລ້ວ ຍັງນຳໃຊ້ທ່າແຮງຊັບພະຍາກອນພາຍໃນເປັນຫຼັກ, ນອກຈາກນັ້ນ ຍັງສາມາດປັບຕົວໄດ້ໄວກັບສະພາບການທີ່ມີການປ່ຽນແປງ ໂດຍສະເພາະແມ່ນວິກິດການທາງດ້ານເສດຖະກິດ ແລະ ການເງິນ.

ສຳລັບແຂວງຈຳປາສັກເປັນແຂວງໜຶ່ງທີມີທ່າແຮງການຂະຫຍາຍຕົວທາງດ້ານເສດຖະກິດມາຈາກວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ. ແຂວງ ຈຳປາສັກກໍ່ເປັນທ່າແຮງທີ່ສຳຄັນໃນການຊ່ວຍໃຫ້ເສດຖະກິດຂອງປະເທດຂະຫຍາຍຕົວ ຊຶ່ງເຫັນໄດ້ຈາກການຂະຫຍາຍຕົວຢ່າງໄວວາຂອງແຂວງ ໃນສົກປີ 2014-2015 ເສດຖະກິດຂະຫຍາຍຕົວເຖິງ 11.7 ສ່ວນຮ້ອຍ ແລະ ສ້າງມູນຄ່າເພີ່ມໄດ້ເຖິງ 11.800 ຕື້ກີບ, ລວມຍອດຜະລິດຕະພັນພາຍໃນ (GDP) ສະເລ່ຍໃສ່ພົນລະເມືອງໄດ້ 16.74 ລ້ານກີບ ຫຼື ເທົ່າກັບ 2.061 USD/ຄົນ[1]. ໃນນັ້ນ ວິສາຫະກິດຂະໜາດນ້ອຍ ແລະ ກາງ ເປັນທ່າແຮງໜຶ່ງ ທີ່ປະກອບສ່ວນໃນ

---

[1]ມະຕິກອງປະຊຸມຄະນະບໍລິຫານງານພັກແຂວງຈຳປາສັກ, ຄັ້ງທີ II, ສະໄໝທີ VII, ປີ 2016, ໜ້າ 2.

ວຽກງານພັດທະນາເສດຖະກິດ ຢູ່ ແຂວງ ຈຳປາສັກ. ນັບແຕ່ປີ 2008 ຫາ 2016 ແຂວງ ຈຳປາສັກ ມີວິສາຫະກິດໄດ້ຮັບການຈົດທະບຽນທັງໝົດ ຈຳນວນ 10.106 ຫົວໜ່ວຍ, ມີທຶນຈົດທະບຽນ ທັງໝົດ 5.647 ຕື້ກີບ[2]. ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຍັງເປັນຮາກຖານເສດຖະກິດພາຍໃນຂອງແຂວງ ດັ່ງນັ້ນ ໃນໄລຍະຜ່ານມາ ແຂວງ ຈຳປາສັກ ກໍໄດ້ປະຕິບັດນະໂຍບາຍ ແລະ ມາດຕະການທີ່ລັດຖະບານວາງອອກ ເປັນຕົ້ນ ກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບປີ 2011. ແຕ່ຽງຄູ່ກັນນັ້ນ ກໍ່ເຫັນວ່າ ຍັງມີບາງດ້ານທີ່ກົດໝາຍໄດ້ກຳນົດໄວ້ແລ້ວແຕ່ການປະຕິບັດຕົວຈິງຍັງບໍ່ທັນເຮັດໄດ້ດີ ເຊິ່ງສະແດງອອກດັ່ງນີ້ ກົດໝາຍວ່າດ້ວຍການສົ່ງເສີມວິສະຫະກິດຂະໜາດນ້ອຍ ແລະ ກາງ, ມາດຕາ 13 ໄດ້ກຳນົດກ່ຽວກັບບັນດາກິດຈະການຕົ້ນຕໍໃນການສົ່ງເສີມເຊິ່ງປະກອບມີ 13 ກິດຈະການ ຫຼື 13 ນະໂຍບາຍ ແຕ່ໃນນັ້ນຢູ່ແຂວງ ແມ່ນຈັດຕັ້ງຜ່ານມາມີພຽງແຕ່ 6 ມາດຕະການຄື ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ, ການເຂົ້າເຖິງແຫຼ່ງທຶນ, ການສ້າງ ແລະ ພັດທະນາຜູ້ປະກອບກິດຈະການ, ການເພີ່ມຜະລິດຕະພາບ; ເຕັກໂນໂລຊີ ແລະ ນະວັດຕະກຳ, ການເຂົ້າເຖິງ ແລະ ການຂະຫຍາຍ ຕະຫຼາດ ແລະ ການສົ່ງເສີມການເຂົ້າເຖິງການບໍລິການໃຫ້ຄຳປຶກສາພັດທະນາທຸລະກິດ. ຈາກກິດຈະການດັ່ງກ່າວນັ້ນ ຢູ່ແຂວງ ຈຳປາສັກ ສາມາດປະຕິບັດໄດ້. ໃນຜ່ານມາແມ່ນມີພຽງ 6 ກິດຈະການ (ມາດຕະການ) ເທົ່ານັ້ນ ເພາະອີງໃສ່ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ແລະ ແຜນພັດທະເສດຖະກິດ-ສັງຄົມຂອງແຂວງ ຈຳປາສັກ, ແລະໃນ 6 ມາດຕະການນັ້ນກໍຍັງບໍ່ທັນສາມາດຈັດຕັ້ງປະຕິບັດໄດ້ 100% ສະນັ້ນ ຖ້າທຽບໃສ່ກັບ ແນວທາງນະໂຍບາຍຂອງພັກ-ລັດ ແລະ ລະບຽບກົດໝາຍ, ແລ້ວຍັງເຫັນວ່າການຈັດຕັ້ງປະຕິບັດການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງ ຈຳປາສັກຍັງບໍ່ທັນເຮັດໄດ້ດີ.

ດັ່ງນັ້ນ, ເພື່ອເຮັດໃຫ້ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກໃຫ້ເຂົ້າສູ່ລະບຽບຫຼັກການ, ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ ທັງເປັນການຊຸກຍູ້ໃຫ້ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງມີຄວາມສາມາດແຂ່ງຂັນກັບທຸລະກິດທັງພາຍໃນ ແລະ ຕ່າງປະເທດໄດ້ ທັງເປັນການປະກອບສ່ວນເຂົ້າໃນການຜະລິດສິນຄ້າ ແລະ ບໍລິການ ເພື່ອຕອບສະໜອງຍຸດທະສາດການຫັນເປັນອຸດສາຫະກຳ ແລະ ທັນສະໄໝເທື່ອລະກ້າວຂອງປະເທດ. ຂ້າພະເຈົ້າຈຶ່ງມີຄວາມສົນໃຈຢາກຈະສຶກສາໃນຫົວຂໍ້ **"ມາດຕະການທາງກົດໝາຍຕໍ່ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຢູ່ແຂວງ ຈຳປາສັກ"** ມາເປັນຫົວຂໍ້ໃນການສຶກສາຄັ້ງນີ້.

[2]ບົດລາຍງານຫຍໍ້ສະພາບການພັດທະນາວິສາຫະກິດພາຍໃນແຂວງ ຈຳປາສັກ, ປີ 2016. ໜ້າ 3.

## 2. ເຫດຜົນ ແລະ ຄວາມສຳຄັນຂອງບັນຫາ

ການສຶກສາມາດຕະການທາງກົດໝາຍຕໍ່ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ ມີເຫດຜົນອັນສຳຄັນຫຼາຍປະການທີ່ແຂວງ ຈຳປາສັກຍັງປະສົບບັນຫາຂໍ້ຫຍຸ້ງຍາກຫຼາຍດ້ານບໍ່ວ່າຈະເປັນ ຕະຫຼາດບໍ່ທັນກວ້າງຂວາງບໍ່ທັນໄດ້ມີການຂະຫຍາຍຕົວເທົ່າທີ່ຄວນ, ຄວາມຊິນເຄີຍໃນການຜະລິດເພື່ອແລກປ່ຽນໃນຕະຫຼາດບໍ່ທັນແຜ່ຫຼາຍໃນເຂດຊົນນະບົດ, ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງຈຳນວນຫຼາຍຍັງຂາດທຶນຮອນ, ປະສົບການໃນການຜະລິດ ແລະ ພັດທະນາສິນຄ້າໃຫ້ມີຄຸນນະພາບ ອີກທັງສີມືແຮງງານຍັງຕໍ່າ ແລະ ຄວາມຮູ້ທາງດ້ານວິຊາການໃນການນຳໃຊ້ເຄື່ອງມືເຕັກໂນໂລຊີທີ່ທັນສະໄໝຍັງຈຳກັດສ່ວນໃຫຍ່ສະພາບການດັ່ງກ່າວມີຜົນກະທົບສະເພາະເສດຖະກິດກະສິກຳ, ຫັດຖະກຳ, ການຄ້າ ແລະ ບໍລິການຂະໜາດນ້ອຍ ແລະ ຂະໜາກກາງ.

ຈາກເຫດຜົນທີ່ກ່າວມາຂ້າງເທິງນັ້ນ, ການສຶກສານີ້ມີຄວາມສຳຄັນ ແລະ ຈຳເປັນຫຼາຍເພາະວ່າເປັນການສຶກສາສະພາບບັນຫາທີ່ເກີດຂຶ້ນຈິງ ຕໍ່ກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງຢູ່ແຂວງ ຈຳປາສັກ ທີ່ຍັງບໍ່ໄດ້ຮັບການຈັດຕັ້ງປະຕິບັດເທົ່າທີ່ຄວນໂດຍສະເພາະການກຳນົດນະໂຍບາຍ ແລະ ມາດຕະການທາງດ້ານກົດໝາຍຕໍ່ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງ ຈຳປາສັກຍັງບໍ່ມີປະສິດທິພາບ ເນື່ອງຈາກວ່າ ຍັງມີບາງມາດຕະການທີ່ລັດຖະບານໄດ້ກຳນົດອອກມາແລ້ວ ແຕ່ທ້ອງຖິ່ນຍັງບໍ່ສາມາດນຳໄປຈັດຕັ້ງປະຕິບັດ ຫຼື ນຳມາຜັນຂະຫຍາຍໃຫ້ເປັນຂອງທ້ອງຖິ່ນ ເວົ້າລວມ, ເວົ້າສະເພາະກໍຄືຢູ່ແຂວງ ຈຳປາສັກແມ່ນໄດ້ຈັດຕັ້ງການສົ່ງເສີມວິສະຫາກິດຂະໜາດນ້ອຍ ແລະ ຂະໜາດກາງຕາມກົດໝາຍວ່າດ້ວຍການສົ່ງເສີມວິສະຫາກິດຂະໜາດນ້ອຍ ແລະ ຂະໜາດກາງກຳນົດອອກມາແຕ່ໃນຂອດການຈັດຕັ້ງປະຕິບັດແມ່ນຍັງມີສະພາບຄວາມຫຍຸ້ງຍາກຫຼາຍຢ່າງທີ່ບໍ່ສອດຄ່ອງກັບຕົວຈິງ ເນື່ອງຈາກວ່າບາງນິຕິກຳ ຍັງບໍ່ສາມາດນຳມາຈັດຕັ້ງປະຕິບັດໄດ້ ຖ້າເປັນແບບນີ້ຈະເຮັດໃຫ້ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງ ຈຳປາສັກບໍ່ໄດ້ຮັບການພັດທະນາ ແລະ ຈະເປັນບັນຫາທີ່ແກ່ຍາວແກ້ໄຂໄດ້ຍາກ, ເພື່ອຮັບປະກັນໃຫ້ບັນດາວິສາຫະກິດທີ່ປະກອບທຸລະກິດການຜະລິດ, ການຄ້າ ແລະ ການບໍລິການມີການຂະຫຍາຍຕົວ ແລະ ໄດ້ຮັບການພັດທະນາຂຶ້ນເທື່ອລະກ້າວເຮັດໃຫ້ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງເຂົ້າສູ່ລະບຽບກົດໝາຍ ທັງເປັນການເປີດກວ້າງໃຫ້ບັນດາຫົວໜ່ວຍທຸລະກິດສາມາດແຂ່ງຂັນກັນຫຼາຍຂຶ້ນ. ສະນັ້ນ ເພື່ອຊອກຫາແນວທາງໃນການແກ້ໄຂບັນຫາ ທັງເປັນບ່ອນອີງໃຫ້ແກ່ການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກໃນອານາຄົດໃຫ້ມີທ່າອ່ຽງທີ່ດີຂື້ນສາມາດສ້າງລາຍຮັບ ແລະ ອາຊີບໃຫ້ແກ່ປະຊາຊົນ ປະກອບສ່ວນລາຍຮັບໃສ່ງົບປະມານແຫ່ງລັດເຮັດໃຫ້ເສດຖະກິດ-ສັງຄົມມີການຂະຫຍາຍຕົວຂື້ນເທື່ອລະກ້າວ.

## 3. ຈຸດປະສົງຂອງການຄົ້ນຄວ້າ

- ເພື່ອສຶກສາຫຼັກການຕ່າງໆກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ;

- ເພື່ອສຶກສາວິທີການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ;

- ເພື່ອສຶກສາບັນຫາການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ.

- ເພື່ອສຶກສາການແກ້ໄຂບັນຫາໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຢູ່ແຂວງຈຳປາສັກ.

## 4. ຄຳຖາມຄົ້ນຄວ້າ

- ຫຼັກການຕ່າງໆກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໄດ້ກຳນົດໄວ້ຄືແນວໃດແດ່?

- ການໃຊ້ມາດຕະການ ແລະ ວິທີການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກໃຫ້ມີປະສິດທິພາບ ຄວນດຳເນີນການຄືແນວໃດ?

- ບັນຫາໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກເກີດມາຈາກສາເຫດອັນໃດ?

- ວິທີການແກ້ໄຂບັນຫາໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກຈະມີວິທີການແກ້ໄຂຄືແນວໃດ?

## 5. ສົມມຸດຕິຖານໃນການຄົ້ນຄວ້າ

ການໃຊ້ມາດຕະການທາງດ້ານກົດໝາຍໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກຍັງບໍ່ສອດຄ່ອງກັບສະພາບຕົວຈິງເຮັດໃຫ້ຜູ້ປະກອບກິດຈະການພົບບັນຫາຫຍຸ້ງຍາກໃນການເຂົ້າເຖິງມາດຕະການສົ່ງເສີມການລົງທຶນຂອງລັດ.

## 6. ຄາດຄະເນຜົນຈະໄດ້ຮັບຈາກການຄົ້ນຄວ້າ

- ຈະສາມາດຮັບຮູ້ໄດ້ເຖິງຫຼັກການຕ່າງໆກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ;

- ຈະສາມາດຮັບຮູ້ໄດ້ເຖິງວິທີການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ;

- ຈະສາມາດຮັບຮູ້ໄດ້ເຖິງບັນຫາໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ.

- ຈະສາມາດຮັບຮູ້ໄດ້ເຖິງການແກ້ໄຂບັນຫາການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ.

## 7. ນິຍາມຄຳສັບທີ່ໃຊ້ເຂົ້າໃນການຄົ້ນຄວ້າ

**ທຸລະກິດ** ໝາຍເຖິງ ການດຳເນີນກິດຈະການໃນຂັ້ນຕອນວຽກງານໃດໜຶ່ງ ຫຼື ທັງໝົດນັບແຕ່ຂອດການຜະລິດໄປຈົນເຖິງຂອດບໍລິການ ເພື່ອຫາຜົນກຳໄລ ແລະ ຮັບໃຊ້ຜົນປະໂຫຍດລວມຂອງສັງຄົມ;

**ວິສາຫະກິດ** ໝາຍເຖິງ ການຈັດຕັ້ງທຸລະກິດຂອງ ບຸກຄົນ ຫຼື ນິຕິບຸກຄົນ ຊຶ່ງປະກອບດ້ວຍຊື່, ທຶນ, ການບໍລິຫານຈັດການ, ສຳນັກງານ ແລະ ໄດ້ຂຶ້ນທະບຽນວິສາຫະກິດຕາມກົດໝາຍວ່າດ້ວຍດ້ວຍວິສາຫະກິດ. ວິສາຫະກິດເອີ້ນອີກຢ່າງໜຶ່ງວ່າ "ຫົວໜ່ວຍທຸລະກິດ";

**ວິສາຫະກິດຂະໜາດນ້ອຍ** ໝາຍເຖິງ ຫົວໜ່ວຍວິສາຫະກິດທີ່ມີແຮງງານສະເລ່ຍແຕ່ລະປີບໍ່ເກີນ 19 ຄົນ ຫຼື ມີມູນຄ່າຊັບສິນບໍ່ເກີນ 250 ລ້ານກີບ ຫຼື ມີຍອດລາຍຮັບຕໍ່ປີບໍ່ເກີນສີ່ຮ້ອຍລ້ານກີບ;

**ວິສາຫະກິດຂະໜາດກາງ** ໝາຍເຖິງ ຫົວໜ່ວຍວິສາຫະກິດທີ່ມີແຮງງານສະເລ່ຍແຕ່ລະປີບໍ່ເກີນ 99 ຄົນ ຫຼື ມີມູນຄ່າຊັບສິນບໍ່ເກີນ ໜຶ່ງພັນສອງຮ້ອຍລ້ານກີບ ຫຼື ມີຍອດລາຍຮັບຕໍ່ປີບໍ່ເກີນສອງພັນຮ້ອຍລ້ານກີບ;

**ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ** ໝາຍເຖິງ ການວາງນະໂຍບາຍ ແລະ ການກຳນົດມາດຕະການ ເພື່ອສ້າງສະພາບແວດລ້ອມ ແລະ ເງື່ອນໄຂດ້ານຕ່າງໆ ທີ່ອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບກິດຈະການໃນການສ້າງຕັ້ງ, ດຳເນີນ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ;

**ການສົ່ງເສີມການລົງທຶນ** ໝາຍເຖິງ ການວາງນະໂຍບາຍສົ່ງເສີມ, ການສ້າງສະພາບແວດລ້ອມ ແລະ ເງື່ອນໄຂໃນດ້ານຕ່າງໆ ແກ່ການລົງທຶນເພື່ອໃຫ້ຜູ້ລົງທຶນ ສາມາດດຳເນີນທຸລະກິດໄດ້ສະດວກ, ວອງໄວ, ໂປ່ງໃສ, ຍຸຕິທຳ ແລະ ຖືກຕ້ອງຕາມກົດໝາຍ;

**ຜະລິດຕະພາບ** ໝາຍເຖິງ ປະສິດທິພາບ ແລະ ປະສິດທິຜົນຂອງການເຄື່ອນ ໄຫວວຽກງານ, ການຜະລິດທຸລະກິດ ໂດຍເປັນການປຽບທຽບລະຫວ່າງຜົນໄດ້ຮັບ ແລະ ປັດໄຈນຳເຂົ້າ ເຊັ່ນ ແຮງງານ, ທຶນ, ວັດຖຸດິບ, ເວລາ;

**ຜູ້ປະກອບກິດຈະການການ** ໝາຍເຖິງ ເຈົ້າຂອງ ຫຼື ຜູ້ບໍລິຫານວິສາຫະກິດທີ່ເຮັດທຸລະກິດໃດໜຶ່ງເພື່ອສ້າງລາຍໄດ້ທີ່ເກີດຈາກຫົວຄິດປະດິດສ້າງ, ພູມປັນຍາ ແລະ ມີຄວາມຮັບຜິດຊອບຕໍ່ຄວາມສ່ຽງ ທັງກຳໄລ-ຂາດທຶນ ດ້ວຍຕົນເອງ;

**ສູນກໍ່ສ້າງຜູ້ປະກອບກິດຈະການ** ໝາຍເຖິງ ສະຖານທີ່ຮັບເອົາຜູ້ທີ່ມີຈຸດປະສົງສ້າງຕັ້ງວິສາຫະກິດໃໝ່ເຂົ້າຝຶກອົບຮົມ, ເຮັດຈຳລອງກ່ຽວກັບການຜະລິດທຸລະກິດ ໂດຍມີລະບົບບໍລິຫານຈັດການ ແລະ ໃຫ້ຄຳປຶກສາ;

**ການດຳເນີນທຸລະກິດ** ໝາຍເຖິງ ການດຳເນີນກິດຈະການຕ່າງໆທີ່ເຮັດໃຫ້ເກີດມີສິນຄ້າ ແລະ ບໍລິການເກີດຂື້ນໂດຍຜ່ານການແລກປ່ຽນຊື້ຂາຍ ແລະ ມີວັດຖຸປະສົງຄືຢາກໃຫ້ເກີດຜົນກຳໄລສູງສຸດ;

**ທຸລະກິດຕົວແທນ** ໝາຍເຖິງ ທຸລະກິດທີ່ໄດ້ຮັບອະນຸຍາດໃຫ້ເປັນຕົວແທນ ໃນການຜະລິດ, ຈຳໜ່າຍສິນຄ້າ ແລະ ການບໍລິການ ພາຍໃຕ້ຊື່ທຸລະກິດຕົ້ນແບບທີ່ເປັນເຈົ້າຂອງຍີ່ຫໍ້ການຄ້າໃດໜຶ່ງ;

**ນະໂຍບາຍ** ໝາຍເຖິງ ຫຼັກການ ແລະ ວິທີປະຕິບັດທີ່ຖືເປັນແນວທາງໃນການເຄື່ອນໄຫວວຽກງານຕ່າງໆ;

**ມາດຕະການ** ໝາຍເຖິງ ການນຳເອົາຍຸດທະສາດ ແລະ ວິທີການໃນການແກ້ໄຂບັນຫາໃນແຕ່ລະດ້ານໃຫ້ມີຄວາມຊັດເຈນ ໂດຍມີຄວາມສອດຄ່ອງກັບສະພາບຄວາມເປັນຈິງ ທັງໃນດ້ານເຕັກນິກ, ວິທີການ ແລະ ທາງດ້ານສັງຄົມ ຊຶ່ງມາດຕະການຍັງໝາຍເຖິງແຜນການ ຫຼືວິທີການທີ່ຈະເຮັດໃຫ້ບັນລຸວັດຖຸປະສົງ;

**ກິດຈະກຳ** ໝາຍເຖິງ ການກະທຳທີ່ໄດ້ປະຕິບັດ ເພື່ອສຳເລັດໜ້າທີ່ໃດໜຶ່ງ;

**ວນກ** ໝາຍເຖິງ ວິສາຫະກິດຂະໜາດນ້ອຍ ແລະ ກາງ.

**SMEs** ຫຍໍ້ມາຈາກ Small and Medium-Sized Enterprises

# ພາກທີ II
# ທົບທວນທິດສະດີ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ

## 1. ທົບທວນເອກະສານທີ່ກ່ຽວຂ້ອງ

### 1.1 ແນວທາງນະໂຍບາຍຂອງພັກປະຊາຊົນປະຕິວັດລາວຕໍ່ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ

ພັກໄດ້ໃຫ້ຄວາມສຳຄັນ ແລະ ມີທັດສະນະຊີ້ນຳທີ່ຊັດເຈນຕໍ່ກັບການຄຸ້ມຄອງວິສາຫະກິດທຸກຂະໜາດ ເຖິງແມ່ນວ່າບໍ່ໄດ້ເນັ້ນວິສາຫະກິດຂະໜາດນ້ອຍ ແລະ ກາງ ໂດຍລວມແຕ່ກໍໄດ້ເນັ້ນບາງຂະແໜງການຍ່ອຍ ທີ່ເປັນພື້ນຖານເສດຖະກິດຂອງຊາດ ແລະ ມີທ່າແຮງຂອງປະເທດແຕ່ລະໄລຍະເປັນຕົ້ນແມ່ນມີບາງຄວາມເຫັນທີ່ເວົ້າເຖິງບັນຫາລວມກ່ຽວກັບສະໄໝຂ້າມຜ່ານກ້າວຂຶ້ນສັງຄົມນິຍົມ ໂດຍບໍ່ຜ່ານໄລຍະການຂະຫຍາຍຕົວຂອງທຶນນິຍົມຢູ່ໃນປະເທດໄດ້ເນັ້ນໜັກວ່າ "ພັກຕ້ອງເອົາໃຈໃສ່ເປັນພິເສດໃນການຂະຫຍາຍຫັດຖະກຳ, ອຸດສາຫະກຳນ້ອຍເພາະວ່າການຂະຫຍາຍຫັດຖະກຳ ແລະ ອຸດສາຫະກຳນ້ອຍນັ້ນຮຽກຮ້ອງເຖິງການສະສົມອັນໃຫຍ່ໂຕຂອງລັດ, ແຕ່ມັນຊ້ຳພັດຕິດພັນແໜ້ນແຟ້ນກັບກະສິກຳຮັບໃຊ້ການຂະຫຍາຍກະສິກຳທັນໃດໂລດ, ພ້ອມກັນນັ້ນການຂະຫຍາຍຫັດຖະກຳ ແລະ ອຸດສາຫະກຳນ້ອຍ ກໍມີຄຸນປະໂຫຍດສ້າງສິນຄ້າໃຊ້ສອຍສິນຄ້າຂາອອກ ແລະ ສະສົມທຶນໃນການຫັນເປັນອຸດສາຫະກຳ.[3]

ໃນການຄຸ້ມຄອງວິສາຫະກິດຂະໜາດນ້ອຍ ແລະ ກາງພັກໄດ້ລະບຸໄວ້ "ຕ້ອງມີນະໂຍບາຍຄຸ້ມຄອງສົ່ງເສີມ ແລະ ຍົກລະດັບບັນດາບໍລິສັດຂອງປະເທດໃຫ້ມີຄວາມສາມາກ້າວຂຶ້ນສູ່ແວດວົງທຸລະກິດສາກົນເຄື່ອນໄຫວຢ່າງຄ່ອງຕົວ ແລະ ສາມາດແຂ່ງຂັນ ຫຼື ຮ່ວມມືກັບບໍລິສັດຕ່າງປະເທດໄດ້ຢ່າງເປັນເຈົ້າການ".[4] ພັກໄດ້ກຳນົດທັດສະນະ ແລະ ແຜນນະໂຍບາຍໃຫຍ່ຕໍ່ຂົງເຂດວຽກງານເສດຖະກິດໄວ້ວ່າຕ້ອງຕັ້ງໜ້າສົ່ງເສີມເສດຖະກິດຄອບຄົວ, ເສດຖະກິດທຳມະດາ, ເສດຖະກິດເປີດກວ້າງ ເພື່ອຍົກລາຍໄດ້ ແລະ ລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ພ້ອມໆກັບການລົງທຶນເປັນໂຄງການຕາມບໍລິເວນເຂດແຄ້ນທີ່ເປັນຈຸດສຸມເພື່ອຊ່ວຍໜູນເສດຖະກິດຄອບຄົວໃຫ້ຂະຫຍາຍຕົວ, ພ້ອມນັ້ນກໍ່ສ້າງການສະສົມທຶນຮອນຢ່າງເປັນເຈົ້າການໃນຂັ້ນຕໍ່ໄປ.[5] ພັກໄດ້ເນັ້ນໜັກຕໍ່ການຄຸ້ມຄອງວິສາຫະກິດຕ້ອງບຸກທະລຸໃນດ້ານ

---

[3] ເອກະສານກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ, ຄັ້ງທີ V, ສະໄໝທີ IV, ປີ 1998, ໜ້າ 49.

[4] ເອກະສານກອງປະຊຸມໃຫຍຄັ້ງທີ VII ຂອງພັກປະຊາຊົນປະຕິວັດລາວ, ປີ 2001, ໜ້າ 39.

[5] ເອກະສານກອງປະຊຸມໃຫຍຄັ້ງທີ VIII ຂອງພັກປະຊາຊົນປະຕິວັດລາວ, ປີ 2006, ໜ້າ 43.

ການແກ້ໄຂລະບອບລະບຽບການບໍລິຫານຄຸ້ມຄອງທີ່ກົດໜ່ວງອັດຕັນການຜະລິດທຸລະກິດ ແລະ ການບໍລິການໃຫ້ຕົກໄປຢ່າງຂາດຕົວ.[6]

ພັກ ໄດ້ອີງໃສ່ຄວາມຈໍາເປັນໃນການຄຸ້ມຄອງຕ້ອງໄດ້ ພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃຫ້ມີຄວາມຫາກຫຼາຍ ທາງດ້ານຮູບການກໍາມະສິດ, ການແຈກຢາຍ ແລະ ຫຼາຍຮູບແບບວິສາຫະກິດ, ຫຼາຍຂະແໜງການເສດຖະກິດ, ຫຼາຍຜະລິດຕະພັນ ແລະ ຫຼາຍສາຍພົວພັນທາງດ້ານການຄ້າ ແລະ ການຮ່ວມມືກັບຕ່າງປະເທດ, ເອົາໃຈໃສ່ສົ່ງເສີມ ແລະ ພັດທະນາວິສາຫະກິດໃນແຕ່ລະຂະໜາດ, ຫຼີກເວັ້ນການກະທໍາທີ່ເປັນການກົດໜ່ວງການຂະຫຍາຍຕົວທາງດ້ານເສດຖະກິດ ເພື່ອຮັບປະກັນສະຖຽນລະພາບ ແລະ ການຂະຫຍາຍຕົວຢ່າງຕໍ່ເນື່ອງຂອງເສດຖະກິດ, ຫຼຸດຜ່ອນຄວາມສ່ຽງ ແລະ ຄວາມບອບບາງຕໍ່ໄພພິບັດທາງທໍາມະຊາດທີ່ນັບມື້ນັບຮຸນແຮງຂຶ້ນ ແລະ ວິກິດການເສດຖະກິດໂລກທີ່ຄາດເດົາໄດ້ຍາກ.[7]

### 1.2 ນະໂຍບາຍຂອງລັດກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ

ເສດຖະກິດແຫ່ງຊາດ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນເສດຖະກິດຕະຫຼາດຕາມທິດສັງຄົມນິຍົມ ຊຶ່ງປະກອບດ້ວຍຫຼາຍພາກສ່ວນເສດຖະກິດ, ຫຼາຍຮູບການກໍາມະສິດທີ່ຄົງຕົວຢ່າງຍາວນານມີຄວາມສະເໝີພາບ, ທັງແກ່ງແຍ່ງແຂ່ງຂັນ ແລະ ຮ່ວມມືກັນພາຍໃຕ້ກົດໝາຍ, ສົ່ງເສີມເສດຖະກິດພູມປັນຍາ, ເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນເພື່ອຮັບປະກັນໃຫ້ເສດຖະກິດແຫ່ງຊາດມີການຂະຫຍາຍຕົວຢ່າງຕໍ່ເນື່ອງໝັ້ນທ່ຽງ, ມີຄວາມກົມກຽວກັບການພັດທະນາສັງຄົມ ແລະ ສິ່ງແວດລ້ອມຕາມທິດຍືນຍົງເພື່ອຍົກລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນໃຫ້ສູງຂຶ້ນ[8]. ລັດສົ່ງເສີມທຸກພາກສ່ວນເສດຖະກິດພາຍໃນປະເທດ ລົງທຶນເຂົ້າໃນການຜະລິດ, ທຸລະກິດ ແລະ ການບໍລິການ, ປະກອບສ່ວນເຂົ້າໃນການຫັນເປັນອຸດສາຫະກໍາ ແລະ ທັນສະໄໝ, ເຮັດໃຫ້ເສດຖະກິດແຫ່ງຊາດເຕີບໃຫຍ່ເຂັ້ມແຂງ[9]. ລັດ ເອົາໃຈໃສ່ສົ່ງເສີມສະຕິປັນຍາ, ຫົວຄິດປະດິດສ້າງໃນວຽກງານຄົ້ນຄວ້າ, ວິໄຈ ແລະ ການນໍາໃຊ້ວິທະຍາສາດ-ເຕັກໂນໂລຊີ, ນະວັດຕະກໍາ, ປົກປ້ອງຊັບສິນທາງປັນຍາ ໄປຄຽງຄູ່ກັບການບໍາລຸງ ແລະ ສ້າງນັກວິທະຍາສາດເພື່ອຊຸກຍູ້ການຫັນເປັນອຸດສາຫະກໍາ ແລະ ທັນສະໄໝ.[10]

---

[6]ເອກະສານກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກປະຊາຊົນປະຕິວັດລາວ, ປີ 2011, ໜ້າ 20.

[7]ເອກະສານກອງປະຊຸມໃຫຍ່ຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ, ປີ 2016, ໜ້າ 8.

[8]ລັດຖະທໍາມະນູນແຫ່ງສ ປປ ລາວ (ສະບັບປັບປຸງ), ປີ 2015, ມາດຕາ 13.

[9]ທາກໍອ້າງ, ມາດຕາ 14.

[10]ທາກໍອ້າງ, ມາດຕາ 24.

ລັດໄດ້ກຳນົດແນວທາງ ແລະ ລະບຽບກົດໝາຍກ່ຽວກັບການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງເພື່ອໃຫ້ເສດຖະກິດ-ສັງຄົມມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ລັດໄດ້ຊຸກຍູ້ສົ່ງເສີມການພັດທະນາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ແນ່ໃສ່ການສ້າງຄວາມອາດສາມາດໃນການແຂ່ງຂັນດ້ານການຜະລິດ, ການຄ້າ ແລະ ການບໍລິການ ດ້ວຍການສະໜັບສະໜູນທາງດ້ານທຶນຮອນ, ວິຊາການ, ເຕັກໂນໂລຊີ, ການຕະຫຼາດ, ການຄົ້ນຄ້ວາທາງດ້ານວິທະຍາສາດ ແລະ ອື່ນໆ[11]. ເພື່ອປະຕິບັດຕາມແຜນການທິດທາງຂອງລັດຖະບານກໍຄືການສູ້ຊົນເພື່ອໃຫ້ບັນລຸເປົ້າໝາຍການຫຼຸດພົ້ນອອກຈາກສະຖານະຄວາມດ້ອຍພັດທະນາແມ່ນຈຸດໝາຍລວມຂອງແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ເພື່ອບັນລຸບັນດາເງື່ອນໄຂໃນການຫຼຸດພົ້ນມັນຮຽກຮ້ອງໃຫ້ຕ້ອງບັນລຸບັນດາເງື່ອນໄຂຕ່າງໆ ເຊິ່ງໃນນັ້ນກໍໄດ້ກວມເອົາການຊຸກຍູ້ສົ່ງເສີມບັນດາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໄວ້ນຳເຊັ່ນ:

- ສ້າງວິສາຫະກິດຂະໜາດໃຫຍ່ໃຫ້ໄດ້ຈຳນວນໜຶ່ງເພື່ອເປັນຫົວຈັກແກ່ດຶງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ, ສ້າງໃຫ້ມີຄວາມສຳພັນລະຫວ່າງກັນ;
- ປັບປຸງຜະລິດຕະພາບຂອງພາກທຸລະກິດ, ວິສະຫາກິດຕ່າງໆທັງພາກລັດ ແລະ ເອກະຊົນ, ທັງພາຍໃນ ແລະ ຕ່າງປະເທດ, ໂດຍສະເພາະແມ່ນການສ້າງຜະລິດຕະພາບໃຫ້ສູງຂຶ້ນ, ນຳໃຊ້ເຕັກໂນໂລຊີທີ່ສະອາດ ແລະ ເໝາະສົມ, ໃຫ້ແທດເໝາະກັບສະພາບການພັດທະນາປະເທດຊາດ ແລະ ບັນດານະວັດຕະກຳໃໝ່ໆ, ກຳນົດມາດຕະຖານການຜະລິດຕະພັນ ແລະ ການບໍລິການເພື່ອຍົກສູງຜະລິດຕະພາບຂອງການຜະລິດສິນຄ້າ, ການເຂົ້າເຖິງຕະຫຼາດທັງພາຍໃນ ແລະ ຕ່າງປະເທດ, ການເພີ່ມມູນຄ່າໃຫ້ສິນຄ້າ;
- ປັບປຸງສະພາບແວດລ້ອມທີ່ເອື້ອຍອຳນວຍໃຫ້ແກ່ການສ້າງຕັ້ງ ແລະ ການດຳເນີນທຸລະກິດທີ່ຕິດພັນກັບລະບຽບກົດໝາຍ, ການເຂົ້າເຖິງແຫຼ່ງທຶນ, ແຮງງານທີ່ມີທັກສະ, ການເຂົ້າເຖິງການບໍລິການໃຫ້ຄຳປຶກສາໃນການພັດທະນາທຸລະກິດເພື່ອສ້າງ ແລະ ພັດທະນາຜູ້ປະກອບການໃຫ້ມີຄຸນນະພາບ, ການພັດທະນາພື້ນຖານໂຄງລ່າງທີ່ຄົບຊຸດເພື່ອສ້າງແຮງຈູງໃຈໃຫ້ແກ່ຜູ້ລົງທຶນມີຄວາມເຊື່ອໝັ້ນໃນການດຳເນີນທຸລະກິດ;
- ສົ່ງເສີມການເຂົ້າເຖິງແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໂດຍການສ້າງຕັ້ງໂຄງການສະໜັບສະໜູນແຫຼ່ງທຶນໄລຍະຍາວແກ່ທະນາຄານທຸລະກິດທີ່ສົນໃຈປ່ອຍກູ້ໃຫ້ແກ່ຕະຫຼາດວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ແລະ ສ້າງກອງທຶນເພື່ອຫຼຸດຜ່ອນຄວາມສ່ຽງເພື່ອຊຸກຍູ້ໃຫ້ທະນາຄານທຸລະກິດບໍລິການປ່ອຍເງິນກູ້ໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຫຼາຍຂຶ້ນ;

---

[11]ກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ, ສະບັບປີ 2011, ມາດຕາ 2 ແລະ ມາດຕາ 5

- ປັບປຸງການເຂົ້າເຖິງດ້ານການບໍລິການດ້ານການເງິນຂອງວິສາຫະກິດຢູ່ໃນເຂດຊົນນະບົດໂດຍການສົ່ງເສີມການບໍລິການທະນາຄານຜ່ານທາງໂທລະສັບມືຖື ແລະ ເອເລັກໂຕຣນິກໂດຍຕ້ອງສ້າງລະບຽບການຄຸ້ມຄອງທີ່ຮັດກຸມ;

- ປັບປຸງລະບົບອາກອນສຳລັບວິສະຫາກິດຂະໜາດນ້ອຍ ແລະ ຂະໜາດກາງ, ສ້າງຄູ່ມືແນະນຳລະອຽດສຳລັບລະບົບອາກອນແບບມອບເໝົາ, ສ້າງລະບົບບັນຊີທີ່ງ່າຍດາຍເພື່ອສ້າງເງື່ອນໄຂ ໃຫ້ບັນດາວິສະຫາກິດຂະໜາດນ້ອຍ ແລະ ຂະໜາດກາງຫັນມາຖືບັນຊີ ແລະ ເສຍອາກອນຢ່າງຖືກຕ້ອງ ແລະ ຄົບຖ້ວນ;

- ຕ້ອງຫັນປ່ຽນຮູບແບບພັດທະນາເສດຖະກິດຈາກທາງກ້ວາງໄປສູ່ທາງເລິກ, ຈາກເນັ້ນໜັກແຕ່ປະລິມານໄປສູ່ຄຸນນະພາບໂດຍຍົກສູງປະສິດທິຜົນການຜະລິດ, ການລົງທຶນການນຳໃຊ້ຊັບພະຍາກອນຢ່າງສົມເຫດສົມຜົນ, ສົ່ງເສີມການປະດິດສ້າງໃໝ່ ແລະ ການນຳໃຊ້ວິທະຍາສາດເຕັກໂນໂລຊີໃໝ່ທີ່ທັນສະໄໝທັງເປັນມິດກັບສິ່ງແວດລ້ອມ ແລະ ສັງຄົມ;

- ສ້າງປະຖົມປັດໃຈດ້ານທຶນຮອນ, ວັດຖຸເຕັກນິກ ແລະ ວິທະຍາສາດ, ຂໍ້ມູນຂ່າວສານ ແລະ ບຸກຄະລາກອນ, ຜູ້ປະກອບການ ແລະ ກຳລັງແຮງງານເພື່ອຮອງຮັບການພັດທະນາຕາມແຜນການທີ່ກຳນົດໄວ້;

- ປັບປຸງພື້ນຖານການຜະລິດໃຫ້ເຂັ້ມແຂງໂດຍການຊຸກຍູ້ສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ວິສະຫາກິດຂະໜາດນ້ອຍ ແລະ ຂະໜາດກາງ, ສຸມໃສ່ການຜະລິດສະບຽງອາຫານ ແລະ ການຜະລິດເປັນສິນຄ້າໃຫ້ມີຄຸນນະພາບສູງ ແລະ ມີຄວາມຫຼາກຫຼາຍ ເພື່ອຊົມໃຊ້ພາຍໃນ ແລະ ສົ່ງອອກມາດຕະການຈັດຕັ້ງປະຕິບັດ.[12]

### 1.3 ຫຼັກການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ

ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງແມ່ນຫົວໜ່ວຍທຸລະກິດທີ່ໄດ້ຂຶ້ນທະບຽນ ແລະ ເຄື່ອນໄຫວຢ່າງຖືກຕ້ອງຕາມກົດໝາຍຂອງສປປ ລາວ ຂະໜາດຂອງວິສາຫະກິດຂະ ໜາດນ້ອຍ ແລະ ຂະໜາດກາງແມ່ນໄດ້ກຳນົດແຕ່ລະຂະແໜງວິສາຫະກິດໂດຍຖືເອົາຈຳນວນແຮງງານສະເລ່ຍໃນປີ, ມູນຄ່າຊັບສິນທັງໝົດ ແລະ ລວມຍອດລາຍຮັບທຸລະກິດປະຈຳປີເປັນພື້ນຖານບ່ອນອີງ ສະນັ້ນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຕ້ອງປະຕິບັດຕາມຫຼັກການຕົ້ນຕໍ ດັ່ງນີ້

- ສອດຄ່ອງກັບນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມຂອງປະເທດ, ເຂດແຄວ້ນ, ຂະແໜງການ ແລະ ສອດຄ່ອງກັບເງື່ອນໄຂຂອງຂະແໜງວິສາຫະ

[12] ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020), ໜ້າ 91 ແລະ ໜ້າ 146.

ກິດຂະໜາດນ້ອຍ ແລະ ກາງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ;

- ຮັບປະກັນໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງໄດ້ຮັບການສ້າງຕັ້ງ, ດຳເນີນ ແລະ ພັດທະນາດ້ວຍຄວາມສະດວກ, ວ່ອງໄວ, ໂປ່ງໃສ ແລະ ຍຸຕິທຳ;
- ຮັບປະກັນການສ້າງວຽກເຮັດງານທຳ ແລະ ຍົກສູງຄຸນນະພາບຊີວິດຂອງປະຊາຊົນ;
- ຮັບຮູ້, ຮັບປະກັນການປົກປ້ອງກຳມະສິດ ແລະ ສິດຜົນປະໂຫຍດທີ່ຖືກຕ້ອງຕາມກົດໝາຍ ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ;
- ປົກປັກຮັກສາ ແລະ ຟື້ນຟູ ຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ແລະ ຮັບປະກັນຄວາມປອດໄພຂອງສັງຄົມ.[13]

### 1.4 ຫຼັກການກ່ຽວກັບການສ້າງຕັ້ງວິສາຫະກິດ

ວິສາຫະກິດແມ່ນການຈັດຕັ້ງທຸລະກິດຂອງບຸກຄົນ ຫຼື ນິຕິບຸກຄົນ ຊຶ່ງປະກອບດວ້ຍຊື່, ທຶນ, ການບໍລິຫານຈັດການ, ສຳນັກງານ ແລະ ໄດ້ຂຶ້ນທະບຽນວິສາຫະກິດຕາມກາກົດໝາຍ ແລະ ພົນລະເມືອງລາວ, ຊາວຕ່າງດ້າວ, ຄົນບໍ່ມີສັນຊາດທີ່ອາໄສ ຢູ່ ສປປ ລາວ ແລະ ຄົນຕ່າງປະເທດ ລວມທັງການຈັດຕັ້ງຂອງບຸກຄົນດັ່ງກ່າວ ລ້ວນແຕ່ມີສິດສ້າງຕັ້ງວິສາຫະກິດ ຫຼື ເຂົ້າຮ່ວມດຳເນີນທຸລະກິດ ໂດຍສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ. ທຸກພາກສ່ວນເສດຖະກິດທັງພາຍໃນ ແລະ ຕ່າງປະເທດລ້ວນແຕ່ມີຄວາມສະເໝີພາບຕໍ່ໜ້າກົດໝາຍໃນການດຳເນີນທຸລະກິດ, ທັງແຂ່ງຂັນ ແລະ ຮ່ວມມືກັນເພື່ອຂະຫຍາຍກຳລັງການຜະລິດ, ເປີດກວ້າງການຜະລິດ, ທຸລະກິດ ແລະ ການບໍລິການ. ວິສາຫະກິດມີພັນທະໃນການເຄື່ອນໄຫວທຸລະກິດຕາມວັດຖຸປະສົງຂອງຕົນ, ປະຕິບັດພັນທະຕໍ່ລັດ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ອອກແຮງງານ, ປົກປັກຮັກສາສິ່ງແວດລ້ອມ, ປະກອບສ່ວນໃນວຽກງານປ້ອງກັນຊາດ ປ້ອງກັນຄວາມສະຫງົບ ແລະ ເຄົາລົບລະບຽບກົດໝາຍ ອື່ນທີ່ກ່ຽວຂ້ອງຂອງ ສປປ ລາວ.[14]

### 1.5 ຫຼັກການກ່ຽວກັບວຽກງານການສົ່ງເສີມການລົງທຶນ

ການສົ່ງເສີມການລົງທຶນຕ້ອງປະຕິບັດຕາມຫລັກການ ດັ່ງນີ້:

---

[13]ກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ, ສະບັບປີ 2011, ມາດຕາ 2 ແລະ ມາດຕາ 6

[14]ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ), ປີ 2013, ມາດຕາ 4 ຫາ ມາດຕາ 6

- ສອດຄ່ອງກັບແນວທາງນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາຂະແໜງການ, ເຂດ ແລະ ການຂະຫຍາຍເສດຖະກິດ-ສັງຄົມໃນແຕ່ລະໄລຍະ, ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ແລະ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

- ສົມທົບແໜ້ນ ກັບການເພີ່ມທະວີການຄຸ້ມຄອງຂອງລັດຢ່າງລວມສູນເປັນເອກະພາບໃນທົ່ວປະເທດ;

- ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງລັດ, ລວມໝູ່, ປະຊາຊົນ ແລະ ຜູ້ລົງທຶນ;

- ຮັບປະກັນການບໍລິການການລົງທຶນປະຕູດຽວໃຫ້ສະດວກ, ກະທັດຮັດ, ວ່ອງໄວ, ໂປ່ງໃສ ມີປະສິດທິພາບ ແລະ ຖືກຕ້ອງຕາມກົດໝາຍ;

- ຮັບປະກັນການແຂ່ງຂັນທາງທຸລະກິດທີ່ເປັນທຳ;

- ຮັບປະກັນຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ເສີມຂະຫຍາຍວັດທະນະທຳອັນດີງາມຂອງຊາດ, ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນ ທຳມະຊາດ, ມີປະສິດທິຜົນຕາມທິດສີຂຽວ ແລະ ຍືນຍົງ.

### 1.6 ຫຼັກການກ່ຽວກັບວຽກງານພາສີ

ລັດສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຕ່າງໆທີ່ເຄື່ອນໄຫວກ່ຽວກັບການສົ່ງອອກ-ນຳເຂົ້າສິນຄ້າ, ເຄື່ອງຂອງປະກອບສວ່ນເສຍພັນທະໃຫ້ລັດແນໃສ່ພັດທະນາເສດຖະກິດ-ສັງຄົມຂອງຊາດເປັນຕົ້ນວຽກງານສຶກສາ, ສາທາລະນະສຸກໃຫ້ມີຄວາມເຂັ້ມແຂງ ແລະ ຂະຫຍາຍຕົວຕໍ່ເນື່ອງ, ສ້າງຄວາມເຂັ້ມແຂງໃຫ້ການປະຕິບັດໜ້າທີ່ຂອງລັດຖະການພາສີດ້ວຍການວາງນະໂຍບາຍ, ລະບຽບການ, ການປະກອບ ແລະ ພັດທະນາບຸກຄະລາກອນ, ການສະໜອງງົບປະມານໃນການກໍ່ສ້າງພື້ນຖານໂຄງລ່າງ, ພາຫະນະວັດຖຸອຸປະກອນທີ່ຈຳເປັນແກ່ການເຄື່ອນໄຫວວຽກງານພາສີ ໃນການເຄື່ອນໄຫວວຽກງານພາສີໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

- ຮັບປະກັນການຄຸ້ມຄອງຢ່າງລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ;

- ຮັບປະກັນການສົ່ງເສີມການຜະລິດ, ການດຳເນີນທຸລະກິດ ແລະ ການລົງທຶນໃຫ້ມີການຂະຫຍາຍຕົວ;

- ຮັບປະກັນຄວາມຍຸຕິທຳ, ທັນສະໄໝ, ໂປ່ງໃສ, ບໍລິການວ່ອງໄວ ແລະ ກວດສອບໄດ້;

- ອຳນວຍຄວາມສະດວກທາງດ້ານການຄ້າ ແລະ ສົ່ງເສີມການລົງທຶນ;

- ປະສານສົມທົບຢ່າງກົມກຽວລະຫວ່າງການຄຸ້ມຄອງຕາມສາຍຕັ້ງແລະສາຍຂວາງ;

- ປະຕິບັດພັນທະຕ່າງໆກ່ຽວກັບຂໍ້ຕົກລົງ, ສັນຍາ, ສົນທິສັນຍາ ຂອງພາກພື້ນ ແລະ ສາກົນທີ່ ສປປ ລາວເປັນພາຄີ.[15]

### 1.7 ຫຼັກການກ່ຽວກັບວຽກງານສ່ວຍສາອາກອນ

ລັດມີນະໂຍບາຍສົ່ງເສີມພິເສດທາງດ້ານອາກອນຕໍ່ຂະແໜງການລົງທຶນ, ບາງກິດຈະການສາທາລະປະໂຫຍດ ແລະ ສາທາລະນຸປະໂພກໃນເຂດທ່າງໄກສອກຫຼີກ ແລະ ເຂດທຸລະກັນດານໃດໜຶ່ງຂອງທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ເພື່ອພັດທະນາພື້ນຖານເສດຖະກິດໂຄງລ່າງ, ລວມທັງວຽກງານການສຶກສາ, ສາທາລະນະສຸກ, ວັດທະນະທຳ-ເສດຖະກິດ-ສັງຄົມ, ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃນການເຄື່ອນໄຫວວຽກງານສ່ວຍສາອາກອນໃຫ້ປະຕິບັດຕາມຫຼັກການຕົ້ນຕໍ ດັ່ງນີ້

- ຮັບປະກັນການຄຸ້ມຄອງ ລວມສູນຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ;
- ຮັບປະກັນການຊຸກຍູ້ສົ່ງເສີມການຜະລິດທຸລະກິດ ແລະ ການລົງທຶນໃຫ້ມີການຂະຫຍາຍຕົວ;
- ຮັບປະກັນໃຫ້ມີຄວາມຍຸຕິທຳ, ໂປ່ງໃສ, ວ່ອງໄວ, ຖືກຕ້ອງ, ຄົບຖ້ວນ ແລະ ສາມາດກວດສອບໄດ້;
- ອຳນວຍຄວາມສະດວກດ້ານຕ່າງໆ ໃຫ້ຜູ້ເສັຍອາກອນ;
- ປະສານສົມທົບຢ່າງກົມກຽວລະຫວ່າງການຄຸ້ມຄອງຕາມສາຍຕັ້ງ ແລະ ສາຍຂວາງ.[16]

## 2. ຄວາມຮັບຮູ້ທົ່ວໄປກ່ຽວກັບວິສະຫະກິດຂະໜາດນ້ອຍ ແລະ ຂະໜາດກາງ

### 2.1 ຄວາມສຳຄັນຂອງ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ

ວິສາຫະກິດຂະໜາດນ້ອຍ ແລະ ກາງ ມີຄວາມສຳຄັນໃນການສ້າງວຽກເຮັດງານທຳຍ້ອນວ່າມັນເປັນຫົວໜ່ວຍທຸລະກິດທີ່ນຳໃຊ້ແຮງງານຄົນເປັນຕົ້ນຕໍ ແລະ ແຮງງານທີ່ຍັງບໍ່ທັນມີວິຊາຊີບກໍສາມາດເຂົ້າມາເຮັດວຽກງານນີ້ໄດ້ ແລະ ທັງເປັນບ່ອນຮອງຮັບແຮງງານຢູ່ໃນເຂດຊົນນະບົດທີ່ນັບມື້ນັບຫຼັ່ງໄຫຼເຂົ້າມາສູ່ຕົວເມືອງ ພ້ອມດຽວກັນນີ້ ວິສາຫະກິດຂະໜາດນ້ອຍ ແລະ ກາງຍັງກໍ່ເກີດມີຮູບຖານການຜະລິດອຸດສາຫະກຳກະຈາຍໄປທົ່ວທຸກເຂດແຄ້ວນ, ປະກອບສ່ວນໃນການຫຼຸດຜ່ອນຄວາມແຕກໂຕນລະຫວ່າງຂົງເຂດຕ່າງໆ ແລະ ຫັນປ່ຽນໂຄງປະກອບເສດຖະກິດໃຫ້ໄປຕາມທິດຫັນເປັນອຸດສາຫະກຳ ແລະ ຫັນເປັນທັນສະໄໝ ພ້ອມທັງ

---

[15] ກົດໝາຍວ່າດ້ວຍພາສີ (ສະບັບປັບປຸງ), ປີ 2011, ມາດຕາ 2, 5

[16] ກົດໝາຍວ່າດ້ວຍສ່ວຍສາອາກອນ (ສະບັບປັບປຸງ), ປີ 2015, ມາດຕາ 2 ແລະ ມາດຕາ 5

ມີການຂະຫຍາຍຕົວກະຕຸກຊຸກຍູ້ໃຫ້ຂະບວນວິສາຫະກິດຂະໜາດນ້ອຍ ແລະ ກາງ ທັນເປັນວິຊາສະເພາະຢູ່ໃນຫຼາຍໆຂະແໜງການເກີດຂຶ້ນປະກອບສ່ວນດັດສົມ ແລະ ຂະຫຍາຍຫັດຖະກຳ, ຮັກສາຄຸນຄ່າວັດທະນະທຳຂອງຊາດ. ພ້ອມກັນນັ້ນ ວິສາຫະກິດຂະໜາດນ້ອຍ ແລະ ກາງກໍຍັງໄດ້ສ້າງເງື່ອນໄຂອົບຮົມ ແລະ ກໍ່ສ້າງຜູ້ປະກອບກິດຈະການໃໝ່ທີ່ເໝາະສົມທັງຕອບສະໜອງຄວາມຕ້ອງການຂອງເສດກິດຕະຫຼາດ. ນອກຈາກນັ້ນຍັງເປັນກຳລັງແຮງຕົ້ນຕໍໃນການປະຕິບັດແຜນຍຸດທະສາດພັດທະນາເສດຖະກິດ-ສັງຄົມ, ປະຕິບັດແຜນຍຸດທະສາດຜະລິດເປັນສິນຄ້າ ເພື່ອເຮັດໃຫ້ປະເທດຊາດຫຼຸດພົ້ນອອກຈາກກຸ່ມບັນດາປະເທດດ້ອຍພັດທະນາ ໂດຍຫຼຸດຜ່ອນຄວາມທຸກຈົນ, ບັນລຸການເຕີບໂຕທາງດ້ານເສດຖະກິດ”[17].

ສະນັ້ນ ວິສາຫະກິດຂະໜາດນ້ອຍ ແລະ ກາງ ຈຶ່ງເປັນພາກສ່ວນໜຶ່ງທີ່ສຳຄັນໃນການຂັບເຄື່ອນເສດຖະກິດແຫ່ງຊາດມີຄວາມສາມາດເຊື່ອມຕົວເຂົ້າຮ່ວມການຜະລິດ ແລະ ແລກປ່ຽນສິນຄ້າຢູ່ໃນພາກພື້ນ ແລະ ສາກົນ ສາມາດດຳເນີນທຸລະກິດພາຍໃຕ້ສະພາບແວດລ້ອມທີ່ເອື້ອອຳນວຍ ແລະ ມີກົນໄກສະໜັບສະໜູນຢ່າງມີປະສິດທິພາບ.

## 2.2 ປະເພດຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ

ວິສາຫະກິດຂະໜາດນ້ອຍ ແລະ ກາງ ອອກເປັນ 3 ປະເພດຄື:

**1. ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດຳເນີນການຜະລິດສິນຄ້າ.**

ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດຳເນີນການຜະລິດສິນຄ້າ ແມ່ນຂະແໜງວິສາຫະກິດ ທີ່ເຄື່ອນໄຫວທຸລະກິດໃນຂົງເຂດອຸດສາຫະກຳປຸງແຕ່ງ, ຫັດຖະກຳ ແລະ ການຜະລິດກະສິກຳເພື່ອເປັນສິນຄ້າ.[18]

**2. ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດຳເນີນການຄ້າ**

ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດຳເນີນການຄ້າ ແມ່ນຂະແໜງວິສາຫະກິດທີ່ເຄື່ອນໄຫວທຸລະກິດໃນຂົງເຂດການຄ້າຂາຍຍົກ ແລະ ຂາຍຍ່ອຍ.[19]

**3. ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດຳເນີນການບໍລິການ**

ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດຳເນີນການບໍລິການ ແມ່ນຂະແໜງວິສາຫະກິດທີ່ເຄື່ອນໄຫວທຸລະກິດໃນຂົງເຂດການບໍລິການດ້ານການທ່ອງທ່ຽວ, ຄົມມະນາຄົມ-

---

[17]ຍອດຊາຍ ດາລາສັກ, ນະໂຍບາຍ ແລະ ກົດໝາຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຂອງ ສປປ ລາວ ເພື່ອຮອງຮັບປະຊາຄົມເສດຖະກິດອາຊຽນ, ວິທະຍານິພົນປະລິຍາມະຫາບັນດິດ, ສາຂາວິຊາ ນິຕິເສດຖະສາດການຄ້າລະຫວ່າງປະເທດ, ມະຫາວິທະຍາໄລທຳມະສາດ, ປີ 2014, ໜ້າ 46. (ສະບັບພາສາໄທ)

[18]ກົດໝາຍວ່າດ້ວຍການສົ່ງເສີມວິສະຫາກິດຂະໜາດນ້ອຍ ແລະ ກາງ, ສະບັບປີ 2011, ມາດຕາ 10.

[19]ຫາກໍອ້າງ, ມາດຕາ 11.

ຂົນສົ່ງ, ທະນາຄານ-ການເງິນ, ການສຶກສາ, ສາທາລະນະສຸກ ແລະ ການບໍລິການອື່ນ ທີ່ບໍ່ຂັດກັບກົດໝາຍ.[20]

**2.3 ການຈັດແບ່ງຂະໜາດຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ**

ໃນປັດຈຸບັນ ລັດຖະບານໄດ້ອອກດຳລັດ ກ່ຽວກັບການຈັດແບ່ງຂະໜາດວິສາຫະກິດໜາດນ້ອຍ ແລະ ຂະໜາດກາງ ຊຶ່ງໄດ້ມີການຈັດແບ່ງອອກເປັນ 3 ຂະໜາດດັ່ງນີ້:

**1. ຈຸນລະວິສາຫະກິດ**

ແມ່ນວິສາຫະກິດຂະໜາດນ້ອຍສຸດທີ່ມີເງື່ອນໄຂໃດໜຶ່ງລຸ່ມນີ້: [21]

| ຂະແໜງວິສາຫະກິດ | ແຮງງານສະເລ່ຍໃນປີ | ມູນຄ່າຊັບສິນທັງໝົດ (ກີບ) | ຍອດລາຍຮັບທຸລະກິດປະຈຳປີ |
|---|---|---|---|
| ການຜະລິດສິນຄ້າ | 1-5 ຄົນ | ບໍ່ເກີນ 100.000.000 | ບໍ່ເກີນ 400.000.000 |
| ການຄ້າ | 1-5 ຄົນ | ບໍ່ເກີນ 150.000.000 | ບໍ່ເກີນ 400.000.000 |
| ການບໍລິການ | 1-5 ຄົນ | ບໍ່ເກີນ 200.000.000 | ບໍ່ເກີນ 400.000.000 |

**2. ວິສາຫະກິດໜາດນ້ອຍ**

ມີເງື່ອນໄຂໃດທີ່ໜຶ່ງລຸ່ມນີ້[22]

| ຂະແໜງວິສາຫະກິດ | ແຮງງານສະເລ່ຍໃນປີ | ມູນຄ່າຊັບສິນທັງໝົດ(ກີບ) | ຍອດລາຍຮັບທຸລະກິດປະຈຳປີ |
|---|---|---|---|
| ການຜະລິດສິນຄ້າ | 6-50 ຄົນ | ບໍ່ເກີນ 1.000.000.000 | ບໍ່ເກີນ 2.000.000.000 |
| ການຄ້າ | 6-50 ຄົນ | ບໍ່ເກີນ 1.000.000.000 | ບໍ່ເກີນ 3.000.000.000 |
| ການບໍລິການ | 6-50 ຄົນ | ບໍ່ເກີນ 1.500.000.000 | ບໍ່ເກີນ 1.500.000.000 |

---

[20]ກົດໝາຍວ່າດ້ວຍການສົ່ງເສີມວິສະຫາກິດຂະໜາດນ້ອຍ ແລະ ຂະໜາດກາງ, ສະບັບປີ 2011, ມາດຕາ 12

[21]ດຳລັດ ວ່າດ້ວຍການຈັດແບ່ງຂະໜາດວິສະຫາກິດຂະໜາດນ້ອຍ ແລະ ກາງ, ສະບັບເລກທີ 25/ລບ, ລົງວັນທີ 16 ມັງກອນ 2017, ມາດຕາ 4

[22]ທາກໍອ້າງ, ມາດຕາ 5

3. **ວິສາຫະກິດໜາດກາງ**

ມີເງື່ອນໄຂໃດໜຶ່ງລຸ່ມນີ້[23]

| **ຂະແໜງວິສາຫະກິດ** | **ແຮງງານສະເລ່ຍໃນປີ** | **ມູນຄ່າຊັບສິນທັງໝົດ(ກີບ)** | **ຍອດລາຍຮັບທຸລະກິດປະຈຳປີ** |
|---|---|---|---|
| ການຜະລິດສິນຄ້າ | 51-99 ຄົນ | ບໍ່ເກີນ 4.000.000.000 | ບໍ່ເກີນ 4.000.000.000 |
| ການຄ້າ | 51-99 ຄົນ | ບໍ່ເກີນ 4.000.000.000 | ບໍ່ເກີນ 6.000.000.000 |
| ການບໍລິການ | 51-99 ຄົນ | ບໍ່ເກີນ 6.000.000.000 | ບໍ່ເກີນ 4.000.000.000 |

ກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ກຳນົດວິສາຫະກິດຂະໜາດນ້ອຍ ແລະ ກາງ ແມ່ນຫົວໜ່ວຍທຸລກິດທີ່ໄດ້ຂຶ້ນທະບຽນ ແລະ ເຄື່ອນໄຫວຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ, ຂະໜາດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ກຳນົດແຕ່ລະຂະແໜງທຸລະກິດ ໂດຍຖືເອົາແຮງງານສະເລ່ຍໃນປີ, ມູນຄ່າຊັບສິນທັງໝົດ ແລະ ລວມຍອດລາຍຮັບທຸລະກິດປະຈຳປີເປັນພື້ນຖານບ່ອນອີງ.

### 2.4 ມາດຕະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ

ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງປະກອບດ້ວຍກິດຈະການຕົ້ນຕໍດັ່ງນີ້:

1. **ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ**

ລັດ ເອົາໃຈໃສ່ຕໍ່ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການສ້າງຕັ້ງ ແລະ ດຳເນີນທຸລະກິດຂອງ ວນກ ໂດຍເນັ້ນໃສ່ການສ້າງ ແລະ ປັບປຸງລະບຽບກົດໝາຍໃຫ້ມີຄວາມຈະແຈ້ງ ແລະ ຮັດກຸມ, ກຳນົດວິທີການແກ້ໄຂບັນຫາທີ່ເປັນການກົດໜ່ວງ ພ້ອມກັນນັ້ນ ກໍຕ້ອງເພີ່ມທະວີການບໍລິຫານ ແລະ ການບໍລິການຂອງລັດໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ໂປ່ງໃສ.[24]

2. **ການເຂົ້າເຖິງແຫລ່ງທຶນ**

ລັດ ອຳນວຍຄວາມສະດວກໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງສາມາດເຂົ້າເຖິງແຫຼ່ງທຶນ ດ້ວຍການສ້າງລະບຽບການ, ມາດຕະການດ້ານການເງິນ ແລະ ນະໂຍບາຍສິນເຊື່ອ.

---

[23]ດຳລັດ ວ່າດ້ວຍການຈັດແບ່ງຂະໜາດວິສະຫາກິດຂະໜາດນ້ອຍ ແລະ ກາງ, ສະບັບເລກທີ 25/ລບ, ລົງວັນທີ 16 ມັງກອນ 2017, ມາດຕາ 6.

[24]ກົດໝາຍການວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ, ສະບັບປີ 2011, ມາດຕາ 14.

ລັດ ມີນະໂຍບາຍສະໜອງທຶນໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ເພື່ອເປັນສິນເຊື່ອໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນອັດຕາດອກເບ້ຍ ແລະ ກຳນົດເວລາທີ່ເໝາະສົມ ຫຼື ອະນຸຍາດໃຫ້ສ້າງຕັ້ງທະນາຄານວິສາຫະກິດຂະໜາດນ້ອຍ ແລະ ກາງ ເປັນການສະເພາະ.

ທະນາຄານແຫ່ງ ສປປ ລາວ ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ສ້າງກົນໄກ, ປັບປຸງໂຄງສ້າງດ້ານສິນເຊື່ອ ແລະ ອອກຜະລິດຕະພັນດ້ານການເງິນຫຼາຍປະເພດໃນການສະໜອງສິນເຊື່ອ, ການຄ້ຳປະກັນສິນເຊື່ອ, ການເຊົ່າສິນເຊື່ອ, ການຮ່ວມລົງທຶນ ແລະ ອື່ນໆ ເພື່ອຮັບປະກັນໃຫ້ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ສາມາດເຂົ້າເຖິງແຫຼ່ງທຶນໄດ້ຢ່າງງ່າຍດາຍກວ້າງຂວາງ ແລະ ທົ່ວເຖິງ.

ກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການຮ່ວມກັນກຳນົດຫຼັກການ, ລະບຽບການ ແລະ ວິທີການລະອຽດກ່ຽວກັບການສົ່ງເສີມການເຂົ້າເຖິງແຫຼ່ງທຶນສຳລັບວິສາຫະກິດຂະໜາດນ້ອຍ ແລະ ກາງ.[25]

### 3. ນະໂຍບາຍດ້ານພາສີ ແລະ ອາກອນ

ນະໂຍບາຍດ້ານພາສີ ແລະ ອາກອນ ແກ່ ວນກ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍພາສີ ແລະ ກົດໝາຍວ່າດ້ວຍສ່ວຍສາອາກອນ. ໃນກໍລະນີພິເສດເປັນຕົ້ນການສ້າງວຽກເຮັດງານທຳໃຫ້ຜູ້ດ້ອຍໂອກາດ, ຜູ້ທຸກຍາກ, ການປົກປັກຮັກສາ ແລະ ຟື້ນຟູສິ່ງແວດລ້ອມ, ການເສີມຂະຫຍາຍຫົວຄິດປະດິດສ້າງ ແລະ ພູມປັນຍາຈະໄດ້ຮັບນະໂຍບາຍຍົກເວັ້ນ ຫຼື ຫຼຸດຜ່ອນດ້ານພາສີ ແລະ ອາກອນ ທີ່ ລັດຖະບານ ສະເໜີຕໍ່ສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດ ພິຈາລະນາຕົກລົງ.[26]

### 4. ການສ້າງ ແລະ ພັດທະນາຜູ້ປະກອບກິດຈະການ

ລັດ ຊຸກຍູ້ ແລະ ອຳນວຍຄວາມສະດວກໃຫ້ພາກສ່ວນຕ່າງໆເຂົ້າຮ່ວມໃນການສ້າງ ແລະ ພັດທະນາຜູ້ປະກອບກິດຈະການ ໂດຍສະເພາະແມ່ນຜູ້ປະກອບກິດຈະການເພດຍິງດ້ວຍຮູບການຕ່າງໆ ເປັນຕົ້ນການຝຶກອົບຮົມ, ການສ້າງສູນກໍ່ສ້າງຜູ້ປະກອບກິດຈະການ, ການດຳເນີນທຸລະກິດຕົວແທນ.

ລັດ ເອົາໃຈໃສ່ຕໍ່ການສ້າງ, ພັດທະນາ ແລະ ບັນຈຸຫຼັກສູດກ່ຽວກັບການປະກອບກິດຈະການເຂົ້າໃນລະບົບການສຶກສາແຫ່ງຊາດ ແລະ ສ້າງລະບົບການຍ້ອງຍໍຜູ້ປະກອບກິດຈະການ.[27]

---

[25]ກົດໝາຍວ່າດ້ວຍການສົ່ງເສີມວິສະຫາກິດຂະໜາດນ້ອຍ ແລະ ກາງ, ສະບັບປີ 2011, ມາດຕາ 15.

[26]ຫາກໍອ້າງ, ມາດຕາ 16.

[27]ຫາກໍອ້າງ, ມາດຕາ 17.

**5. ການບໍລິການໃຫ້ຄຳປຶກສາ ພັດທະນາທຸລະກິດ**

ລັດ ສ້າງເງື່ອນໄຂ, ອຳນວຍຄວາມສະດວກ, ຊຸກຍູ້ ແລະ ສົ່ງເສີມພາກສ່ວນຕ່າງໆ ເຄື່ອນໄຫວເຮັດການບໍລິການໃຫ້ຄຳປຶກສາ ພັດທະນາທຸລະກິດດ້ວຍການສ້າງຕັ້ງໜ່ວຍງານ ຫຼື ວິສາຫະກິດບໍລິການໃຫ້ຄຳປຶກສາດ້ານລະບຽບກົດໝາຍ ແລະ ດ້ານວິຊາການຕ່າງໆ, ການສ້າງເຄືອຂ່າຍຂອງຜູ້ຊ່ຽວຊານດ້ານຕ່າງໆ ເຊັ່ນ ດ້ານການຕະຫຼາດ, ການພັດທະນາຜະລິດຕະພັນ, ການບໍລິຫານ ແລະ ອື່ນໆ.

ລັດ ສະໜັບສະໜູນທາງດ້ານທຶນຮອນຕາມເງື່ອນໄຂຕົວຈິງໃຫ້ແກ່ ວນກ ເພື່ອເຂົ້າເຖິງການບໍລິການໃຫ້ຄຳປຶກສາ ພັດທະນາທຸລະກິດ.[28]

**6. ການຮ່ວມມືທຸລະກິດ ລະຫວ່າງ ວິສາຫະກິດຂະໜາດນ້ອຍ ແລະ ກາງ ກັບວິສາຫະກິດຂະໜາດໃຫຍ່ ແລະ ວິສາຫະກິດການລົງທຶນຂອງຕ່າງປະເທດ**

ລັດ ສົ່ງເສີມການຮ່ວມມືລະຫວ່າງ ວນກ ກັບວິສາຫະກິດຂະໜາດໃຫຍ່ ແລະ ວິສາຫະກິດການລົງທຶນຂອງຕ່າງປະເທດ ດ້ວຍການສ້າງນະໂຍບາຍ ແລະ ກົນໄກທີ່ເອື້ອອຳນວຍ ພ້ອມທັງກຳນົດລະບຽບການ ແລະ ມາດຕະການທີ່ຈຳເປັນ.

ວິສາຫະກິດຂະໜາດໃຫຍ່ ແລະ ວິສາຫະກິດການລົງທຶນຂອງຕ່າງປະເທດຕ້ອງໃຫ້ໂອກາດແກ່ ວນກ ເປັນຜູ້ສະໜອງວັດຖຸດິບ, ວັດຖຸເຄິ່ງສຳເລັດຮູບ, ສິນຄ້າ ແລະ ການບໍລິການ ລວມທັງການຮັບເໝົາຕໍ່ຊ່ວງ ພ້ອມທັງສ້າງຄວາມເຂັ້ມແຂງໃຫ້ແກ່ ວນກ ໂດຍການຖ່າຍທອດເຕັກໂນໂລຊີ ແລະ ຄວາມຮູ້ຄວາມສາມາດທາງດ້ານການບໍລິຫານ.

ວນກ ຕ້ອງໄດ້ປັບປຸງຄວາມສາມາດບໍລິຫານຈັດການ ແລະ ພັດທະນາເຕັກໂນໂລຊີໃນການຜະລິດເພື່ອຮັບປະກັນການສະໜອງສິນຄ້າ ແລະ ການບໍລິການໃຫ້ມີຄຸນນະພາບ ແລະ ປະລິມານ ໂດຍສອດຄ່ອງກັບຄວາມຕ້ອງການຂອງວິສາຫະກິດຂະໜາດໃຫຍ່ ແລະ ວິສາຫະກິດການລົງທຶນຂອງຕ່າງປະເທດ.[29]

**7. ການເພີ່ມຜະລິດຕະພາບ**

ລັດ ສົ່ງເສີມການເພີ່ມຜະລິດຕະພາບ ເພື່ອຍົກສູງຄວາມສາມາດໃນການແຂ່ງຂັນ ແລະ ການພັດທະນາແບບຍືນຍົງຂອງ ວນກ ດ້ວຍການປັບປ່ຽນແບບແຜນວິທີເຮັດວຽກ ແລະ ສະຕິການອອກແຮງງານໄປສູ່ຮູບແບບອຸດສາຫະກຳ ແລະ ມີລັກສະນະປະດິດສ້າງ.

ລັດ ສະໜັບສະໜູນໂຄງການຕ່າງໆ ກ່ຽວກັບການຍົກສູງປະສິດທິພາບ ແລະ ປະສິດທິຜົນຂອງການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ ທັງໃນພາກລັດ ແລະ ພາກທຸລະກິດ ເຊັ່ນ ການບຳລຸງຍົກລະດັບຜູ້ປະກອບກິດຈະການ, ການພັດທະນາສີມືແຮງງານ,

---

[28]ກົດໝາຍວ່າດ້ວຍການສົ່ງເສີມວິສະຫາກິດຂະໜາດນ້ອຍ ແລະ ກາງ, ສະບັບປີ 2011, ມາດຕາ 18.

[29]ທາກໍອ້າງ, ມາດຕາ 19.

ການຍົກລະດັບ ແລະ ການນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າ, ການປັບປຸງຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ແລະ ການບໍລິການ.[30]

**8. ການເຂົ້າເຖິງ ແລະ ການຂະຫຍາຍຕະຫຼາດ**

ລັດ ຊຸກຍູ້ ແລະ ສົ່ງເສີມພາກສ່ວນຕ່າງໆ ໃຫ້ການສະໜັບສະໜູນ ວນກ ເພື່ອໃຫ້ສາມາດເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ ດ້ວຍການຈັດງານວາງສະແດງສິນຄ້າ ແລະ ການບໍລິການ, ການໂຄສະນາສິນຄ້າ, ການສຶກສາກ່ຽວກັບຕະຫຼາດ, ການແນະນຳຜະລິດຕະພັນ ແລະ ເຂົ້າຮ່ວມງານວາງສະແດງສິນຄ້າທັງພາຍໃນ ແລະ ຕ່າງປະເທດ, ການຈັບຄູ່ທຸລະກິດ ແລະ ການຮ່ວມລົງທຶນ ເພື່ອຂະຫຍາຍຕະຫຼາດ.

ລັດ ສ້າງເງື່ອນໄຂ ແລະ ໃຫ້ໂອກາດແກ່ ວນກ ເປັນຜູ້ສະໜອງສິນຄ້າ ແລະ ການບໍລິການ ໃນໂຄງ ການຈັດຊື້ດ້ວຍງົບປະມານຂອງລັດ.[31]

**9. ການຮ່ວມກຸ່ມທຸລະກິດ**

ລັດ ສົ່ງເສີມການຮ່ວມກຸ່ມທຸລະກິດຂອງ ວນກ ຕາມລະບຽບກົດໝາຍ ເພື່ອສ້າງເງື່ອນໄຂໃຫ້ວິສາຫະກິດດັ່ງກ່າວໄດ້ຮ່ວມມື ແລະ ຊ່ວຍເຫຼືອຊຶ່ງກັນ ແລະ ກັນ ເປັນຕົ້ນ ການນຳໃຊ້ເຄື່ອງມືການຜະລິດ ແລະ ສິ່ງອຳນວຍຄວາມສະດວກຮ່ວມກັນ ເພື່ອຫຼຸດຜ່ອນຕົ້ນທຶນການຜະລິດ ແລະ ການບໍລິການພ້ອມທັງ ເພີ່ມຄວາມສາມາດໃນການສະໜອງສິນຄ້າ ແລະ ການບໍລິການ ຕາມຄວາມຕ້ອງການຂອງຕະຫຼາດ.[32]

**10. ສະຖານທີ່ປະກອບກິດຈະການ**

ລັດ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ຜູ້ປະກອບກິດຈະການ ວນກ ໄດ້ເຂົ້າເຖິງສະຖານທີ່ປະກອບກິດຈະການທີ່ໝັ້ນຄົງ ໃນການດຳເນີນທຸລະກິດດ້ານການຜະລິດ, ການຄ້າ ແລະ ການບໍລິການ.

ຂະແໜງການອຸດສາຫະກຳ ແລະ ການຄ້າ ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສ້າງແຜນກຳນົດສະຖານທີ່ປະກອບກິດຈະການທັງໄລຍະສັ້ນ ແລະ ໄລຍະຍາວ.[33]

**11. ການສົ່ງເສີມການນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າ**

ລັດ ສົ່ງເສີມ ວນກ ໃຫ້ມີການນຳໃຊ້ຜົນສຳເລັດດ້ານເຕັກນິກ-ເຕັກໂນໂລຊີ ທີ່ກ້າວໜ້າເຂົ້າໃນການຜະລິດ, ການຄ້າ ແລະ ການບໍລິການ.

---

[30]ກົດໝາຍວ່າດ້ວຍການສົ່ງເສີມວິສະຫາກິດຂະໜາດນ້ອຍ ແລະ ກາງ, ສະບັບປີ 2011, ມາດຕາ 20.

[31]ຫາກໍອ້າງ, ມາດຕາ 21.

[32]ຫາກໍອ້າງ, ມາດຕາ 22.

[33]ຫາກໍອ້າງ, ມາດຕາ 23.

ລັດ ສະໜັບສະໜູນທຶນຮອນ ແລະ ຊຸກຍູ້ໃຫ້ສະຖາບັນຄົ້ນຄວ້າ ແລະ ສະຖາບັນການສຶກສາດໍາເນີນການຄົ້ນຄວ້າ ແລະ ພັດທະນາເຕັກໂນໂລຊີເພື່ອໃຫ້ ວນກ ນໍາໃຊ້ເຂົ້າໃນການດໍາເນີນການຜະລິດທຸລະກິດ.[34]

**12. ການນໍາໃຊ້ ແລະ ການປົກປ້ອງຊັບສິນທາງປັນຍາ**

ລັດ ສົ່ງເສີມ ແລະ ສ້າງເງື່ອນໄຂສະດວກໃຫ້ ວນກ ປະດິດສ້າງ, ປະດິດຄິດແຕ່ງ, ສ້າງເສດຖະກິດພູມປັນຍາ ແລະ ນໍາໃຊ້ຊັບສິນທາງປັນຍາ ພ້ອມກັນນັ້ນກໍເອື້ອອໍານວຍໃຫ້ແກ່ ວນກ ໃນການຈົດທະບຽນ, ຄຸ້ມຄອງ ແລະ ປົກປ້ອງສິດຕໍ່ຊັບສິນທາງປັນຍາ.[35]

**13. ການສະໜອງ ແລະ ການເຂົ້າເຖິງ ຂໍ້ມູນຂ່າວສານ**

ລັດ ສົ່ງເສີມການສະໜອງ ແລະ ການເຂົ້າເຖິງຂໍ້ມູນຂ່າວສານໃຫ້ແກ່ ວນກ ດ້ວຍການສ້າງສູນຂໍ້ມູນຂ່າວສານ ເພື່ອເກັບກໍາ ແລະ ສັງລວມຂໍ້ມູນກ່ຽວກັບການສົ່ງເສີມ ວນກ ແລະ ສ້າງເຄືອຂ່າຍການສະໜອງ ແລະ ແລກປ່ຽນຂໍ້ມູນຂ່າວສານເປັນຕົ້ນ ຮູບແບບເອເລັກໂຕຣນິກ, ປຶ້ມຄູ່ມື, ວາລະສານ, ແຜ່ນພັບໂຄສະນາ, ສື່ມວນຊົນ ແລະ ອື່ນໆ ພ້ອມກັນນັ້ນກໍສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກໃຫ້ ວນກ ໄດ້ເຂົ້າເຖິງຂໍ້ມູນຂ່າວສານຢ່າງງ່າຍດາຍ ແລະ ທັນການ.

ລັດ ຊຸກຍູ້ຂະແໜງການ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງທັງພາກລັດ ແລະ ເອກະຊົນໃຫ້ເຂົ້າຮ່ວມໃນການສະໜອງຂໍ້ມູນຂ່າວສານແກ່ ວນກ.[36]

## 2.5 ອົງການຄຸ້ມຄອງ ແລະ ກວດກາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ

### 2.5.1 ອົງການຄຸ້ມຄອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ

**1) ອົງການຄຸ້ມຄອງຢູ່ຂັ້ນສູນກາງ, ກະຊວງອຸດສາຫະກໍາ ແລະ ການຄ້າ**

ອົງການທີ່ມີສິດອໍານາດໃນການຄຸ້ມຄອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຢູ່ຂັ້ນສູນກາງແມ່ນ ກະຊວງອຸດສາຫະກໍາ ແລະ ການຄ້າໂດຍມີກົມສົ່ງເສີມວິສາຫະກິດຂະ ໜາດນ້ອຍ ແລະ ຂະໜາດກາງເປັນໃຈກາງເຊິ່ງມີສິດ ແລະ ໜ້າທີ່ດັ່ງນີ້:

- ຄົ້ນຄ້ວາສ້າງ, ປັບປຸງນະໂຍບາຍ, ຍຸດທະສາດ, ແຜນພັດທະນາ ແລະ ກົດໝາຍກ່ຽວກັບວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງເພື່ອນໍາສະເໜີໃຫ້ລັດຖະບານພິຈາລະນາຕົກລົງ;
- ຊີ້ນໍາ ແລະ ຕິດຕາມການເຄື່ອນໄຫວຂອງກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ, ລວມທັງກອງທຶນສົ່ງເສີມວິສາຫະກິດດັ່ງກ່າວ;

---

[34]ກົດໝາຍວ່າດ້ວຍການສົ່ງເສີມວິສະຫາກິດຂະໜາດນ້ອຍ ແລະ ກາງ, ສະບັບປີ 2011, ມາດຕາ 24.

[35]ທາກໍອ້າງ, ມາດຕາ 25.

[36]ທາກໍອ້າງ, ມາດຕາ 26.

- ຄົ້ນຄ້ວາຂະໜາດ ແລະ ເງື່ອນໄຂສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງເພື່ອນໍາສະເໜີຕໍ່ລັດຖະບານພິຈາລະນາຕົກລົງ;

- ສະເໜີສ້າງຕັ້ງອົງການຜະລິດຕະພາບແຫ່ງຊາດລາວເພື່ອເຄື່ອນໄຫວວຽກງານຮ່ວມກັບອົງການຜະລິດຕະພາບແຫ່ງອາຊີເພື່ອໃຫ້ລັດຖະບານພິຈາລະນາຕົກລົງ;

- ສະເໜີນໍາໃຊ້ມາດຕະການສຸກເສີນເພື່ອຕອບໂຕ້ວິກິດການ ແລະ ໄພພິບັດຕ່າງໆທີ່ສົ່ງຜົນກະທົບທາງລົບຕໍ່ວິສາຫະກິດດັ່ງກ່າວເພື່ອໃຫ້ລັດຖະບານພິຈາລະນາ;

- ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດຍຸດທະສາດ ແລະ ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງປະຈໍາປີ ແລະ ປະຈໍາຫ້າປີ;

- ອອກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ;

- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງທັງພາກລັດ ແລະ ພາກທຸລະກິດ ແລະ ຄູ່ຮ່ວມພັດທະນາໃນການຈັດຕັ້ງປະຕິບັດນະໂຍບາຍ, ຍຸທະສາດ ແລະ ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຕາມຄວາມຮັບຜິດຊອບຂອງຕົນ;

- ລະດົມ ແລະ ສະໜອງທຶນໃຫ້ແກ່ໂຄງການກ່ຽວຂ້ອງກັບການສົ່ງເສີມ ວນກ ທີ່ຈັດຕັ້ງປະຕິບັດໂດຍພາກສ່ວນຕ່າງໆ;

- ຊີ້ນໍາການເຜີຍແຜ່ຂໍ້ມູນຂ່າວສານ, ການຝຶກອົບຮົມ, ສໍາມະນາ ແລະ ອື່ນໆ ເພື່ອບໍາລຸງ ແລະ ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານການສົ່ງເສີມ ວນກ ໃຫ້ແກ່ພະນັກງານຂອງລັດ ແລະ ພາກທຸລະກິດ;

- ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານສົ່ງເສີມ ວນກ;

- ສະຫຼຸບ ແລະ ລາຍງານຜົນການເຄື່ອນໄຫວວຽກງານຈັດຕັ້ງປະຕິບັດວຽກງານ ວນກຕໍ່ລັດຖະບານຢ່າງເປັນປົກກະຕິ;

- ປະຕິບັດສິດ ແລະ ໜ້າທີ່ອື່ນໆ.[37]

**2) ອົງການຄຸ້ມຄອງຢູ່ຂັ້ນທ້ອງຖິ່ນ ພະແນກອຸດສາຫະກໍາ ແລະ ການຄ້າ**

ໃນການຄຸ້ມຄອງວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຢູ່ຂັ້ນທ້ອງຖິ່ນກໍຄືຢູ່ແຂວງ ຈໍາປາສັກ ແມ່ນ ພະແນກອຸດສາຫະກໍາການຄ້າແຂວງ ແລະ ຫ້ອງການອຸດສາຫະກໍາການຄ້າເມືອງ ແລະ ເທດສະບານເປັນຜູ້ຄຸ້ມຄອງເຊິ່ງມີສິດ ແລະ ໜ້າທີ່ດັ່ງນີ້:

---

[37]ກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ, ສະບັບ ປີ 2011, ມາດຕາ 35, 36

- ຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ, ແຜນພັດທະນາ ແລະ ກົດໝາຍ ກ່ຽວກັບວິສາຫະກິດຂະໜາດນ້ອຍ ແລະ ກາງ;

- ຊີ້ນໍາ ແລະ ຕິດຕາມການເຄື່ອນໄຫວຂອງຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ເທດສະບານ ກ່ຽວກັບວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ;

- ສະໜອງຂໍ້ມູນຂ່າວສານ ກ່ຽວກັບວຽກງານສົ່ງເສີມ ວິສາຫະກິດຂະໜາດ ນ້ອຍ ແລະ ກາງ ໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດຍຸດທະສາດ ແລະ ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນແຕ່ລະໄລຍະຢູ່ທ້ອງຖິ່ນຂອງຕົນ;

- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງທັງພາກລັດ ແລະ ພາກທຸລະກິດໃນ ການຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ ແລະ ແຜນພັດທະນາວິສາຫະກິດຂະໜາດ ນ້ອຍ ແລະ ກາງ ຕາມຄວາມຮັບຜິດຊອບຂອງຕົນ;

- ລະດົມທຶນໃຫ້ແກ່ໂຄງການ ກ່ຽວຂ້ອງກັບການສົ່ງເສີມ ວິສາຫະກິດຂະໜາດ ນ້ອຍ ແລະ ກາງ ຈາກພາກສ່ວນຕ່າງໆ;

- ເຜີຍແຜ່ຂໍ້ມູນຂ່າວສານ, ຈັດຕັ້ງການຝຶກອົບຮົມ, ສໍາມະນາ ແລະ ອື່ນໆ ເພື່ອບໍາລຸງ ແລະ ຍົກລະດັບຄວາມຮູ້, ຄວາມສາມາດດ້ານການສົ່ງເສີມວິສາຫະກິດຂະໜາດ ນ້ອຍ ແລະ ກາງ ໃຫ້ແກ່ພະນັກງານຂອງລັດ ແລະ ພາກທຸລະກິດຕາມຄວາມຮັບຜິດຊອບ ຂອງຕົນ;

- ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກ ງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງຕາມການມອບໝາຍ;

- ສະຫຼຸບ ແລະ ລາຍງານຜົນຂອງການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານວິ ສາຫະກິດຂະໜາດນ້ອຍ ແລະ ກາງ ຕໍ່ອົງການປົກຄອງແຂວງ, ນະຄອນ ແລະ ກະຊວງ ອຸດສາຫະກໍາ ແລະ ການຄ້າຢ່າງເປັນປົກກະຕິ;

- ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ ແລະ ຕາມການມອບ ໝາຍຂອງຂັ້ນເທິງ.[38]

### 3) ການຄຸ້ມຄອງວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງບັນດາ ຂະແໜງການອື່ນ

ນອກຈາກກະຊວງອຸດສາຫະກໍາການຄ້າ ແລະ ພະແນກອຸດສາຫະກໍາການຄ້າ, ຫ້ອງການອຸດສາຫະກໍາການຄ້າເມືອງ ແລະ ເທດສະບານແລ້ວຍັງມີອົງການ ແລະ ບັນດາ

[38] ກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ, ສະບັບ ປີ 2011, ມາດຕາ 37.

ຂະແໜງການອື່ນທີ່ມີສິດ ແລະ ໜ້າທີ່ໃນການຄຸ້ມຄອງການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງເຊິ່ງມີສິດ ແລະ ໜ້າທີ່ດັ່ງນີ້:

- ສ້າງຕັ້ງສູນ ຫຼື ສະຖາບັນວິຊາການເຮັດໜ້າທີ່ສະໜັບສະໜູນວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນດ້ານຕ່າງໆທີ່ຕິດພັນກັບພາລະບົດບາດຂອງຂະແໜງການຕົນເຊັ່ນ ການພັດທະນາຜູ້ປະກອບກິດຈະການ, ການພັດທະນາສີມືແຮງງານ, ການຄົ້ນຄວ້າວິໄຈເພື່ອພັດທະນາຜະລິດຕະພັນ, ການຝຶກອົບຮົມ, ການສໍາມະນາ, ການໃຫ້ຄໍາປຶກສາ ແລະ ການບໍລິການດ້ານວິຊາການອື່ນໆ;

- ໂຄສະນາ, ເຜີຍແຜ່, ຊີ້ນໍາ ແລະ ຕິດຕາມການຈັດຕັ້ງປະຕິບັດວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ຂຶ້ນກັບຕົນ;

- ສະຫຼຸບ, ສັງລວມ ແລະ ລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ຂັ້ນເທິງຂອງຕົນ ແລະ ຂະແໜງການອຸດສາຫະກໍາ ແລະ ການຄ້າໃນຂັ້ນຂອງຕົນຢ່າງເປັນປົກກະຕິ;

- ປະຕິບັດສິດ ແລະ ໜ້າທີ່ອື່ນຕາມພາລະບົດບາດ ແລະ ລະບຽບກົດໝາຍ.[39]

ໃນການຄຸ້ມຄອງວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດ ແລະ ຂັ້ນແຂວງ, ບັນດາສະມາຄົມ ແລະ ກຸ່ມທຸລະກິດ ມີພາລະບົດບາດເປັນຕົວແທນແຫ່ງສິດຜົນປະໂຫຍດໃຫ້ແກ່ ວິສາຫະກິດຂະໜາດນ້ອຍ ແລະ ກາງ, ມີສິດ ແລະ ໜ້າທີ່ສະໜອງການບໍລິການໃຫ້ຄໍາປຶກສາພັດທະນາທຸລະກິດໃນດ້ານຕ່າງໆ.

### 2.5.2 ອົງການກວດກາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ

ອົງການກວດກາວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ປະກອບດ້ວຍ:

- ອົງການກວດກາພາຍໃນ ແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 35 ຂອງກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ;

- ອົງການກວດກາພາຍນອກ ແມ່ນ ສະພາແຫ່ງຊາດ, ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ, ອົງການກວດສອບແຫ່ງລັດ.[40]

**1) ຈຸດປະສົງຂອງການກວດກາ**

---

[39]ກົດໝາຍວ່າດ້ວຍການສົ່ງເສີມວິສະຫາກິດຂະໜາດນ້ອຍ ແລະ ກາງ, ສະບັບປີ 2011, ມາດຕາ 38.

[40]ທາກໍອ້າງ, ມາດຕາ 42.

ຈຸດປະສົງຂອງການກວດກາວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ແມ່ນເພື່ອເຮັດໃຫ້ການຄຸ້ມຄອງການເຄື່ອນໄຫວວຽກງານຂອງລະບົບການຈັດຕັ້ງສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ມີປະສິດທິພາບ, ປະສິດທິຜົນ ແລະ ຖືກຕ້ອງຕາມລະບຽບກົດໝາຍ.[41]

**2) ແຜນການກວດກາ**

ອົງການກວດກາ ສ້າງແຜນການດຳເນີນງານການກວດກາຂອງຕົນເພື່ອຕິດຕາມ ກວດກາວຽກງານ ສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ຕິດພັນກັບບັນດາກິດຈະກຳ ແລະ ຜົນຂອງການສົ່ງເສີມທີ່ໄດ້ກຳນົດໄວ້ໃນແຜນດຳເນີນງານແຕ່ລະໄລຍະຂອງລະບົບການຈັດຕັ້ງສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ.

**3) ເນື້ອໃນກວດກາ**

ເນື້ອໃນກວດກາມີ ດັ່ງນີ້:

- ການຈັດຕັ້ງປະຕິບັດແຜນຍຸດທະສາດ ແລະ ແຜນດຳເນີນງານການເຄື່ອນໄຫວຂອງລະບົບການຈັດຕັ້ງສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ;
- ການກຳນົດລະບຽບການ, ມາດຕະການ ແລະ ວິທີການແກ້ໄຂຜົນຂອງການກວດກາ;
- ການລາຍງານກ່ຽວກັບຜົນຂອງການກວດກາ.

**4) ຮູບການກວດກາ**

ການກວດກາມີ ສາມ ຮູບການ ດັ່ງນີ້:

- ການກວດກາປົກກະຕິ ແມ່ນ ການກວດກາທີ່ມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ;
- ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດກາເມື່ອເຫັນວ່າມີຄວາມຈຳເປັນໂດຍແຈ້ງໃຫ້ເປົ້າໝາຍທີ່ຈະຖືກກວດກາຮູ້ລ່ວງໜ້າຢ່າງໜ້ອຍ ຊາວສີ່ຊົ່ວໂມງ;
- ການກວດກາກະທັນຫັນ ແມ່ນ ການກວດກາເມື່ອເຫັນວ່າມີຄວາມຈຳເປັນແຕ່ການລົງກວດການັ້ນ ແມ່ນດຳເນີນຢ່າງຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ເປົ້າໝາຍທີ່ຈະຖືກກວດກາຮູ້ກ່ອນລ່ວງໜ້າ;

ການກວດກາ ສາມາດດຳເນີນທັງການກວດກາດ້ານເອກະສານ ແລະ ການລົງປະຕິບັດຕົວຈິງຢູ່ສະຖານທີ່ປະຕິບັດງານ.[42]

**5) ວິທີການກວດກາ**

---

[41] ກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ, ສະບັບ ປີ 2011, ມາດຕາ 43.

[42] ທາກໍອ້າງ, ມາດຕາ 46.

ການກວດກາພາຍນອກ ມີຈຸດປະສົງກວດກາການປະຕິບັດໜ້າທີ່ຂອງການຈັດຕັ້ງສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ, ອົງການຄຸ້ມຄອງ ແລະ ອົງການກວດກາ ເພື່ອໃຫ້ມີຄວາມເຂັ້ມແຂງ, ໂປ່ງໃສ ແລະ ຍຸຕິທໍາ. ການກວດກາພາຍນອກ ມີດັ່ງນີ້:

- ການກວດກາຂອງສະພາແຫ່ງຊາດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ;
- ການກວດກາຂອງອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ ຕາມທີ່ໄດ້ ກໍານົດໄວ້ໃນກົດໝາຍວ່າດ້ວຍ ການກວດກາລັດ;
- ການກວດກາຂອງອົງການກວດສອບແຫ່ງລັດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍ ການກວດສອບ.[43]

# 3.ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະຂະໜາດກາງຢູ່ແຂວງຈໍາປາສັກ

## 3.1 ສະພາບຈຸດພິເສດຂອງແຂວງຈໍາປາສັກ

ແຂວງ ຈໍາປາສັກ ເປັນແຂວງໜຶ່ງທີ່ຕັ້ງຢູ່ໃຕ້ສຸດຂອງ ສປປ ລາວ ມີພື້ນຖານທ່າແຮງ ມີ ຄວາມອຸດົມສົມບູນທາງດ້ານຊັບພະຍາກອນທໍາມະຊາດ ປະຊາຊົນບັນດາເຜົ່າມີມູນເຊື້ອດຸໝັ່ນຂະຫຍັນໝັ່ນພຽນ, ມີນໍ້າໃຈຮັກຊາດອັນສູງສົ່ງ, ມີຄວາມສາມັກຄີຕໍ່ສູ້ເດັດດ່ຽວໝຽວແໜ້ນດໍາລົງຊີວິດ ພາຍໃຕ້ການຊີ້ນໍາ-ນໍາພາຂອງພັກ ແລະ ລັດຢ່າງຖືກຕ້ອງສອດຄ່ອງ ແຂວງ ຈໍາປາສັກ ມີເນື້ອທີ່ທັງໝົດ 1.535.000 ຮຕ, ເນື້ອທີ່ສ່ວນໃຫຍ່ຂອງແຂວງແບ່ງອອກເປັນ 2 ເຂດໃຫຍ່ຄື ເຂດທົ່ງພຽງກວມ 70% ແລະ ເຂດພູພຽງກວມ 26% ມີພົນລະເມືອງລວມແຂວງ 642.785 ຄົນ, ສະເລ່ຍຄວາມໜາແໜ້ນເທົ່າກັບ 41,9 ຄົນ/ກມ.

ໃນໄລຍະ 1 ປີ ຜ່ານມາ ສົກ 2015-2016 ມູນຄ່າການນໍາເຂົ້າ ແລະ ສົ່ງອອກ, ການຄ້າຊາຍແດນ, ການຄ້າຜ່ານແດນຂອງແຂວງ ຈໍາປາສັກ ສາມາດບັນລຸໄດ້ທັງໝົດ 378.439.240,66 ໂດລາສະຫາລັດ, ທຽບໃສ່ໄລຍະດຽວກັນ ເພີ່ມຂຶ້ນ 26%, ທຽບໃສ່ແຜນປີລື່ນແຜນ 12%, ໃນນັ້ນ ມູນຄ່າການນໍາເຂົ້າທັງໝົດ ແມ່ນບັນລຸໄດ້ 178.597.220,00 ໂດລາສະຫາລັດ, ທຽບໃສ່ໄລຍະດຽວກັນເພີ່ມຂຶ້ນ 29%, ທຽບໃສ່ແຜນປີລື່ນແຜນ 18%, ເຊິ່ງສິນຄ້ານໍາເຂົ້າສ່ວນໃຫຍ່ແມ່ນ ນໍ້າມັນເຊື້ອໄຟ, ສິ້ນສ່ວນພາຫານະ ແລະ ອາໄລ່, ອຸປະກອນກໍ່ສ້າງ, ເຄື່ອງຮັບໃຊ້ການຜະລິດ ແລະ ສະບຽງອາຫານ, ສ່ວນມູນຄ່າການສົ່ງອອກທັງໝົດແມ່ນສາມາດບັນລຸໄດ້ 183.996.404,66 ໂດລາສະຫາລັດ, ທຽບໃສ່ໄລຍະດຽວກັນເພີ່ມຂຶ້ນ 23%, ທຽບໃສ່ແຜນປີ ລື່ນແຜນ 7%, ສິນຄ້າທີ່ສົ່ງອອກຕົ້ນຕໍແມ່ນ ສິນຄ້າກະສິກໍາ (ວັດຖຸ

[43] ກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ, ສະບັບ ປີ 2011, ມາດຕາ 47.

ດິບ), ຜະລິດຕະພັນອຸດສາຫະກຳປຸງແຕ່ງ (ສຳເລັດຮູບ), ພືດຜັກທີ່ນອນໃນໂຄງການ Contact Farming.[44]

ຈາກສາເຫດດັ່ງກ່າວ ເມື່ອສົມທຽບກັນ ລະຫ່ວາງ ການນຳເຂົ້າ ແລະ ສົ່ງອອກທັງໝົດແລ້ວເຮັດໃຫ້ ແຂວງ ຈຳປາສັກ ເກີດມີການເກີນດຸນການຄ້າປະມານ 5.399.184,66 ໂດລາສະຫາລັດ, ທຽບໃສ່ໄລຍະດຽວກັນຫຼຸດລົງ 54%, ທຽບໃສ່ແຜນປີປະຕິບັດໄດ້ 27%, ສາເຫດທີ່ພາໃຫ້ເກີດມີການເກີນດຸນການຄ້າ ຍ້ອນໄລຍະປີນີ້ແມ່ນ ຊ່ວງທີ່ມີການສົ່ງອອກກາເຟເປັນຈຳນວນຫຼາຍ ບວກກັບຢາງພາລາ ແລະ ລາຄາສິນຄ້ານອນໃນໂຄງການ Contact Farming ມີການເພີ່ມຂຶ້ນເລັກນ້ອຍ ຈຶ່ງເຮັດໃຫ້ຕົວເລກສົ່ງອອກມີການເພີ່ມຂຶ້ນ.

- ລວມຍອດການຜະລິດຕະພັນອຸດສາຫະກຳ ແລະ ຫັດຖະກຳ ບັນລຸໄດ້ 3.091,66 ຕື້ກີບ, ທຽບໃສ່ແຜນການປີແມ່ນລື່ນແຜນ 7%, ທຽບໃສ່ໄລຍະດຽວກັນເພີ່ມຂຶ້ນ 14%. ລວມຍອດການຈຳໜ່າຍຜະລິດຕະພັນອຸດສາຫະກຳ ແລະ ຫັດຖະກຳບັນລຸໄດ້ 4.452,76 ຕື້ກີບ, ທຽບໃສ່ແຜນການປີ ລື່ນແຜນ 11%, ທຽບໃສ່ໄລຍະດຽວກັນເພີ່ມຂຶ້ນ 18%.
- ມູນຄ່າເກັບຊື້ຜະລິດຕະພັນພາຍໃນມີມູນຄ່າ 10.263,19 ຕື້ກີບ, ທຽບໃສ່ໄລຍະດຽວກັນເພີ່ມຂຶ້ນ 12%, ທຽບໃສ່ແຜນປີລື່ນແຜນ 3%. ມູນຄ່າການຈໍລະຈອນພາຍໃນມີມູນຄ່າ 11.665,81 ຕື້ກີບ, ທຽບໃສ່ໄລຍະດຽວກັນເພີ່ມຂຶ້ນ 16%, ທຽບໃສ່ແຜນປີລື່ນແຜນ 4%.[45]

ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ ແຂວງ ຈຳປາສັກ ເປັນຫົວໜ່ວຍທຸລະກິດໜຶ່ງທີ່ມີຄວາມສຳຄັນ ແລະ ຈຳເປັນໃນການພັດທະນາເສດຖະກິດ ແລະ ສັງຄົມ ຊຶ່ງຂຶ້ນກັບຂະແໜງທະບຽນ ແລະ ຄຸ້ມຄອງວິສາຫະກິດ(ພະແນກອຸດສາຫະກຳ ແລະ ການຄ້າ) ແຂວງ ຈຳປາສັກ ໄດ້ມີການຈັດຕັ້ງເຄື່ອນໄຫວພາຍໃຕ້ກົດໝາຍວ່າດ້ວຍ ວິສາຫະກິດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ່ວຍການສົ່ງເສີມ ວິສາຫະກິດຂະໜາດນ້ອຍ ແລະ ກາງ, ດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການລົງທຶນ, ອີງຕາມການຈັດຕັ້ງປະຕິບັດການສົ່ງເສີມການລົງທຶນໃນຂະ ໜາດວິສາຫະກິດຂະໜາກນ້ອຍ ແລະ ກາງໃນກາານຂຶ້ນທະບຽນແຕ່ 2010-2016 ການແຈ້ງຂຶ້ນທະບຽນວິສາຫະກິດທົ່ວແຂວງທັງໝົດ 10.106 ຫົວໜ່ວຍ, ລວມມູນຄ່າທຶນຈົດທະບຽນ 5.647.051.064 ກີບ, ໃນນັ້ນ ຂະແໜງກະສິກຳ 250 ຫົວໜ່ວຍ, ມູນຄ່າທຶນຈົດທະບຽນ 1.562.246.220.796 ກີບ, ຂະແໜງອຸດສາຫະກຳມີ 1.301 ຫົວໜ່ວຍ, ມູນຄ່າທຶນຈົດທະບຽນ 1.114.776.643.855ກີບ, ຂະແໜງການຄ້າມີ 5.250 ຫົວໜ່ວຍ ມູນຄ່າທຶນຈົດທະບຽນ 750.323.117.178 ຕື້ກີບ, ຂະແໜງບໍລິການມີ 3.305 ຫົວໜ່ວຍ, ມູນຄ່າທຶນຈົດທະບຽນ 2.219.705.533.235 ກີບ, ສຳລັບສົກປີ

[44]ການສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມ 5 ປີ ຄັ້ງທີ VII (2011-2015) ແລະທິດທາງແຜນການ 5 ປີ ຄັ້ງທີ VIII (2016-2020) ຂອງແຂວງຈຳປາສັກ, ປີ 2015, ໜ້າ 2.

[45]ທາກໍອ້າງ, ໜ້າ 1.

2014-2016 ການແຈ້ງຂຶ້ນທະບຽນ ວິສາຫະກິດຂະໜາກນ້ອຍ ແລະ ກາງແຂວງ ຈຳປາສັກມີ ຈຳນວນ 104 ຫົວໜ່ວຍມູນຄ່າທຶນຈົດທະບຽນ 1.491.753.630.500 ກີບ, ຫົວໜ່ວຍວິສາຫະກິດທີ່ໄດ້ຮັບການສົ່ງເສີມ ໃຫ້ລົງທຶນໃນ ກິດຈະການມີ 5 ຫົວໜ່ວຍ, ຈັດຕັ້ງຂື້ນໃໝ່ 2 ຫົວໜ່ວຍ ແລະ ດັດແກ້ໃໝ່ 3 ຫົວໜ່ວຍ ມູນຄ່າທຶນຈົດທະບຽນ 38.341.853.994 ກີບ.

ຈາກສະຖິຕິການຂະຫຍາຍຕົວທາງເສດຖະກິດຂອງແຂວງຈຳປາສັກໃນຂ້າງເທິງນັ້ນ ການດຳເນີນທຸລະກິດຂະໜາດນ້ອຍ ແລະ ກາງ ກໍແມ່ນໜຶ່ງໃນການປະກອບສ່ວນສ້າງເສດຖະກິດຂອງແຂວງ ເພາະທຸລະກິດຂະໜາດນ້ອຍ ແລະ ກາງ ແມ່ນຮາກຖານໜຶ່ງທີ່ສຳຄັນຂອງເສດຖະກິດການເພີ່ມຂຶ້ນ ແລະ ຫຼຸດລົງຂອງການປະກອບທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ຍ້ອນວ່າ ຢູ່ແຂວງ ຈຳປາສັກມີການເພີ່ມຂຶ້ນຂອງຜູ້ປະກອບການ ເຊິ່ງເຫັນໄດ້ໃນການເພີ່ມຂຶ້ນຂອງການຈົດທະບຽນວິສະຫະກິດ ແຕ່ພາຍຫຼັງໄດ້ດຳເນີນກິດຈະການມາແລ້ວໄລຍະໜຶ່ງກໍໄດ້ມີການໂຈະ, ຢຸດເຊົາກິດຈະການ ເນື່ອງມາຈາກຜູ້ປະກອບກິດຈະການບໍ່ມີຄວາມຮູ້ຄວາມສາມາດ, ທີ່ມາຂອງຜູ້ປະກອບກິດຈະການສ່ວນຫຼາຍແມ່ນການຫັນປ່ຽນອາຊີບຈາກຊາວກະສິກອນ, ຊາວນາມາດຳເນີນທຸລະກິດ ຫຼື ເຄື່ອນໄຫວທຸລະກິດໂດຍບໍ່ໄດ້ຮັບການຝຶກອົບຮົມຈຳນວນໜຶ່ງ ແລະ ບໍ່ມີຫ້ອງການໃຫ້ຄຳປຶກສາທາງດ້ານການດຳເນີນທຸລະກິດ ມີໄລຍະໜຶ່ງແມ່ນ ສະພາການຄ້າເປັນຂອດປະສານງານ ແຕ່ເນື່ອງຈາກວ່າການກຳນົດສິດໜ້າທີ່ ແລະ ພາລະບົດບາດ ນັ້ນບໍ່ທັນລະອຽດ ເຮັດໃຫ້ເກີດມີການສັບສົນໃນການໃຫ້ຄຳປຶກສາ ລະຫວ່າງພະແນກອຸດສາຫະກຳ-ການຄ້າ, ກັບ ສະພາອຸດສາຫະກຳ-ການຄ້າ, ອີກສ່ວນໜຶ່ງແມ່ນ ຜູ້ປະກອບກິດຈະການບໍ່ໄດ້ສຶກສາຕະຫຼາດຢ່າງລະອຽດແລ້ວຈຶ່ງເຮັດທຸລະກິດ, ເຮັດໃຫ້ມີຄວາມສະພາບຄ່ອງທາງດ້ານການເງິນ, ບໍ່ສາມາດເຂົ້າເຖິງແຫຼ່ງທຶນໄດ້ເນື່ອງຈາກວ່າ ທຶນສ່ວນຫຼາຍແມ່ນຕ້ອງກູ້ຢືມຈາກທະນາຄານແຕ່ວິສະຫາກິດຂະໜາດນ້ອຍ ແລະ ກາງສ່ວນໃຫຍ່ແມ່ນບໍ່ມີຫຼັກຊັບຄົງທີ່ ຈຶ່ງກູ້ຢືມບໍ່ໄດ້ເຮັດໃຫ້ຜູ້ປະກອບກິດຈະການຫັນໄປເອົາເງິນນຳສະຖາບັນການເງິນອື່ນເຊິ່ງມີດອກເບ້ຍສູງ ແລະ ເປັນເຫດໃຫ້ຜະລິດຕະພັນທີ່ຜະລິດອອກມາແລ້ວ ມີລາຄາຄ້ອນຂ້າງສູງ, ຖ້າທຽບໃສ່ກັບປະເທດອື່ນແລ້ວເຫັນວ່າ ສິນຄ້າມີຄຸນນະພາບຕ່ຳ ແຕ່ລາຄາສູງ ສະນັ້ນ ຈຶ່ງບໍ່ສາມາດທີ່ຈະແຂ່ງຂັນກັບຄູ່ແຂ່ງອື່ນໄດ້.

## 3.2 ຈຸດປະສົງຂອງການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຢູ່ແຂວງ ຈຳປາສັກ

ການສົ່ງເສີມວິສະຫະກິດຂະໜາດນ້ອຍ ແລະ ກາງແມ່ນມີຈຸດປະສົງເພື່ອຊຸກຍູ້ສົ່ງເສີມ ແລະ ພັດທະນາພ້ອມທັງສ້າງຄວາມສາມາດໃນການແຂ່ງຂັນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອຊຸກຍູ້ການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ, ແນໃສ່ສ້າງວຽກເຮັດງານທຳ, ສ້າງລາຍຮັບ ແລະ ຍົກສູງລະດັບຊີວິດການເປັນຢູ່ຂອງປະຊາຊົນ, ປະກອບ

ສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃຫ້ມີການຂະຫຍາຍຕົວຢ່າງໝັ້ນຄົງ.[46] ໂດຍສະເພາະແຂວງຈຳປາສັກ ເປັນແຂວງໜຶ່ງທີ່ມີທ່າແຮງຫຼາຍດ້ານ ບໍ່ວ່າຈະເປັນຊັບພະຍາກອນທຳມະຊາດ, ການເພີ່ມຂຶ້ນຂອງຫົວໜ່ວຍທຸລະກິດ ແລະ ການຂະຫຍາຍຕົວຢ່າງໄວວາຂອງເສດຖະກິດ ແຕ່ວິສາຫະກິດສ່ວນໃຫຍ່ເປັນວິສາຫະກິດແບບຄອບຄົວ ບໍ່ມີການພັດທະນາໃນການຜະລິດສິນຄ້າ ຫຼື ການຂະຫຍາຍຕະຫຼາດ ດັ່ງນັ້ນ ລັດຖະບານຈຶ່ງຈຳເປັນຕ້ອງເຂົ້າມາສົ່ງເສີມໃຫ້ວິສາຫະກິດດັ່ງກ່າວໄດ້ຮັບປະໂຫຍດຈາກມາດຕະການສົ່ງເສີມຂອງລັດຖະບານ.

### 3.3 ມາດຕະການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ

ແຂວງ ຈຳປາສັກ ເປັນຈຸດໃຈກາງອັນສຳຄັນໃນບັນດາແຂວງພາກໃຕ້ຂອງ ສປປ ລາວ ໃນການພັດທະນາເສດຖະກິດ-ສັງຄົມຮອບດ້ານ, ມີພື້ນຖານໂຄງຮ່າງຫຼາຍດ້ານຕິດຕໍ່ກັບຈຸດເຊື່ອມຈອດກັບບັນດາອະນຸພາກພື້ນ ແລະ ສາກົນ, ສະນັ້ນ ການວາງມາດຕະການໃນການສ້າງ ແລະ ສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຂອງແຂວງ ເພື່ອອຳນວຍຄວາມສະດວກໃຫ້ແກ່ການພັດທະນາ ແລະ ຂະຫຍາຍຕົວຂອງເສດຖະກິດ ກໍມີຄວາມສຳຄັນສະເພາະແຂວງ ຈຳປາສັກແລ້ວ ແມ່ນອີງໃສ່ກັບຫຼັກການທາງສູນກາງວາງອອກ, ແລ້ວປະຕິບັດຕາມລະບຽບກົດໝາຍທີ່ຂັ້ນເທິງວາງ, ໂດຍການນຳມາຜັນຂະຫຍາຍ ແລະ ມາຈັດຕັ້ງປະຕິບັດ, ສະນັ້ນ ເພື່ອເຮັດໃຫ້ວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະຂະໜາດກາງໄດ້ດຳເນີນໄປຢ່າງຖືກຕ້ອງສອດຄ່ອງ ທາງພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ ກໍໄດ້ນຳໃຊ້ມາດຕະການ, ກໍຄືນະໂຍບາຍຂອງພັກ-ລັດວາງອອກ ໃນແຕ່ລະໄລຍະຊຶ່ງປະກອບມີນະໂຍບາຍທັງໝົດ 13 ນະໂຍບາຍ, ແຕ່ໃນນັ້ນ ແມ່ນສາມາດປະຕິບັດໃນຕົວຈິງມີພຽງ 6 ນະໂຍບາຍ ປະກອບມີ 35 ມາດຕະການຄືດັ່ງລຸ່ມນີ້:[47]

#### 3.3.1 ການສ້າງສະພາບແວດລ້ອມທີ່ເອື້ອຍອຳນວຍໃຫ້ແກ່ການສ້າງ ແລະ ດຳເນີນທຸລະກິດ

ໃນນະໂຍບາຍນີ້ຈະປະກອບດ້ວຍ 4 ມາດຕະການ ດັ່ງນີ້:

(1) ປັບປຸງລະບົບການຂຶ້ນທະບຽນວິສາຫະກິດໃຫ້ກະທັດຮັດ ແລະ ງ່າຍດາຍ;

(2) ປັບປຸງລະບົບການອອກໃບອະນຸຍາດໂດຍຫຼຸດຜ່ອນເງື່ອນໄຂ ແລະ ຂັ້ນຕອນການອອກໃບອະນຸຍາດ ແລະ ການກວດກາທີ່ບໍ່ຈຳເປັນຂອງບັນດາຂະແໜງການຕ່າງໆ;

---

[46]ກົດໝາຍວ່າດ້ວຍການສົ່ງເສີມວິສະຫາກິດຂະໜາດນ້ອຍ ແລະ ກາງ, ສະບັບປີ 2011, ມາດຕາ 1.

[47]ບົດລາຍງານສະພາບການພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ, ແຂວງ ຈ□າປາສັກ, ປີ 2016, ໜ້າ 38.

(3)ພັດທະນາລະບົບນິຕິກຳ, ລະບຽບການ ແລະ ເພີ່ມທະວີຄວາມສັກສິດໃນການຈັດຕັ້ງປະຕິບັດລະບຽບການທີ່ກ່ຽວຂ້ອງ, ເພື່ອຫຼຸດຜ່ອນຄວາມບໍ່ແນ່ນອນໃນການເຄື່ອນໄຫວທຸລະກິດ;

(4)ອຳນວຍຄວາມສະດວກທາງດ້ານການຄ້າ, ປັບປຸງຂັ້ນຕອນການນຳເຂົ້າ-ສົ່ງອອກເພື່ອເຮັດໃຫ້ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງສາມາດເຂົ້າເຖິງແຫຼ່ງວັດຖຸດິບ ແລະ ເຂົ້າຫາຕະຫຼາດໄດ້ສະດວກຂຶ້ນ.

### 3.3.2 ນະໂຍບາຍການສົ່ງເສີມການເຂົ້າເຖິງແຫຼ່ງທຶນ

ໃນນະໂຍບາຍນີ້ຈະປະກອບດ້ວຍ 5 ມາດຕະການ ດັ່ງນີ້:

(1) ປັບປຸງດ້ານລະບຽບກົດໝາຍ, ເພີ່ມຄວາມສັກສິດໃນການຈັດຕັ້ງປະຕິບັດລະບຽບກົດໝາຍເພື່ອເປັນຫຼັກຊັບຄ້ຳປະກັນໃນການສະໜອງສິນເຊື່ອພ້ອມທັງເປັນສິ່ງຈູງໃຈທີ່ສຳຄັນໃຫ້ທະນາຄານປ່ອຍສິນເຊື່ອ;

(2) ສ້າງເງື່ອນໄຂໃຫ້ທະນາຄານປ່ອນສິນເຊື່ອໃນຮູບແບບການເຊົ່າສິນເຊື່ອເພື່ອເປັນທາງເລືອກໃຫ້ແກ່ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ;

(3) ສ້າງຄວາມເຂັ້ມແຂງ, ຂະຫຍາຍຕາໜ່າງ ແລະ ຮູບແບບການບໍລິການຂອງທະນາຄານສຳລັບວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ, ພ້ອມກັນນັ້ນກໍຊຸກຍູ້ການສະໜອງສິນເຊື່ອຂະໜາດນ້ອຍ(ຈຸນລະພາກ) ຮູບແບບຕ່າງໆເພື່ອສະໜອງສິນເຊື່ອໃນຂົງເຂດທີ່ທະນາຄານບໍ່ສາມາດຕອບສະໜອງໄດ້;

(4) ຍົກລະດັບຄວາມອາດສາມາດຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນການກູ້ຢືມ;

(5) ສ້າງຕັ້ງກອງທຶນ ແລະ ທະນາຄານສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ.

### 3.3.3 ນະໂຍບາຍການເພີ່ມຜະລິດຕະພາບ

ໃນນະໂຍບາຍນີ້ຈະປະກອບດ້ວຍ 6 ມາດຕະການ ດັ່ງນີ້:

(1) ພັດທະນາບຸກຄະລາກອນ, ຍົກລະດັບສີມືແຮງງານໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານຕາມຈຸດພິເສດ ແລະ ຂະບວນທ່າແຮງຂອງແຂວງຈຳປາສັກ;

(2) ສ້າງລະບົບການເຮັດສັນຍາມອບເໝົາການຜະລິດ ແລະ ການບໍລິການລະຫວ່າງວິສາຫະກິດຂະໜາດໃຫ່ຍ ແລະ ສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ;

(3) ເພີ່ມທະວີການສ້າງ ແລະ ການນໍາໃຊ້ມາດຕະການ ແລະ ວິທີການທີ່ດີເລີດໃນການສົ່ງເສີມຜະລິດຕະພາບ ແລະ ຄຸນນະພາບຜະລິດຕະພັນຂອງສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ;

(4) ສົ່ງເສີມການບໍລິການພັດທະນາທຸລະກິດໃຫ້ມີຄວາມຫຼາກຫຼາຍ ລວມທັງໃຫ້ມີຄວາມເຂັ້ມແຂງໃຫ້ຜູ້ສະໜອງບໍລິການ ແລະ ກະຕຸ້ນການນໍາໃຊ້ການບໍລິການດັ່ງກ່າວ;

(5) ສ້າງກໍານົດກົດໝາຍປຽບທຽບ ດ້ານຜະລິດຕະພາບ, ຄຸນນະພາບ, ມາດຕະຖານ ແລະ ອື່ນໆສໍາລັບຂະແໜງການຈຸດສຸມເພື່ອສາມາດປຽບທຽບກັບພາກພື້ນ ແລະ ສາກົນພ້ອມທັງປະຕິບັດມາດຕະການທີ່ຈໍາເປັນເພື່ອຫຼຸດຜ່ອນຄວາມແຕກໂຕນ;

(6) ສ້າງໃຫ້ມີລະບົບ, ການບົ່ມເພາະ, ອະນຸບານທຸລະກິດສໍາລັບບາງຂະແໜງການເພື່ອກະຕຸ້ນໃຫ້ທຸລະກິດໃໝ່ໆເກີດຂຶ້ນ.

### 3.3.4 ນະໂຍບາຍການຂະຫຍາຍ ແລະ ການເຂົ້າເຖິງຕະຫຼາດ

ໃນນະໂຍບາຍນີ້ຈະປະກອບດ້ວຍ 6 ມາດຕະການ ດັ່ງນີ້:

(1) ເພີ່ມທະວີການສະໜອງຂໍ້ມູນຂ່າວສານດ້ານທຸລະກິດ;

(2) ຄົ້ນຄ້ວາກໍານົດຕະຫຼາດຊ່ອງວ່າງພ້ອມທັງສົ່ງເສີມພະລິດຕະພັນ ແລະ ການບໍລິການສໍາລັບຕະຫຼາດຊ່ອງວ່າງ;

(3) ຄົ້ນຄ້ວາ ແລະ ສົ່ງເສີມຂະບວນການໜຶ່ງເມືອງໜຶ່ງຜະລິດຕະພັນ (ODOP);

(4) ຊຸກຍູ້ໃຫ້ເກີດມີບໍລິສັດການຄ້າເພື່ອເກັບຊື້ ແລະ ຈໍາໜ່າຍຜະລິດຕະພັນ;

(5) ເພີ່ມການອໍານວຍຄວາມສະດວກ ດ້ານການຄ້າ, ເລັ່ງລັດການຈັດຕັ້ງປະຕິບັດເຂດເສດຖະກິດເສລີອາຊຽນ;

(6) ສ້າງເງື່ອນໄຂໃຫ້ສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໄດ້ສະໜອງການຈັດຊື້ ແລະ ການໃຊ້ບໍລິການຂອງລັດ.

### 3.3.5 ນະໂຍບາຍການຊຸກຍູ້ ແລະ ສ້າງເງື່ອນໄຂອໍານວຍຄວາມສະດວກໃຫ້ແກ່ການສ້າງຕັ້ງອົງການຈັດຕັ້ງທຸລະກິດ

ໃນນະໂຍບາຍນີ້ຈະປະກອບດ້ວຍ 3 ມາດຕະການ ດັ່ງນີ້:

(1) ສ້າງລະບຽບການເປັນເອກະພາບກ່ຽວກັບການສ້າງຕັ້ງອົງການທຸລະກິດ;

(2) ສ້າງຄວາມສາມາດແລະຄວາມເຂັ້ມແຂງຂອງອົງການຈັດຕັ້ງທາງທຸລະກິດ;

(3) ສົ່ງເສີມອົງການຈັດຕັ້ງທາງທຸລະກິດໃນການເຮັດບົດບາດສະໜອງການບໍລິການພັດທະນາທຸລະກິດແກ່ສະມາຊິກນັບທັງດ້ານຂໍ້ມູນຂ່າວສານ.

### 3.3.6 ນະໂຍບາຍເສີມຂະຫຍາຍທັດສະນະຄະຕິ ແລະ ຄຸນລັກສະນະຂອງນັກປະກອບກິດຈະການໃນສັງຄົມ

ໃນນະໂຍບາຍນີ້ຈະປະກອບດ້ວຍ 5 ມາດຕະການ ດັ່ງນີ້:

(1) ເອົາວິຊາກໍ່ສ້າງຄຸນລັກສະນະຜູ້ປະກອບກິດຈະການເຂົ້າໃນລະບົບການສຶກສາເພື່ອເສີມສ້າງນັກປະກອບກິດຈະການໃນສັງຄົມ;

(2) ສ້າງ ແລະ ດຳເນີນແຜນງານສົ່ງເສີມນັກທຸລະກິດໜຸ່ມນ້ອຍ;

(3) ຈັດການປະກວດແຜນທຸລະກິດດີເດັ່ນປະຈຳປີ;

(4) ນຳໃຊ້ສື່ຕ່າງໆເພື່ອສ້າງພາບພົດທາງບວກຂອງຜູ້ປະກອບກິດຈະການ;

(5) ຈັດຕັ້ງພິທີການມອບລາງວັນແກ່ຜູ້ປະກອບກິດຈະການ ແລະ ທຸລະກິດດີເດັ່ນປະຈຳປີ.

ເພື່ອໃຫ້ການຈັດຕັ້ງປະຕິບັດວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງໄດ້ດຳເນີນໄປຕາມແຜນ ສະນັ້ນ ພັກ ແລະ ລັດແຫ່ງ ສປປ ລາວ ຈຶ່ງໄດ້ກຳນົດເອົາ 6 ນະໂຍບາຍ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດທຸລະກິດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນຂອບເຂດທົ່ວປະເທດເພື່ອຮັບປະກັນໃຫ້ມີຄວາມຖືກຕ້ອງໂປ່ງໃສ ເພື່ອໃຫ້ມີການພັດທະນາ ແລະ ທັນສະໄໝເທື່ອລະກ້າວ.

## 3.4 ວິທີການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດທິດທາງໃນການສົ່ງເສີມວິສາຫະກິດຂອງວິສະຫະກິດຂະໜາດນ້ອຍ ແລະ ກາງ ຢູ່ແຂວງ ຈຳປາສັກໃຫ້ໄດ້ຮັບຜົນດີ ມີປະສິດທິຜົນສູງນັ້ນ ແຂວງຈຳປາສັກໄດ້ມີວິທີການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງດັ່ງນີ້:

### 3.4.1 ການປັບປຸງສະພາບແວດລ້ອມທາງດ້ານລະບຽບການ ແລະ ການຄຸ້ມຄອງຂອງລັດຕໍ່ການເຄື່ອນໄຫວທຸລະກິດ

(1) ການປັບປຸງລະບົບການຂຶ້ນທະບຽນວິສາຫະກິດ;

(2) ການປັບປຸງລະບົບການອອກໃບອະນຸຍາດ;

(3) ການພັດທະນາເວທີປຶກສາຫາລືລະຫວ່າງ ພາກລັດ ແລະ ທຸລະກິດ.

### 3.4.2 ປັບປຸງການເຂົ້າຫາແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ

(1) ເພີ່ມທະວີຄວາມສັກສິດໃນການຈັດຕັ້ງປະຕິບັດ ບັນດາກົດໝາຍໃນຂົງເຂດເສດຖະກິດ;

(2) ສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາທະນາຄານ ແລະ ສະຖາບັນການເງິນລວມທັງສະຖາບັນການເງິນຈຸລະພາກ;

(3) ຂະຫຍາຍຜະລິດຕະພັນ ແລະ ການບໍລິການດ້ານການເງິນໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ມີຄວາມຫຼາກຫຼາຍ;

(4) ສ້າງຄວາມສາມາດຂອງຜູ້ປະກອບກິດຈະການໃນການສ້າງແຜນທຸລະກິດທີ່ເປັນໄປໄດ້, ການຖືບັນຊີ ແລະ ການລາຍງານດ້ານການເງິນຂອງການດຳເນີນທຸລະກິດ;

(5) ສະໜອງແຫຼ່ງທຶນໃຫ້ທະນາຄານ ເພື່ອສ້າງເງື່ອນໄຂໃນການຂະຫຍາຍຕາໜ່າງການບໍລິການສິນເຊື່ອ ແລະ ແກ້ໄຂສະພາບຄ່ອງຂອງທະນາຄານ;

(6) ສ້າງຄວາມເຂັ້ມແຂງກອງທຶນສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ.

### 3.4.3 ການກໍ່ສ້າງຜູ້ປະກອບກິດຈະການໃໝ່

(1) ສືບຕໍ່ເອົາວິຊາກໍ່ສ້າງຜູ້ປະກອບກິດຈະການເຂົ້າໃນລະບົບການສຶກສາສາມັນ, ອາຊີວະສຶກສາ ແລະ ການສຶກສາຊັ້ນສູງ;

(2) ກະຕຸກຊຸກຍູ້ຊາວໜຸ່ມ ແລະ ນັກສຶກສາ ຫັນມາປະກອບອາຊີບໃນທຸລະກິດໂດຍຜ່ານໂຄງການ ແລະ ກິດຈະກຳຕ່າງໆ;

(3) ສ້າງສູນບົ່ມເພາະທຸລະກິດ ເພື່ອສ້າງຄວາມຊຳນານໃນການບໍລິຫານທຸລະກິດ ແລະ ການນຳໃຊ້ເຕັກໂນໂລຊີ ກ່ອນຈະອອກໄປສູ່ຕະຫຼາດແຂ່ງຂັນ;

(4) ຝຶກອົບຮົມຜູ້ທີ່ສົນໃຈໃນການຢາກເລີ່ມຕົ້ນທຸລະກິດໃໝ່;

(5) ສົ່ງເສີມໃຫ້ແມ່ຍິງເປັນຜູ້ປະກອບກິດຈະການຫຼາຍຂຶ້ນ;

(6) ສົ່ງເສີມທຸລະກິດໃຫ້ສຳປະທານທຸລະກິດ (Franchising Businesses).

### 3.4.4 ເພີ່ມທະວີການໃຫ້ການຊ່ວຍເຫຼືອ ແລະ ການບໍລິການພັດທະນາທຸລະກິດ

(1) ສ້າງຄວາມເຂັ້ມແຂງໃຫ້ແກ່ອົງການຈັດຕັ້ງທີ່ມີບົດບາດໃຫ້ການຊ່ວຍເຫຼືອ ແລະ ສະໜອງບໍລິການພັດທະນາທຸລະກິດ ທັງພາກລັດ ແລະ ພາກທຸລະກິດ;

(2) ພັດທະນາເຄື່ອງມື ແລະ ເຕັກນິກຕ່າງໆ ສຳລັບນຳໃຊ້ເຂົ້າໃນວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ;

(3) ສ້າງຖານຂໍ້ມູນກ່ຽວກັບອົງການ ແລະ ຊ່ຽວຊານທີ່ມີຄວາມຊຳນານ ແລະ ຄວາມຮູ້ດ້ານຕ່າງໆ ແລະ ນຳໃຊ້ບັນດາອົງການຈັດຕັ້ງ ແລະ ຜູ້ຊ່ຽວຊານເຫຼົ່ານັ້ນ ເພື່ອໃຫ້ການຊ່ວຍເຫຼືອ ແລະ ການບໍລິການດ້ານວິຊາການ.

### 3.4.5 ສົ່ງເສີມການເພີ່ມຜະລິດຕະພາບ ເພື່ອຍົກລະດັບຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ແລະ ການບໍລິການຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ

(1) ສ້າງແຜນດຳເນີນງານແຫ່ງຊາດໃນການສົ່ງເສີມເພີ່ມຜະລິດຕະພາບໃນຂົງເຂດວຽກງານພາກລັດ ແລະ ພາກທຸລະກິດ;

(2) ເພີ່ມທະວີການຮ່ວມມືກັບອົງການຜະລິດຕະພາບແຫ່ງອາຊີ (APO) ເພື່ອຍາດແຍ່ງບົດຮຽນ ແລະ ທຶນຮອນໃນວຽກງານສົ່ງເສີມເພີ່ມຜະລິດຕະພາບ;

(3) ນຳໃຊ້ເຄື່ອງມືທີ່ເປັນເຄື່ອງມືວິທະຍາໃນການປັບປຸງ ແລະ ເພີ່ມຜະລິດຕະພາບໃນການບໍລິຫານອົງກອນ ທັງພາກລັດ ແລະ ທຸລະກິດ;

(4) ສ້າງລະບົບ ແລະ ອົງກອນການຢັ້ງຢືນຄຸນນະພາບ ແລະ ມາດຕະຖານ.

### 3.4.6 ສົ່ງເສີມການເຂົ້າຫາຕະຫຼາດ ແລະ ການຂະຫຍາຍຕະຫຼາດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ

(1) ສ້າງຖານຂໍ້ມູນຂ່າວສານ ແລະ ສະໜອງຂໍ້ມູນຂ່າວສານກ່ຽວກັບໂອກາດດ້ານທຸລະກິດ ແລະ ຕະຫຼາດ;

(2) ຄົ້ນຄວ້າ ແລະ ກຳນົດຂະແໜງການຜະລິດຕະພັນ ແລະ ບໍລິການທີ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂອງແຂວງຈຳປາສັກ ມີທ່າແຮງ ແລະ ໄດ້ປຽບໂດຍສົມທຽບ;

(3) ໃຫ້ການສະໜັບສະໜູນວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການເຂົ້າຮ່ວມຕະຫຼາດນັດ ແລະ ງານວາງສະແດງສິນຄ້າ ທັງພາຍໃນ ແລະ ຕ່າງປະເທດ;

(4) ຈັດຕັ້ງປະຕິບັດຍຸດທະສາດອຳນວຍຄວາມສະດວກການຄ້າ ແລະ ສົ່ງອອກ;

(5) ການສົ່ງເສີມຕ່ອງໂສ້ມູນຄ່າເພີ່ມ (Value Chain).[48]

## 3.5 ອົງການທີ່ຮັບຜິດຊອບໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ

### 3.5.1 ອົງການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງຢູ່ແຂວງຈຳປາສັກ

ອົງການທີ່ຮັບຜິດຊອບໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງປະກອບດ້ວຍ 2 ອົງການຫຼັກໆດັ່ງນີ້:

[48] ແຜນການສົ່ງເສີມ ແລະ ພັດທະນາສິນຄ້າຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ, ປີ 2015, ໜ້າ 11.

1) ພະແນກອຸດສະຫະກຳການຄ້າໂດຍມີຫ້ອງການສົ່ງເສີມສິນຄ້າພາຍໃນເປັນຜູ້ເຮັດໜ້າທີ່ໃນການຊຸກຍູ້ສົ່ງເສີມ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໂດຍມີການປະສານສົມທົບກັບກະຊວງ ອຸດສາຫະກຳການຄ້າ ກົມສົ່ງເສີມ ແລະ ພັດທະນາວິສາຫະກິດຂະນ້ອຍ ແລະ ຂະໜາດກາງ;

2) ຫ້ອງການອຸດສາຫະກຳການຄ້າເມືອງ ແລະ ເທດສະບານແມ່ນໄດ້ກຳນົດໄວ້ຕ່າງຫາກ.

ພະແນກອຸດສາຫະກຳການຄ້າແຂວງ ຈຳປາສັກ ແມ່ນອົງການໜຶ່ງທີ່ມີໜ້າທີ່ໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ສະນັ້ນ ຕໍ່ກັບວຽກງານສົ່ງເສີມວນກ ໃຫ້ໄດ້ຮັບຜົນດີ ແລະ ສາມາດດຳເນີນໄປຕາມນະໂຍບາຍຂອງລັດວາງອອກ ເປັນຕົ້ນແມ່ນ ປະຕິບັດຕາມກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງໃຫ້ປະກົດຜົນເປັນຈິງ ພະແນກອຸດສາຫະກຳການຄ້າ ແຂວງ ມີການປະສານສົມທົບກັບຫ້ອງການ ແລະ ອົງການອື່ນທີ່ກ່ຽວ ພ້ອມກັນຈັດຕັ້ງປະຕິບັດຕາມຫຼັກການລວມທາງສູນກາງວາງອອກໂດຍມີການຜັນຂະຫຍາຍກົດໝາຍດັ່ງກ່າວໃຫ້ເປັນແຜນອັນລະອຽດຂອງແຂວງເພື່ອງ່າຍຕໍ່ກັບການຈັດຕັ້ງປະຕິບັດ ເພື່ອຊຸກຍູ້ການຜະລິດໃຫ້ກວ້າງຂວາງຂື້ນກວ່າເກົ່າໂດຍສົ່ງເສີມໃຫ້ທຸກພາກສ່ວນເສດຖະກິດເຂົ້າຮ່ວມຢ່າງຕັ້ງໜ້າ.

ພະແນກອຸດສາຫະກຳ-ການຄ້າມີການປະສານສົມທົບກັບທະນາຄານຄົ້ນຄ້ວາສ້າງການເພື່ອປ່ອຍສິນເຊື່ອຕາມກຸ່ມເປົ້າໝາຍ ແລະ ບັນດາໂຄງການການຜະລິດເປັນສິນຄ້າແບບຍືນຍົງ ແລະ ສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ.

ຈັດຕັ້ງປັບປຸງກຸ່ມຫັດຖະກຳໃຫ້ເຂັ້ມແຂງ ເອົາໃຈໃສ່ຍົກລະດັບຄຸນນະພາບຜະລິດຕະພັນ ແລະ ຊອກຫາຕະຫຼາດຫັດຖະກຳຢູ່ຕ່າງປະເທດ, ສົມທົບກັບຄະນະກຳມະການກິລາແຫ່ງຊາດ, ຈັດຕັ້ງການຜະລິດເຄື່ອງທີ່ລະນຶກເພື່ອຕ້ອນຮັບງານມະຫາກຳລະດັບແຂວງ ແລະ ລະດັບຊາດຈັດຕັ້ງເທດສະການ ແລະ ງານຕະຫຼາດນັດເປັນປະຈຳເພື່ອໂຄສະນາ, ຈຳໜ່າຍຜະລິດຕະພັນສິນຄ້າອຸດສາຫະກຳ, ແລກປ່ຽນບົດຮຽນຂໍ້ມູນຂ່າວສານຕ່າງໆ.[49]

### 3.5.2 ການຈັດຕັ້ງປະຕິບັດມາດຕະການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຢູ່ແຂວງ ຈຳປາສັກໃນໄລຍະຜ່ານມາ

- ການສ້າງສະພາບແວດລ້ອມເອື້ອຍອຳນວຍໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຍັງມີຄວາມສັບສົນຫຍຸ້ງຍາກຫຼາຍຢ່າງ ເປັນຕົ້ນ ແມ່ນການນຳໃຊ້ລະບົບການອອກອະນຸຍາດຂອງຂະແໜງການທີ່ກ່ຽວຂ້ອງກ່ອນການຂຶ້ນທະບຽນ, ການຮຽກ

[49]ພະແນກແຜນການ ແລະ ການລົງທຶນ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ VIII (2016-20120), ແຂວງ ຈຳປາສັກ, ໜ້າ 57.

ຮ້ອງໃຫ້ມີການປະກອບຫຼາຍເອກະສານທີ່ບໍ່ຈຳເປັນ ຊຶ່ງລວມທັງໝົດ ມີສິບກ່ວາສະບັບ[50]. ແລະອີກດ້ານໜຶ່ງໃນການຈັດຕັ້ງປະຕິບັດນິຕິກຳຕ່າງໆຍັງບໍ່ທັນມີຄວາມສັກສິດ, ຜູ້ປະກອບກິດຈະການຍັງຖືເບົາຕໍ່ລະບຽບການຕ່າງໆ, ການດຳເນີນທຸລະກິດບໍ່ໄປຕາມການອະນຸຍາດ, ບາງວິສາຫະກິດມີການໃຫ້ເຊົ່າກິດຈະການ ແລະ ຈ້າງຄົນອື່ນເຊິ່ງບໍ່ແມ່ນພະນັກງານຂອງວິສາຫະກິດໃຫ້ມາພົວພັນ, ການປະກອບທຶນຂອງວະສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງທີ່ເປັນຊັບສົມບັດສ່ວນຫຼາຍແມ່ນຍັງບໍ່ທັນຊັດເຈນ ແລະ ແທດເໝາະກັບຕົວຈິງເປັນຕົ້ນແມ່ນການຕີລາຄາມູນຄ່າຊັບສົມບັດ ສູງເກີນຄວາມເປັນຈິງ, ວິສາຫະກິດຈຳນວນໜຶ່ງບໍ່ທັນມີທີ່ຕັ້ງສຳນັກງານທີ່ແທ້ຈິງ ແລະ ຍັງມີການປ່ຽນແປງທີ່ຕັ້ງ, ແລະ ປ່ຽນແປງເປົ້າໝາຍການດຳເນີນທຸລະກິດ, ຍັງມີວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຈຳນວນຫຼວງຫຼາຍທີ່ໄດ້ຮັບອະນຸຍາດຂຶ້ນທະບຽນແລ້ວໃນທຸກໆປີບໍ່ໄດ້ມາແຈ້ງການເຄື່ອນໄຫວເຮັດໃຫ້ເກີດມີຄວາມຫຍຸ້ງຍາກໃນການຕິດຕາມກວດກາ, ກ່ຽວກັບດ້ານລະບຽບການຄ້າ, ການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການບໍລິການໃນຊ່ວງທີ່ມີການຂົນສົ່ງພາຍໃນປະເທດເຖິງວ່າຈະມີບາດກ້າວໃໝ່ໃນທາງບວກແຕ່ກໍຍັງມີຫຼາຍປະກົດການເກີດຂຶ້ນຢູ່ຕາມຊາຍແດນ, ຕົວເມືອງ, ເສັ້ນທາງຂົນສົ່ງຕ່າງໆເຊັ່ນ: ຄ້າ-ຂາຍເຖື່ອນ ແລະ ອື່ນໆເຊິ່ງເປັນສິ່ງກີດຂວາງຕໍ່ການຜະລິດຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ.

- ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຂາດແຄນທາງດ້ານທຶນຮອນ ແລະ ບໍສາມາດເຂົ້າຫາແຫຼ່ງທຶນໄດ້, ການເງິນຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ສ່ວນຫຼາຍແມ່ນຍັງຢູ່ໃນສະພາບອ່ອນແອ, ຂາດເງິນ ແລະ ຂາດປະສິດທິພາບທາງດ້ານການເງິນ, ຕະຫຼາເງິນທຶນກໍຍັງບໍທັນເປັນຕົວເປັນຕົນ, ບໍ່ທັນກາຍເປັນປັດໃຈກະຕຸກຊຸກຍູ້ການເຄື່ອນໄຫວທຸລະກິດໃຫ້ມີການຂະຫຍາຍຕົວ, ແຫຼ່ງທຶນທີ່ມີຢູ່ກໍກະແຈກກະຈາຍບໍ່ສາມາດຈັດເກັບທ້ອນ ຫຼື ສະສົມເພື່ອການລົງທຶນໄດ້ພໍເທົ່າໃດ, ໃນຄະນະດຽວກັນລັດພັດບໍ່ທັນມີນະໂຍບາຍອັນລະອຽດ ແລະ ເພື່ອດຶງດູດການລົງທຶນພາຍໃນເຂົ້າໃນການຜະລິດທຸລະກິດຈາກລະດັບນ້ອຍຫາໃຫ່ຍ. ຈາກນັ້ນ ຈາກນັ້ນ ຈຶ່ງເຮັດໃຫ້ຜົນກະທົບດ້ານລົບຕາມມາຄື: ຈຳກັດການເຕີບໃຫ່ຍຂະຫຍາຍຕົວຂອງການເຄື່ອນໄຫວທຸລະກິດ, ບາງທຸລະກິດດຳເນີນຕໍ່ໄປບໍ່ໄດ້ກໍ່ຍົກເລີກ ຫຼື ລົ້ມລະລາຍໄປ, ຍ້ອນວ່າບໍ່ມີທຶນປະກອບເຕັກນິກ, ເຕັກໂນໂລຊີຄືນໃໝ່ເຮັດໃຫ້ສະມັດຕະພາບຂອງງານຕ່ຳ, ຄຸນະພາບຜະລິດຕະພັນ ແລະ ການບໍລິການບໍ່ໄດ້ມາດຕະຖານ, ລາຄາສຳເລັດຮູບຊ້ຳພັດສູງ, ຈຶ່ງບໍ່ສາມາດແກ້ງແຍ່ງແຂ່ງຂັນໃນຕະຫຼາດທັງພາຍໃນ ແລະ ຕ່າງປະເທດ, ຈາກທຸລະກິດບໍ່ຂະຫຍາຍຕົວຈຶ່ງບໍ່ສາມາດສ້າງວຽກເຮັດງານທຳເພື່ອດຶງດູດເອົາແຮງງານເພີ່ມເຂົ້າໃນຂະບວນການຜະລິດທຸລະກິດ, ອີກດ້ານໜຶ່ງການເຂົ້າເຖິງ

[50]ບົດລາຍງານສະພາບການພັດທະນາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ, ປີ 2016, ໜ້າ 2.

ແຫຼ່ງທຶນຈາກທະນາຄານ ແລະ ສະຖາບັນການເງິນຕ່າງໆຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຍັງມີຄວາມຍຸ້ງຍາກທັງນີ້ກໍຍ້ອນວ່າທະນາຄານບໍ່ສາມາດປ່ອຍເງິນກູ້ໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ຍ້ອນວ່າວິສາຫະກິດດັ່ງກ່າວນີ້ ສ່ວນຫຼາຍແມ່ນບໍ່ມີຊັບສິນເປັນຫຼັກຊັບຄ້ຳທີ່ ໃນເມື່ອວິສາຫະກິດບໍ່ສາມາດກູ້ເງິນຢູ່ໃນລະບົບທະນາຄານ ແລະ ສະຖາບັນການເງິນຕ່າງໆໄດ້ນັ້ນວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຈຶ່ງຫັນໄປສູ້ການຢືມເງິນນອກລະບົບ ດ້ວຍອັດຕາດອກເບ້ຍສູງສະນັ້ນ ເປັນສາເຫດເຮັດໃຫ້ຕົ້ນທຶນໃນການຜະລິດສິນຄ້າສູງ ບໍ່ສາມາດແກ້ງແຍ່ງແຂ່ງຂັນສິນຄ້າພາຍໃນ ແລະ ສິນຄ້ານຳເຂົ້າຈາກຕ່າງປະເທດໄດ້[51].

- ຄວາມສາມາດໃນການແຂ່ງຂັນຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຍັງຢູ່ໃນລະດັບຕ່ຳ, ສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງທີ່ຖືກສ້າງຕັ້ງຂຶ້ນ ແລະ ໄດ້ເຄື່ອນໄຫວສ່ວນໃຫ່ຍແມ່ນການຫັນປ່ຽນອາຊີບຈາກການຜະລິດດ້ານກະສິກຳ ແລະ ການເຂົ້າມາສູ້ຕົວເມືອງຂອງຊາວຊົນນະບົດແລ້ວປະກອບອາຊີບທຸລະກິດ ສະນັ້ນ, ຜູ້ປະກອບການສະນັ້ນຜູ້ປະກອບການດັ່ງກ່າວແມ່ນບໍ່ໄດ້ຮັບການບຳລຸງໃນດ້ານສີມືແຮງງານ, ຂາດຄວາມຮູ້ຄວາມສາມາດ ຂາດປະສົບການໃນດ້ານທຸລະກິດ, ເຕັກນິກ-ເຕັກໂນໂລຊີຕ່ຳເປັນສາເຫດເຮັດໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ບໍ່ໄດ້ຮັບການພັດທະນາດ້ານຜະລິດຕະພາບ, ຄຸນນະພາບ, ພ້ອມກັນນັ້ນ, ຜະລິດຕະພັນທີ່ຜະລິດອອກມາກໍຍັງມີນ້ອຍບວກກັບລາຄາສູງ ຈຶ່ງບໍ່ສາມາດແຂ່ງຂັນຢູ່ໃນຕະຫຼາດພາຍໃນແຂວງ ຈຳປາສັກ ແລະ ພາຍໃນປະເທດໄດ້ ໂດຍສະເພາະຊາວຄ້າຂາຍຕ່າງປະເທດນັບມື້ນັບເພີ່ມຂຶ້ນ ເຊິ່ງມີປະລິມານຫຼາຍ ແລະ ລາຄາຖືກກວ່າ ດັ່ງນັ້ນ ຈຶ່ງເຮັດໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ຢູ່ແຂວງ ຈຳປາສັກ ບໍ່ສາມາດແຂ່ງຂັນໄດ້.

- ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຍັງປະສົບກັບບັນຫາຕະຫຼາດ ຍ້ອນວ່າ ການນຳໃຊ້ສື່ຕ່າງໆເຂົ້າໃນການໂຄສະນາກໍບໍ່ທົ່ວເຖິງ ແລະ ບາງສື່ກໍມີຄ່າໃຊ້ຈ່າຍສູງໃນການເຂົ້າໄປໃຊ້ການບໍລິການ, ພ້ອມດຽວກັນນັ້ນວິສາຫະກິດຂະໜາດນ້ອຍ ແລະ ກາງ ຍັງມີສິນຄ້າໃຫ້ເລືອກນ້ອຍ ແລະ ບໍ່ພຽງພໍກັບຄວາມຕ້ອງການຂອງຕະຫຼາດ ບາງສິນຄ້າກໍມີລາຄາສູງເມື່ອທຽບກັບຄູ່ແຂ່ງ, ຜູ້ບໍລິໂພກສ່ວນຫຼວງຫຼາຍແມ່ນມີແນວຄິດນິຍົມຊົມຊອບຜະລິດຕະພັນຂອງຕ່າງປະເທດໃນເວລາດຽວກັນນັ້ນຂະໜາດ ແລະ ຄວາມອາດສາມາດຕະຫຼາດພາຍໃນແມ່ນມີນ້ອຍ, ໂດຍອີງໃສ່ຄວາມສາມາດຊື້ຂອງຜູ້ບໍລິໂພກ, ຂອບເຂດຕະຫຼາດສ່ວນໃຫ່ຍແມ່ນຢູ່ອ້ອມແອ້ມໝູ່ບ້ານ ແລະ ຕົວເມືອງພາຍໃນແຂວງທີ່ມີວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຕັ້ງຢູ່.

---

[51]ບົດລາຍງານສະພາບການພັດທະນາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ, ປີ 2016, ໜ້າ 2.

- ການຮ່ວມກຸ່ມທຸລະກິດໄດ້ກຳນົດວ່າ ລັດສົ່ງເສີມ ການຮ່ວມກຸ່ມຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ຕາມລະບຽບກົດໝາຍສ້າງເງື່ອນໄຂໃຫ້ ວິສາຫະກິດດັ່ງກ່າວໄດ້ຮ່ວມມື ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ສຳລັບແຂວງ ຈຳປາສັກ ແລ້ວຍັງບໍ່ທັນໄດ້ຮ່ວມມືເທົ່າທີ່ຄວນຍ້ອນ ວິສາຫະກິດຂະໜາດນ້ອຍ ແລະ ກາງ ຍັງບໍ່ທັນຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ບໍ່ທັນເຫັນໄດ້ຄວາມສຳຄັນຂອງອົງການຈັດຕັ້ງທຸລະກິດ, ຍ້ອນຂະແໜງການທີ່ກ່ຽວຂ້ອງບໍ່ທັນໄດ້ຊຸກຍູ້ ແລະ ບໍ່ທັນສ້າງເງື່ອນໄຂໃຫ້ເກີດອົງການຈັດຕັ້ງດັ່ງກ່າວ, ພາກທຸລະກິດກໍ່ຍັງບໍ່ທັນເຕົ້າໂຮມເປັນກຸ່ມ ເພື່ອພ້ອມກັນສ້າງລະບຽບການທີ່ເປັນເອກະພາບໃນການດຳເນີນງານ ແລະ ສ້າງຄວາມເຂັ້ມແຂງໃນການສະໜອງການບໍລິການໃຫ້ແກ່ສະມາຊິກ, ສະນັ້ນ ວິສາຫະກິດຂະໜາດນ້ອຍ ແລະ ກາງ ຕ້ອງໄດ້ເພິ່ງຕົນເອງ ແລະ ບໍ່ສາມາດຂະຫຍາຍກິດຈະການຂອງຕົນໄດ້ຢ່າງຄ່ອງຕົວ.

- ຫົວໜ່ວຍທຸລະກິດດ້ານການຄ້າຍັງບໍ່ທັນມີຄວາມເຂັ້ມແຂງ, ຍ້ອນວ່າທຸລະກິດທີ່ເຮັດການຄ້າຍັງບໍ່ທັນມີຄວາມສາມາດພຽງພໍ, ຄວາມຮູ້ກ່ຽວກັບການຄ້າລະຫວ່າງປະເທດຍັງຢູ່ໃນລະດັບຕ່ຳການພົວພັນກໍຍັງຢູ່ໃນວົງແຄບໄປພ້ອມໆກັບການສ້າງເງື່ອນໄຂສົ່ງອອກສິນຄ້າໃນການເຈລະຈາຕໍ່ລອງຍັງມີອຳນາດຕ່ຳ, ພາກສ່ວນລັດວິສາຫະກິດທີ່ເຮັດການຄ້າ ຍັງບໍ່ທັນເຂົ້າສູ່ຮູບແບບການຄຸ້ມຄອງຂອງບໍລິສັດທີ່ທັນສະໄໝ ແລະ ເປັນເຈົ້ານຳໜ້າພາທາງແກ່ວິສາຫະກິດເອກະຊົນໃນການເຄື່ອນໄຫວເຂົ້າສູ່ແວດວົງທຸລະກິດລະດັບຊາດ ແລະ ສາກົນ.

ທັງໝົດເຫຼົ່ານີ້ແມ່ນລ້ວນແລ້ວແມ່ນບັນຫາທີ່ເກີດຂຶ້ນຕໍ່ກັບວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງ ຈຳປາສັກ, ບັນຫາດັ່ງກ່າວອາດເປັນຜົນກະທົບດ້ານລົບຕໍ່ການດຳເນີນທຸລະກິດຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຖ້າບໍ່ໄດ້ຮັບການພັດທະນາແລ້ວວິສາຫະກິດດັ່ງກ່າວກໍຈະເຄື່ອນໄຫວໃນລັກສະນະຢູ່ບ່ອນເກົ່າ, ສຸດທ້າຍກໍອາດຈະລົ້ມລະລາຍໄດ້.

### 3.5.3 ແຜນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງຢູ່ແຂວງຈຳປາສັກໃນຕໍ່ໜ້າ

ໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງຢູ່ແຂວງຈຳປາສັກໃນຕໍ່ໜ້າພະແນກອຸດສາຫະກຳ ແລະ ການຄ້າໄດ້ມີແນວທາງນະໂຍບາຍໃນການສົ່ງເສີມດັ່ງນີ້:

- ຈັດຕັ້ງປະຕິບັດແຜນດຳເນີນງານໂຄງການສົ່ງເສີມການຜະລິດເປັນສິນຄ້າ ແລະ ການຄ້ຳປະກັນສະບຽງອາຫານໃນສ່ວນຄວາມຮັບຜິດຊອບຂອງຂະແໜງອຸດສາຫະກຳ ແລະ ການຄ້າຕາມມະຕິກອງປະຊຸມໃຫຍ່ຄັ້ງທີ VII ຂອງຄະນະພັກແຂວງຈຳປາສັກ.

- ສົ່ງເສີມການເຂົ້າເຖິງແຫຼ່ງທຶນ ສຳລັບວິສາຫະກິດຂະໜາດນ້ອຍ ແລະ ກາງ, ພັດທະນາຜະລິດຕະພາບ ແລະ ການບໍລິການທາງດ້ານສິນເຊື່ອ ແລະ ດ້ານການເງິນໃຫ້ແກ່

ວນກ ໃຫ້ມີຄວາມຫຼາກຫຼາຍ, ສ້າງຄວາມເຂັ້ມແຂງໃຫ້ບັນດາທະນາຄານ ແລະ ສະຖາບັນການເງິນລວມທັງສະຖາບັນການເງິນຈຸລະພາກ ສ້າງຄວາມອາດສາມາດໃຫ້ ວນກ ເຂົ້າເຖິງແຫຼ່ງທຶນ ຍົກລະດັບກອງທຶນສົ່ງເສີມໃຫ້ກາຍເປັນສະຖາບັນການເງິນສະເພາະກິດ ສົ່ງເສີມການເຂົ້າເຖິງສິນເຊື່ອຂອງວນກ ດ້ວຍການສ້າງໂຄງການສະໜັບສະໜູນແຫຼ່ງທຶນໄລຍະຍາວແກ່ທະນາຄານທຸລະກິດ ທີ່ສົນໃຈປ່ອຍກູ້ໃຫ້ຕະຫຼາດ ວນກ ແລະ ສ້າງກອງທຶນແບ່ງປັນຄວາມສ່ຽງ ເພື່ອຊຸກຍູ້ໃຫ້ທະນາຄານທຸລະກິດ ໃຫ້ການບໍລິການແກ່ ວນກ ຫຼາຍຂຶ້ນ. ເລັ່ງລັດການພັດທະນາລະບົບການຊໍາລະສະສາງແຫ່ງຊາດ, ປັບປຸງປະສິດທິພາບ ແລະ ສ້າງຕັ້ງການຈົດທະບຽນຊັບສິນທີ່ເປັນສັງຫາລິມະຊັບປັບປຸງການເຂົ້າເຖິງການບໍລິການດ້ານການເງິນຂອງວິສາຫະກິດທີ່ຢູ່ເຂດຊົນນະບົດ ຜ່ານການສົ່ງເສີມການທະນາຄານຜ່ານໂທລະສັບມືຖືແລະ ຜ່ານອີເລັກໂຕຣນິກ ໂດຍການສ້າງລະບຽບການຄຸ້ມຄອງທີ່ກ່ຽວຂ້ອງຕ່າງໆ.

- ປະຕິບັດຕາມກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະກາງໃຫ້ເປັນຮູບປະທໍາ ແລະ ສືບຕໍ່ປະຕິບັດ 06 ວຽກງານບູລິມະສິດໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຢູ່ແຂວງ ຈໍາປາສັກຄື: 1. ສົ່ງເສີມຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກໍາ, 2.ສົ່ງເສີມການເຂົ້າເຖິງແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ, 3.ສົ່ງເສີມການເຂົ້າເຖິງການບໍລິການໃຫ້ຄໍາປຶກສາພັດທະນາທຸລະກິດ, 4.ສົ່ງເສີມການເຂົ້າເຖິງ ແລະ ການຂະຫຍາຍຕະຫຼາດທັງພາຍໃນແລະຕ່າງປະເທດ, 5.ສ້າງ ແລະ ພັດທະນາຜູ້ປະກອບກິດຈະການ, 6.ສ້າງສະພາບແວລ້ອມທີ່ເອື້ອອໍານວຍໃຫ້ແກ່ການສ້າງຕັ້ງ ແລະ ດໍາເນີນທຸລະກິດ.

- ສົ່ງເສີມ ແລະ ພັດທະນາຕາໜ່າງຕະຫຼາດອອກສູ່ຊົນນະບົດຫ່າງໄກສອກຫຼີກ

- ຊຸກຍູ້ສົ່ງເສີມ ແລະ ເອື່ອອໍານວຍໃນການຈັດຕັ້ງປະຕິບັດນະໂຍບາຍສິນຄ້າ "ໜຶ່ງເມືອງໜຶ່ງຜະລິດຕະພັນ" (ODOP).

- ສົ່ງເສີມຫົວຄິດປະດິດສ້າງໃນການພັດທະນາສິນຄ້າ, ຊຸກຍູ້ໃຫ້ທຸລະກິດໄດ້ຮັບການຊ່ວຍເຫຼືອມີການປະກອບສ່ວນຮ່ວມກັບກອງທຶນຂອງລັດ.

- ນໍາໃຊ້ທຸກຮູບການສົ່ງເສີມ ແລະ ພັດທະນາສິນຄ້າໃຫ້ມີປະສິດທິຜົນເຊັ່ນການຈັດງານວາງສະແດງທັງພາຍໃນ ແລະ ຕ່າງປະເທດ, ສົ່ງເສີມການພັດທະນາສິນຄ້າໂດຍຜ່ານສື່ສານມວນຊົນທຸກຮູບແບບລວມທັງຜ່ານສະຖານທູດລາວຢູ່ຕ່າງປະເທດ, ຜູ້ຕາງໜ້າການຄ້າ, ການຈັດສໍາມະນາ ແລະ ການຝຶກອົບຮົມສະໜອງຂໍ້ມູນໃຫ້ນັກທຸລະກິດ.[52]

---

[52]ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງຈໍາປາສັກ, ແຜນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VII ຂອງຄະນະປະຈໍາພັກແຂວງຈໍາປາສັກ ແລະ ແຜນພັດທະນາເສດຖະກິດ ຄັ້ງທີ VIII ຂອງແຂວງຈໍາປາສັກ ແຕ່ປີ 2016-2020 ໃນຂົງເຂດອຸດສາຫະກໍາ ແລະ ການຄ້າ, ປີ 2015, ໜ້າ 12.

### 3.6 ບັນຫາ ແລະ ການແກ້ໄຂບັນຫາໃນການສົ່ງເສີມວິສາຫະກິດສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ

ໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກທີ່ຜ່ານຍັງພົບບັນຫາຂໍ້ຫຍຸ້ງຍາກຫຼາຍປະການ ເພື່ອໃຫ້ພາກສ່ວນທີ່ກ່ຽວຂ້ອງຊອກຫາວິທີທາງໃນການແກ້ໄຂໃນຕໍ່ໜ້າ ໂດຍຈະມີບັນຫາ ແລະ ແນວທາງໃນການແກ້ໄຂດັ່ງນີ້:

#### 3.6.1 ບັນຫາໃນການສົ່ງເສີມວິສາຫະກິດສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ

**1) ບັນຫາການບຸກຄະລາກອນ**

ຂໍ້ຈຳກັດທາງດ້ານພະນັກງານ ບໍ່ວ່າຈະເປັນທາງດ້ານຈຳນວນ ແລະ ຄຸນນະພາບ ເຮັດໃຫ້ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍຂອງລັດຖະບານໃນການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ມີຄວາມຊັກຊ້າແກ່ຍາວເວລາ, ບໍ່ສາມາດຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງວຽກງານ ແລະ ສະພາບການໃນແຕ່ລະໄລຍະ. ບຸກຄະລາກອນທີ່ຈະມາເຮັດວຽກການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ຢູ່ແຂວງຈຳປາສັກ ນອກຈາກມີຈຳນວນຈຳກັດແລ້ວສ່ວນໃຫຍ່ເປັນພະນັກງານໜຸ່ມນ້ອຍຮຽນຈົບໃໝ່, ເຖິງຈະມີຄວາມຮູ້ແຕ່ກໍ່ຍັງຂາດປະສົບການໃນການປະຕິບັດວຽກງານວິຊາສະເພາະ, ຊຶ່ງໂດຍທົ່ວໄປແລ້ວ ຈະຕ້ອງໄດ້ໄຊ້ເວລາຝຶກອົກຫຼາຍປີເພື່ອໃຫ້ມີຄວາມສາມາດໃນລະດັບທີ່ແນ່ນອນ.[53]

**2) ບັນຫາເລື່ອງຂາດທຶນຮອນ**

ງົບປະມານຈຳກັດເຮັດໃຫ້ການປະຕິບັດວຽກງານສ່ວນໃຫຍ່ແມ່ນຕ້ອງໄດ້ອາໃສແຕ່ການຊ່ວຍເຫຼືອຂອງຕ່າງປະເທດເປັນຫຼັກຊຶ່ງສ່ວນໃຫຍ່ແມ່ນເປັນໄປຕາມຍຸດທະສາດ ແລະ ແຜນການຊ່ວຍ ເຫຼືອຂອງຜູ້ໃຫ້ທຶນ, ເຮັດໃຫ້ບາງມາດຕະການ ແລະ ໂຄງການທີ່ກຳນົດໄວ້ບໍ່ໄດ້ຮັບການຈັດຕັ້ງປະຕິບັດ. ນອກນັ້ນ ການຂາດຄວາມເປັນອິດສະຫຼະທາງດ້ານງົບປະມານ ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານບໍ່ມີຄວາມຄ່ອງຕົວ ໂດຍສະເພາະແມ່ນໃນກໍລະນີວຽກງານເລັ່ງດ່ວນ.

**3) ບັນຫາກົນໄກການປະສານງານ ແລະ ການຮ່ວມມືຈາກພາກສ່ວນກ່ຽວຂ້ອງ**

ອຳນາດການປົກຄອງທ້ອງຖິ່ນສ່ວນໜຶ່ງຍັງບໍ່ທັນມີປະສົບການພຽງພໍໃນການຈັດຕັ້ງປະຕິບັດວິທີການ ແລະ ມາດຕະການຕາມທີ່ກຳນົດໄວ້ໃນຍຸດທະສາດພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ຂອງລັດຖະບານ. ການປະສານງານສາຍຕັ້ງຂອງທ້ອງຖິ່ນ

---

[53]ພະແນກແຜນການ ແລະ ການລົງທຶນ ແຂວງ ຈຳປາສັກ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ VIII (2016-20120), ໜ້າ 50.

ແມ່ນໄດ້ອາໄສພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ ຊຶ່ງໂດຍລວມພະນັກງານທີ່ມີຄວາມຮູ້ໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງຍັງມີຈຳກັດ.

### 3.6.2 ວິທີການແກ້ໄຂບັນຫາໃນການສົ່ງເສີມວິສາຫະກິດສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ

ໃນການແກ້ໄຂບັນຫາທີ່ສຳຄັນຂອງວຽກງານສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງມີວິທີການແກ້ໄຂສະເພາະດ້ານມີດັ່ງນີ້:

**1) ດ້ານບຸກຄະລາກອນ**

ລັດຖະບານຄວນປະກອບບຸກຄະລາກອນໃນຈຳນວນທີ່ເໝາະສົມ ກັບໜ້າທີ່ຄວາມຮັບຜິດຊອບຕົວຈິງຂອງການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ເນື່ອງຈາກວ່າຢູ່ແຂວງຈຳປາສັກຍັງຂາດຂະແໜງການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງເປັນອັນສະເພາະ ແຕ່ຄວາມຮຽກຮ້ອງຕ້ອງການໃນການພັດທະນາແມ່ນຢູ່ໃນລະດັບສູງ. ສະນັ້ນ, ລັດຖະບານຄວນພິຈາລະນາອະນຸມັດໂກຕາພະນັກງານເປັນອັນສະເພາະໃຫ້ໂດຍບໍ່ເອົາລວມເຂົ້າກັບໂກຕາຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງຈຳປາສັກ. ພ້ອມດຽວກັນນັ້ນກໍ່ຕ້ອງໄດ້ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານຂອງໜ່ວຍງານຮັບຜິດຊອບການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ໜ່ວຍງານທີ່ກ່ຽວຂ້ອງໃຫ້ມີຄວາມຮູ້, ຄວາມຊຳນານງານ ແລະ ມີຄວາມເປັນມືອາຊີບໃນດ້ານຕ່າງໆ ເພື່ອຈະສາມາດໃຫ້ການຊ່ວຍເຫຼືອວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ຢ່າງມີປະສິດທິພາບ.

**2) ດ້ານທຶນຮອນ**

ຕ້ອງສ້າງຕັ້ງກອງທຶນສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງຢູ່ຂັ້ນແຂວງໃຫ້ເປັນຮູບປະທຳໂດຍໄວ ເພື່ອໃຫ້ມີທຶນຮອນທີ່ໝັ້ນຄົງ ແລະ ຕໍ່ເນື່ອງມານຳໃຊ້ເຂົ້າໃນການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ເປັນໄປຕາມນະໂຍບາຍ ແລະທິດຊີ້ນຳຂອງລັດຖະບານໃນແຕ່ລະໄລຍະທັງສາມາດສະໜອງທຶນໃຫ້ໂຄງການ ແລະ ກິດຈະກຳການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງໃນດ້ານຕ່າງໆໄດ້ຢ່າງທັນການ ແລະ ເໝາະສົມ. ພ້ອມດຽວກັນນັ້ນ, ລັດຖະບານກໍ່ຄວນສະໜອງງົບປະມານຢ່າງຕໍ່ເນື່ອງຈາກງົບປະມານປົກກະຕິຂອງລັດຖະບານ, ການຊ່ວຍເຫຼືອລ້າ ຫຼື ການກູ້ຢືມດອກເບ້ຍຜ່ອນຜັນຈາກຕ່າງປະເທດ. ສ້າງເງື່ອນໄຂໃຫ້ການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ມີຄວາມເປັນອິດສະຫຼະໃນການບໍລິຫານ

ງົບປະມານຫຼາຍຂື້ນ ລວມທັງການຂື້ນແຜນງົບປະມານເປັນອັນສະເພາະສຳລັບວຽກງານສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນແຕ່ລະສົກປີງົບປະມານ.[54]

**3) ກົນໄກການປະສານງານ ແລະ ການຮ່ວມມືຈາກພາກສ່ວນກ່ຽວຂ້ອງ**

ຈະຕ້ອງໄດ້ເພີ່ມທະວີການປະສານງານ ແລະ ຊຸກຍູ້ໃຫ້ພາກສ່ວນກ່ຽວຂ້ອງໃນລະດັບສູນກາງ ແລະ ທ້ອງຖິ່ນ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ປະກົດຜົນເປັນຈິງ, ແນໃສ່ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການສ້າງຕັ້ງ ແລະ ດຳເນີນທຸລະກິດລວມທັງການສ້າງຄວາມສາມາດໃນການແຂ່ງຂັນວິສາຫະກິດຂະໜາດນ້ອຍ ແລະ ກາງ ຂອງແຂວງຈຳປາສັກ ເພື່ອໃຫ້ສາມາດຮັບມືກັບສິ່ງທ້າທ້າຍພາຍໃຕ້ເງື່ອນໄຂຂອງການເປີດເສລີທາງການຄ້າ. ໃນຕໍ່ໜ້າຈະຕ້ອງໄດ້ພະຍາຍາມຂະຫຍາຍເຄືອຂ່າຍການຈັດຕັ້ງສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ລົງສູ່ແຕ່ລະທ້ອງຖິ່ນ, ເປັນຕົ້ນແມ່ນການສ້າງຕັ້ງສູນ ຫຼື ຫ້ອງການຜູ້ຕາງໜ້າປະຈຳພາກ ຫຼື ແຂວງ ແລະ ຕົວເມືອງຕ່າງໆໃນແຂວງ. ນອກຈາກນັ້ນ ກໍ່ຈະຕ້ອງໄດ້ເອົາໃຈໃສ່ເພີ່ມທະວີການກະຈາຍຂ່າວສານກ່ຽວກັບວິທີການ ແລະ ມາດຕະການໃນການສະໜັບສະໜູນວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ພາກສ່ວນຕ່າງໆໃນສັງຄົມໃຫ້ມີຄວາມເຂົ້າໃຈທີ່ເປັນເອກະພາບ ແລະ ເປັນແມ່ແຮງໃນການພັດທະນາ.

## 4. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

**Kyophilavong Phouphet**, Determine the Performance of SME in Vientiane and Other Provinces, ຜົນການວິໄຈພົບວ່າອັດຕາແລກປ່ຽນເງິນຕາຕ່າງປະເທດບໍ່ຄົງທີ່ເຮັດເສດຖະກິດຜັນຜວນ ແລະ ການໄດ້ມາຊຶ່ງກຳມະສິດໃນຊັບສິນຂອງຜູ້ປະກອບການພາຍໃນປະເທດ ມີຜົນກະທົບດ້ານລົບຕໍ່ປະສິດທິພາບຂອງຜູ້ປະກອບກິດຈະ ການຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ເນື່ອງຈາກວ່າຜູ້ປະກອບການຍັງຂາດທຶນຮອນ ແລະ ແຮງງານເຖິງແມ່ນວ່າລັດຖະບານຈະອຳນວຍຄວາມສະດວກໃຫ້ຜູ້ປະກອບກິດຈະການຂະໜາດນ້ອຍ ແລະ ຂະໜາດກາງໃຫ້ເຂົ້າເຖິງທຶນຮອນ ແລະ ແຮງງານໃຫ້ໄດ້ຫຼາຍທີ່ສຸດແລ້ວກໍຕາມແຕ່ກໍຍັງມີຈຳນວນໜ້ອຍ ແລະ ການສຶກສາດັ່ງກ່າວຍັງບໍ່ສາມາດສະແດງໃຫ້ເຫັນເຖິງ ປະສິດທິພາບຂອງວິສາຫະກິດທີ່ເປັນທຸລະກິດຄອບຄົວໄດ້ຢ່າງຊັດເຈນເຊັ່ນ ຫັດຖະກຳ, ໄມ້ແປຮູບ ແລະ ສິນຄ້າທີ່ມີລັກສະນະຄ້າຍຄືກັນ[55].

---

[54] ພະແນກແຜນການ ແລະ ການລົງທຶນ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ VIII (2016-2020), ແຂວງ ຈຳປາສັກ, ໜ້າ 51.

[55] Kyophilavong Phouphet, Determine the Performance of SME in Vientiane and Other Provinces, Lao Journal of Economic and Business Management, December 2007.

**ຊົງພົນ ທອງສິນ,** ວິທະຍານິພົນໃນຫົວຂໍ້: ມາດຕະການທາງດ້ານກົດໝາຍກ່ຽວກັບການສົ່ງເສີມວິສະຫາກິດຂະໜາດນ້ອຍ ແລະ ກາງ, ຜົນຂອງການສຶກສາພົບວ່າ ບັນຫາຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ແມ່ນການຂາດສະພາບຄ່ອງທາງດ້ານການເງິນ ແລະ ບັນຫາດ້ານການຕະຫຼາດ, ບັນຫາທາງດ້ານແຮງງານທີ່ມີຄຸນນະພາບຕ່ຳ, ບັນຫາການຜະລິດ ແລະ ດ້ານເຕັກໂນໂລຊີບໍ່ທັນສະໄໝ ດັ່ງນັ້ນ, ຫຼັກການສຳຄັນໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຕ້ອງມີການປັບປຸງກົດໝາຍທີ່ກ່ຽວຂ້ອງຢ່າງເປັນຮູບປະທຳຫຼາຍຂຶ້ນ ເຊັ່ນ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນເພື່ອແກ້ໄຂບັນຫາການຂາດສິ່ງຄວາມສະດວກຂອງຜູ້ປະກອບກິດຈະການ ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຍັງຕ້ອງມີການເຮັດແຜນຍຸດທະສາດໃນການພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງຢ່າງສົມບູນ ເພື່ອໃຊ້ເປັນແຜນຮອງຮັບກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ[56].

**ຍອດຊາຍ ດາລາສັກ**, ວິທະຍານິພົນໃນຫົວຂໍ້: ນະໂຍບາຍ ແລະ ກົດໝາຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອຮອງຮັບປະຊາຄົມເສດຖະກິດອາຊຽນ, ຜົນສຶກສາເຫັນວ່າ ບັນຫາໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໃນ ສປປ ລາວ ຄືເລື່ອງຂອງການເຂົ້າເຖິງແຫຼ່ງທຶນ, ເຕັກໂນໂລຊີທີ່ໃຊ້ໃນການຜະລິດບໍ່ມີປະສິດທິພາບ ແລະ ບໍ່ທັນສະໄໝ, ການເຂົ້າເຖິງຕະຫຼາດຍັງຈຳກັດ, ລັກສະນະແຮງງານຍັງບໍ່ມີຄຸນນະພາບ, ດັ່ງນັ້ນ ເພື່ອໃຫ້ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງມີປະສິດທິພາບ ແລະ ສາມາດແຂ່ງຂັນກັບທຸລະກິດຂະໜາດໃຫຍ່ ແລະ ບໍລິສັດຂ້າມຊາດ ລັດຖະບານຄວນມີການປັບປຸງກົດໝາຍໃຫ້ແທດເໝາະກັບສະພາບການປະຕິບັດຕົວຈິງໃຫ້ຫຼາຍຂຶ້ນ ແລະ ປັບປຸງກົດໝາຍທີ່ກ່ຽວຂ້ອງເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ເພື່ອສ້າງຄວາມສັກສິດຂອງກົດໝາຍຕໍ່ການປະຕິບັດ[57].

---

[56] ຊົງພົນ ທອງສິນ, ມາດຕະການທາງດ້ານກົດໝາຍກ່ຽວກັບການສົ່ງເສີມວິສະຫາກິດຂະໜາດນ້ອຍ ແລະກາງ, ວິທະຍານິພົນປະລິນຍາມະຫາບັນດິດ, ສາຂາວິຊາ ນິຕິສາດບັນດິດວິທະຍາໄລ, ມະຫາວິທະຍາໄລທຸລະກິດບັນດິດ, ປີ 2000, ໜ້າ i. (ສະບັບພາສາໄທ)

[57] ຍອດຊາຍ ດາລາສັກ, ນະໂຍບາຍ ແລະ ກົດໝາຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອຮອງຮັບປະຊາຄົມເສດຖະກິດອາຊຽນ, ວິທະຍານິພົນປະລິຍາມະຫາບັນດິດ, ສາຂາວິຊາ ນິຕິເສດຖະສາດການຄ້າລະຫວ່າງປະເທດ, ມະຫາວິທະຍາໄລທຳມະສາດ, ປີ 2014, ໜ້າ i. (ສະບັບພາສາໄທ)

# ພາກທີ III
# ວິທີການສຶກສາ

## 1. ວິທີການສຶກສາ

ວິທີການສຶກສາຄົ້ນຄວ້າໃນວິທະຍານິພົນນີ້ ແມ່ນນຳໃຊ້ການຄົ້ນຄວ້າແບບປະສົມປະສານລະຫວ່າງປະລິມານ ແລະ ຄຸນນະພາບ ທີ່ໄດ້ຂໍ້ມູນມາຈາກການຕອບແບບສອບຖາມ,ວິເຄາະເອກະສານ, ໂດຍການອາໄສຂໍ້ມູນຈາກກົດໝາຍ, ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງຂອງສູນກາງ ແລະແຂວງຈຳປາສັກ, ປຶ້ມຄູ່ມື ແລະເອກະສານສຳຄັນອື່ນໆ. ນອກຈາກນັ້ນ, ສຳພາດຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ, ຫົວໜ້າຂະແໜງສົ່ງເສີມການຜະລິດສິນຄ້າ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງປາກຊ່ອງ, ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງຊະນະສົມບູນ ແລະ ຫົວໜ້າຫ້ອງການແຜນການ ແລະ ການລົງທຶນ ເມືອງຊະນະສົມບູນ ແຂວງຈຳປາສັກ.

## 2. ຂອບເຂດດ້ານສະຖານທີ່ ແລະ ເວລາ

ຂອບເຂດການສຶກສາຄົ້ນຄ້ວາທາງດ້ານພື້ນທີ່ການສຶກສາແມ່ນຢູ່ພະແນນອຸດສາຫະກຳ-ການຄ້າ ແລະ ບັນດາເມືອງຕ່າງໆ ຂອງແຂວງ ຈຳປາສັກ ຊຶ່ງເປັນສະຖານທີ່ໃນການສຶກສາຄົ້ນຄ້ວາໃນຄັ້ງນີ້.

ການສຶກສາໃນຄັ້ງນີ້ ແມ່ນເລັ່ງໃສ່ທາງດ້ານການທິດສະດີ ແລະ ຫຼັກການທີ່ກ່ຽວຂ້ອງ, ມາດຕະການທາງດ້ານກົດໝາຍ ແລະ ວິທີແກ້ໄຂບັນຫາໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງຢູ່ແຂວງ ຈຳປາສັກໃນອະນາຄົດ.

ການສຶກສາຄັ້ງນີ້ຂອບເຂດການເກັບກຳຂໍ້ມູນສະຖິຕິຍ້ອນຫຼັງນັບແຕ່ປີ 2006-2016.

## 3. ປະຊາກອນ ແລະ ກຸ່ມຕົວຢ່າງ

ປະຊາກອນ ແລະ ກຸ່ມຕົວຢ່າງໄດ້ແກ່ ພະນັກງານຢູ່ພະແນກອຸດສະຫາກຳ ແລະ ການຄ້າ ແຂວງ ຈຳປາສັກ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ 10 ຕົວເມືອງ ພ້ອມນັ້ນຍັງມີບໍລິສັດ ແລະ ຮ້ານຄ້າຕ່າງໆຂອງແຂວງ ຈຳປາສັກ

ກຸ່ມຕົວຢ່າງທີ່ໃຊ້ໃນຄັ້ງນີ້ມີທັງໝົດ 100 ຄົນປະກອບມີ, ພະນັກງານພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ຈຳປາສັກ 10 ຄົນ, ພະນັກງານພະແນກແຜນການ ແລະ ການ

ລົງທຶນແຂວງຈຳປາສັກ 10 ຄົນ, ພະນັກງານຫ້ອງການແຜນການ ແລະ ການລົງທຶນເມືອງ 30 ຄົນ, ຫ້ອງການອຸດສາຫະກຳ ແລະ ການຄ້າ ຢູ່ເມືອງຕ່າງໆເມືອງລະ 3 ຄົນລວມເປັນ 30 ຄົນ ພ້ອມນັ້ນຍັງມີບໍລິສັດ ແລະ ຮ້ານຄ້າຈຳນວນ 20 ຄົນ ນອກຈາກນັ້ນ, ການສຶກສານີ້ ຍັງໄດ້ສຳພາດພະນັກງານສາອາວຸໂສຈຳນວນ 5 ທ່ານ. ການສຳພາດ ແມ່ນເພື່ອໃຫ້ໄດ້ຂໍ້ມູນໃນທາງເລິກກວ່າ ແລະ ນຳເອົາຜົນຂອງການສຳພາດມາປຽບທຽບກັບຜົນຂອງການຕອບແບບສອບຖາມ ແລວນຳເອົາຜົນຂອງຂມູນທັງສອງມາວິເຄາະໃສກັບທິດສະດີ.

## 4. ວິທີ ແລະ ເຄື່ອງມືເກັບກຳຂໍ້ມູນ

ເຄື່ອງມືທີ່ໃຊ້ການລົງເກັບກຳຂໍ້ມູນແບບປະລິມານ ແມ່ນແບບສອບຖາມ ແລະ ຄຳຖາມສຳພາດ ເຊິ່ງຜູ້ສຶກສາໄດ້ລົງໄປສຳພາດ ແລະ ລົງເກັບກຳຂໍ້ມູນສ່ວນທີ່ກ່ຽວຂ້ອງດ້ວຍຕົວເອງ. ເຄື່ອງມືທີ່ໃຊ້ເຂົ້າໃນການເກັບກຳຂໍ້ມູນແມ່ນ ການໃຊ້ USB ບັນທຶກຂໍ້ມູນ, ການໃຊ້ Computer, ປື້ມບັນທຶກ, ບິກ, ເຈ້ຍ A4.

## 5. ວິທີການວິເຄາະຂໍ້ມູນ ແລະ ແປຜົນ

ຫຼັງຈາກເກັບແບບສອບຖາມມາແລ້ວໄດ້ຄັດຈ້ອນເອົາແບບສອບຖາມທີ່ສົມບູນ ແລະ ນຳມາຄິດໄລ່ດ້ວຍການຊອກຫາຈຳນວນ ແລະ ສ່ວນຮ້ອຍ ສະແດງຜົນການຕອບແບບສອບຖາມດ້ວຍເສັ້ນສະແດງ ສະນັ້ນ ຈຶ່ງໄດ້ເອົາມາສັງລວມວ່າ ແຕ່ລະຄຳຕອບນັ້ນມີຈັກຄົນ ແລ້ວກໍ່ຄິດໄລ່ອອກມາເປັນສ່ວນຮ້ອຍ ການຄິດໄລ່ ແມ່ນນຳເອົາຈຳນວນຄົນມາຄູນໃຫ້ 100% ແລ້ວມາຫານໃຫ້ກັບ 100 ແລ້ວກໍ່ຈະໄດ້ມາເປັນສ່ວນຮ້ອຍຂອງຜົນ ຊຶ່ງເອີ້ນວ່າວິທີຄິດໄລ່ຕາມອັດຕາສ່ວນ. ສ່ວນຜົນແບບຄຸນນະພາບນັ້ນຜູ່ສຶກສາຄົ້ນຄວ້າໄດ້ສັງລວມເອົາຜົນຂອງການຕອບຄຳຖາມສຳພາດ ຫຼັງຈາກນັ້ນກໍ່ໄດ້ນຳຜົນຈາກການແປນັ້ນມາວິເຄາະໃສ່ກັນກັບຜົນຂອງການສຳພາດວ່າ ມີຄວາມສອດຄ່ອງກັນ ຫຼື ບໍ່. ເພື່ອຊອກຫາຜົນຂອງການສຶກສາ ແລະ ຊອກຫາຂໍ້ສະຫຼຸບຂອງການສຶກສາພ້ອມທັງມີຂໍ້ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງໄດ້ມີການປັບປຸງ ແລະ ແກ້ໄຂບັນຫານັ້ນໃນອະນາຄົດ.

# ພາກທີ IV
# ຜົນການສຶກສາ

ໃນພາກນີ້ ແມ່ນການວິເຄາະຂໍ້ມູນທີ່ໄດ້ມາຈາກການຕອບແບບສອບຖາມຂອງກຸ່ມຕົວຢ່າງທີ່ວິເຄາະດ້ວຍການຊອກຫາຈຳນວນ ແລະ ສ່ວນຮ້ອຍ ດ້ວຍບັນດາເສັ້ນສະແດງຕ່າງໆ ແລະ ການສັງລວມບັນດາຄຳເຫັນຂອງຜູ້ຕອບຄຳຖາມສຳພາດ ຫຼັງຈາກນັ້ນ ໄດ້ເອົາບັນດາຜົນຂອງການສຶກສາມາວິເຄາະໃສ່ກັບບັນດາຫຼັກການ ທີ່ໄດ້ທົບທວນໄວ້ໃນພາກທີ II ເພື່ອເປັນການຍົກໃຫ້ເຫັນເຖິງການນຳໃຊ້ທິດສະດີກັບສະພາບຕົວຈິງ ໃນພື້ນທີ່ສຶກສາ.

## 1. ຜົນການສຶກສາ

### 1.1 ຄຸນລັກສະນະທົ່ວໄປຂອງຜູ້ຕອບແບບສອບຖາມ

**ເສັ້ນສະແດງ 1 ເພດ**




| | ຊາຍ | ຍິງ | ລວມ |
|---|---|---|---|
| ຈຳນວນ | 68 | 32 | 100 |
| ສ່ວນຮ້ອຍ | 68.00 | 32.00 | 100 |

ຈາກເສັ້ນສະແດງທີ 1, ຜູ້ຕອບແບບສອບຖາມ ຈຳນວນ 68.00% ເປັນເພດຊາຍ ແລະ ຈຳນວນ 32.00% ເປັນເພດຍິງ.

**ເສັ້ນສະແດງ 2 ອາຍຸ**




| | 25-30 ປີ | 31-35 ປີ | 36-40 ປີ | ຫຼາຍກວ່າ 40 ປີ | ລວມ |
|---|---|---|---|---|---|
| ຈຳນວນ | 31 | 35 | 19 | 15 | 100 |
| ສ່ວນຮ້ອຍ | 31.00 | 35.00 | 19.00 | 15.00 | 100.00 |

ຈາກເສັ້ນສະແດງ 2, ຜູ້ຕອບແບບສອບຖາມ ຈຳນວນ 35.00% ມີອາຍຸລະຫວ່າງ 21-35 ປີ, ຈຳນວນ 31.00% ມີອາຍຸລະຫວ່າງ 25-30 ປີ, ຈຳນວນ 19.00% ມີອາຍຸລະຫວ່າງ 36-40 ປີ ແລະ ຈຳນວນ 15.00% ມີອາຍຫຼາຍກວ່າ 40 ປີ.

**ເສັ້ນສະແດງ 3 ລະດັບວິຊາສະເພາະ**




| | ຊັ້ນຕົ້ນ | ຊັ້ນກາງ | ຊັ້ນສູງ | ປະລິນຍາຕີ | ປະລິນຍາໂທ | ລວມ |
|---|---|---|---|---|---|---|
| ຈຳນວນ | 2 | 14 | 25 | 52 | 7 | 100 |
| ສ່ວນຮ້ອຍ | 2.00 | 14.00 | 25.00 | 52.00 | 7.00 | 100.00 |

ຈາກເສັ້ນສະແດງ 3, ຜູ້ຕອບແບບສອບຖາມ ຈຳນວນ 52.00% ຈົບການສຶກສາລະດັບປະລິນຍາຕີ, ຈຳນວນ 25.00% ຈົບການສຶກສາລະດັບຊັ້ນສູງ, ຈຳນວນ 14.00% ຈົບການສຶກສາລະດັບຊັ້ນກາງ, ຈຳນວນ 7.00% ຈົບການສຶກສາລະດັບປະລິນຍາໂທ ແລະ ຈຳນວນ 2.00% ຈົບການສຶກສາລະດັບຊັ້ນຕົ້ນ.

**ເສັ້ນສະແດງ 4 ວິຊາສະເພາະທີ່ຮຽນມາ**




| | ນິຕິສາດ | ລັດຖະສາດ | ການເມືອງ | ເສດຖະສາດ | ບໍລິຫານທຸລະກິດ | ອື່ນໆ | ລວມ |
|---|---|---|---|---|---|---|---|
| ຈຳນວນ | 8 | 3 | 2 | 19 | 41 | 27 | 100 |
| ສ່ວນຮ້ອຍ | 8.00 | 3.00 | 2.00 | 19.00 | 41.00 | 27.00 | 100.00 |

ຈາກເສັ້ນສະແດງ 4, ຜູ້ຕອບແບບສອບຖາມ ຈຳນວນ 41.00% ຈົບການສຶກສາສາຂາບໍລິຫານທຸລະກິດ, ຈຳນວນ 27.00% ຈົບສາຂາອື່ນໆ, ຈຳນວນ 19.00% ຈົບການສຶກສາສາຂາເສດຖະສາດ, ຈຳນວນ 8.00% ຈົບການສຶກສາສາຂານິຕິສາດ, ຈຳນວນ 3.00% ຈົບການສຶກສາສາຂາລັດຖະສາດ ແລະ ຈຳນວນ 2.00% ຈົບສາຂາການເມືອງ.

**ເສັ້ນສະແດງ 5 ປະສົບການເຮັດວຽກ**




| | 2-10 ປີ | 11-15 ປີ | 16-20 ປີ | 21-25 ປີ | ຫຼາຍກວ່າ 26 ປີ | ລວມ |
|---|---|---|---|---|---|---|
| ຈຳນວນ | 59 | 19 | 12 | 3 | 7 | 100 |
| ສ່ວນຮ້ອຍ | 59.00 | 19.00 | 12.00 | 3.00 | 7.00 | 100 |

ຈາກເສັ້ນສະແດງ 5, ຜູ້ຕອບແບບສອບຖາມ ຈຳນວນ 59.00% ມີປະສົບການເຮັດວຽກ 2-10 ປີ, ຈຳນວນ 19.00% ມີປະສົບການ 11-15 ປີ, ຈຳນວນ 12.00% ມີປະສົບການ 16-20 ປີ, ຈຳນວນ 7.00% ມີປະສົບການຫຼາຍກວ່າ 26 ປີ ແລະ ຈຳນວນ 3.00% ມີປະສົບການ 21-25 ປີ.

**ເສັ້ນສະແດງ 6 ໜ້າທີ່ຕຳແໜ່ງຂອງຜູ້ຕອບແບບສອບຖາມ**




| | ຫົວໜ້າ ແລະ ຮອງ | ວິຊາການ | ພ/ງບໍລິຫານ | ນັກທຸລະກິດ | ອື່ນໆ | ລວມ |
|---|---|---|---|---|---|---|
| ຈຳນວນ | 18 | 50 | 5 | 20 | 7 | 100 |
| ສ່ວນຮ້ອຍ | 18.00 | 50.00 | 5.00 | 20.00 | 7.00 | 100.00 |

ຈາກເສັ້ນສະແດງ 6 ຜູ້ຕອບແບບສອບຖາມ ຈຳນວນ 50.00% ແມ່ນພະນັກງານວິຊາການ, ຈຳນວນ 20.00% ແມ່ນນັກທຸລະກິດ, ຈຳນວນ 18.00% ແມ່ນຫົວໜ້າ ແລະ ຮອງຫົວໜ້າຂະແໜງການຕ່າງໆ, ຈຳນວນ 7.00% ຜູ້ທີ່ເຮັດວຽກອື່ນໆ ແລະ ຈຳນວນ 5.00% ແມ່ນພະນັກງານບໍລິຫານ.

ຈາກເສັ້ນສະແດງທີ 1-6, ສາມາດສະຫຼຸບຄຸນລັກສະນະທົ່ວໄປຂອງຜູ້ຕອບແບບສອບຖາມໄດ້ຄືຜູ້ຕອບແບບສອບຖາມ ຈຳນວນ 68.00% ເປັນເພດຊາຍ, ມີອາຍຸລະຫວ່າງ 31-35 ປີ ກວມເອົາຈຳນວນ 35.00%, ຈຳນວນ 52.00% ຈົບການສຶກສາລະດັບປະລິນຍາຕີ, ຈຳນວນ 41.00% ຈົບການສຶກສາ ສາຂາບໍລິຫານທຸລະກິດ, ຈຳນວນ 59.00% ມີປະສົບການເຮັດວຽກ 2-10 ປີ, ຈຳນວນ 50.00% ແມ່ນພະນັກງານວິຊາການ.

### 1.2 ທັດສະນະຂອງຜູ້ຕອບແບບສອບຖາມຕໍ່ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ

#### 1.2.1 ທັດສະນະຕໍ່ນິຕິກຳ ແລະ ຫຼັກການຕ່າງໆກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ

ເສັ້ນສະແດງ 7, ກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ກຳນົດເລື່ອງການສົ່ງເສີມໄວ້ຄົບຖ້ວນພຽງພໍແລ້ວລະດັບ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈຳນວນ | 25 | 55 | 16 | 3 | 1 | 100 |
| ສ່ວນຮ້ອຍ | 25.00 | 55.00 | 16.00 | 3.00 | 1.00 | 100.00 |

ຈາກເສັ້ນສະແດງ 7, ຜູ້ຕອບແບບສອບຖາມ ຈຳນວນ 55% ເຫັນວ່າ ກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ກຳນົດເລື່ອງການສົ່ງເສີມໄວ້ຄົບຖ້ວນພຽງພໍແລ້ວລະດັບຫຼາຍ, ຈຳນວນ 16% ເຫັນວ່າຄົບຖ້ວນພຽງພໍປານກາງ, ຈຳນວນ 3% ເຫັນວ່າຄົບຖ້ວນພຽງພໍໜ້ອຍ ແລະ ຈຳນວນ 1% ເຫັນວ່າຄົບຖ້ວນພຽງພໍໜ້ອຍທີ່ສຸດ.

ເສັ້ນສະແດງ 8 ຜ່ານມາການປັບປຸງສະພາບແວດລ້ອມທາງດ້ານລະບຽບການ ແລະ ການຄຸ້ມຄອງຂອງລັດຕໍ່ການເຄື່ອນໄຫວທຸລະກິດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ມີຄວາມຄອດສ່ອງກັບຫຼັກການທາງກົດໝາຍໃນລະດັບ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈຳນວນ | 6 | 45 | 41 | 6 | 2 | 100 |
| ສ່ວນຮ້ອຍ | 6.00 | 45.00 | 41.00 | 6.00 | 2.00 | 100 |

ຈາກເສັ້ນສະແດງ 8, ຜູ້ຕອບແບບສອບຖາມ ຈຳນວນ 45% ເຫັນວ່າ ຜ່ານມາການປັບປຸງສະພາບແວດລ້ອມທາງດ້ານລະບຽບການ ແລະ ການຄຸ້ມຄອງຂອງລັດຕໍ່ການເຄື່ອນໄຫວທຸລະກິດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ມີຄວາມຄອດສ່ອງກັບຫຼັກການທາງກົດໝາຍໃນລະດັບຫຼາຍ, ຈຳນວນ 41% ເຫັນວ່າສອດຄ່ອງປານກາງ ແລະ ຈຳນວນ 2% ເຫັນວ່າສອດຄ່ອງໜ້ອຍທີ່ສຸດ.

ເສັ້ນສະແດງ 9 ຜ່ານມາການເຂົ້າຫາແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ມີຄວາມຄອດສ່ອງກັບຫຼັກການທາງກົດໝາຍໃນລະດັບ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈຳນວນ | 6 | 29 | 46 | 13 | 6 | 100 |
| ສ່ວນຮ້ອຍ | 6.00 | 29.00 | 46.00 | 13.00 | 6.00 | 100 |

ຈາກເສັ້ນສະແດງ 9, ຜູ້ຕອບແບບສອບຖາມຈຳນວນ 46% ເຫັນວ່າຜ່ານມາການເຂົ້າຫາແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີຄວາມຄອດສ່ອງກັບຫຼັກການທາງກົດໝາຍໃນລະດັບປານກາງ, ຈຳນວນ 29% ເຫັນວ່າສອດຄ່ອງຫຼາຍ, ຈຳນວນ 13% ເຫັນວ່າສອດຄ່ອງໜ້ອຍ ແລະ ຈຳນວນ 6% ເຫັນວ່າສອດຄ່ອງຫຼາຍທີ່ສຸດ ແລະ ໜ້ອຍທີ່ສຸດ.

ເສັ້ນສະແດງ 10 ຜ່ານມາການກໍ່ສ້າງຜູ້ປະກອບກິດຈະການໃໝ່ຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງມີຄວາມຄອດສ່ອງກັບຫຼັກການທາງກົດໝາຍໃນລະດັບ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈຳນວນ | 7 | 29 | 44 | 18 | 2 | 100 |
| ສ່ວນຮ້ອຍ | 7.00 | 29.00 | 44.00 | 18.00 | 2.00 | 100 |

ຈາກເສັ້ນສະແດງ 10, ຜູ້ຕອບແບບສອບຖາມ ຈຳນວນ 44% ເຫັນວ່າຜ່ານມາການກໍ່ສ້າງຜູ້ປະກອບກິດຈະການໃໝ່ຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງມີຄວາມຄອດສ່ອງກັບຫຼັກການທາງກົດໝາຍໃນລະດັບປານກາງ, ຈຳນວນ 29% ເຫັນວ່າສອດຄ່ອງລະດັບຫຼາຍ, ຈຳນວນ 18% ເຫັນວ່າສອດຄ່ອງໜ້ອຍ, ຈຳນວນ 7% ເຫັນວ່າສອດຄ່ອງລະດັບຫຼາຍທີ່ສຸດ ແລະ ຈຳນວນ 2% ເຫັນວ່າສອດຄ່ອງໜ້ອຍທີ່ສຸດ.

ເສັ້ນສະແດງ 11 ຜ່ານມາການໃຫ້ການຊ່ວຍເຫຼືອ ແລະ ການບໍລິການພັດທະນາທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີຄວາມສອດຄ່ອງກັບຫຼັກການທາງກົດໝາຍ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈຳນວນ | 6 | 27 | 51 | 14 | 2 | 100 |
| ສ່ວນຮ້ອຍ | 6.00 | 27.00 | 51.00 | 14.00 | 2.00 | 100 |

ຈາກເສັ້ນສະແດງ 11, ຜູ້ຕອບແບບສອບຖາມ ຈຳນວນ 51% ເຫັນວ່າຜ່ານມາການໃຫ້ການຊ່ວຍເຫຼືອ ແລະ ການບໍລິການພັດທະນາທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີຄວາມສອດຄ່ອງກັບຫຼັກການທາງກົດໝາຍໃນລະດັບປານກາງ, ຈຳນວນ 27% ເຫັນວ່າສອດຄ່ອງຫຼາຍ ແລະ ຈຳນວນ 2% ເຫັນວ່າສອດຄ່ອງໜ້ອຍທີ່ສຸດ.

ເສັ້ນສະແດງ 12 ຜ່ານມາການເພີ່ມຜະລິດຕະພາບເພື່ອຍົກລະດັບຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ແລະ ການບໍລິການຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ມີຄວາມສອດຄ່ອງກັບຫຼັກການທາງກົດໝາຍ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈຳນວນ | 4 | 23 | 61 | 8 | 4 | 100 |
| ສ່ວນຮ້ອຍ | 4.00 | 23.00 | 61.00 | 8.00 | 4.00 | 100 |

ຈາກເສັ້ນສະແດງ 12, ຜູ້ຕອບແບບສອບຖາມ ຈຳນວນ 61% ເຫັນວ່າຜ່ານມາການເພີ່ມຜະລິດຕະພາບເພື່ອຍົກລະດັບຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ແລະ ການບໍລິການຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີຄວາມສອດຄ່ອງກັບຫຼັກການທາງກົດໝາຍໃນລະດັບປານກາງ, ຈຳນວນ 23% ເຫັນວ່າສອດຄ່ອງຫຼາຍ ແລະ ໜ້ອຍທີ່ສຸດ.

ເສັ້ນສະແດງ 13 ການເຂົ້າຫາຕະຫຼາດ ແລະ ການຂະຫຍາຍຕະຫຼາດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ມີຄວາມຄອດສ່ອງກັບຫຼັກການທາງກົດໝາຍໃນລະດັບ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈຳນວນ | 3 | 29 | 48 | 18 | 2 | 100 |
| ສ່ວນຮ້ອຍ | 3.00 | 29.00 | 48.00 | 18.00 | 2.00 | 100 |

ຈາກເສັ້ນສະແດງ 13, ຜູ້ຕອບແບບສອບຖາມ ຈຳນວນ 48% ເຫັນວ່າການເຂົ້າຫາຕະຫຼາດ ແລະ ການຂະຫຍາຍຕະຫຼາດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ຄວາມຄອດສ່ອງກັບຫຼັກການທາງກົດໝາຍສອດຄ່ອງໃນລະດັບປານກາງ, ຈຳນວນ 29% ເຫັນວ່າສອດຄ່ອງຫຼາຍ, ຈຳນວນ 18% ເຫັນວ່າສອດຄ່ອງປານກາງ, ຈຳນວນ 3% ເຫັນວ່າສອດຄ່ອງຫຼາຍທີ່ສຸດ ແລະ ຈຳນວນ 2% ເຫັນວ່າສອດຄ່ອງໜ້ອຍທີ່ສຸດ.

ຈາກເສັ້ນສະແດງ 7-13, ສາມາດສະຫຼຸບທັດສະນະຕໍ່ນິຕິກຳ ແລະ ຫຼັກການຕ່າງໆກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໄດ້ຄື: ຜູ້ຕອບແບບສອບຖາມຈຳນວນ 55% ເຫັນວ່າ ກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ກຳນົດເລື່ອງການສົ່ງເສີມໄວ້ຄົບຖ້ວນພຽງພໍແລ້ວລະດັບຫຼາຍ, ຈຳນວນ 45% ເຫັນວ່າ ຜ່ານມາການປັບປຸງສະພາບແວດລ້ອມທາງດ້ານລະບຽບການ ແລະ ການຄຸ້ມຄອງຂອງລັດຕໍ່ການເຄື່ອນໄຫວທຸລະກິດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ມີຄວາມຄອດສ່ອງກັບຫຼັກການທາງກົດໝາຍໃນລະດັບຫຼາຍ, ຈຳນວນ 46% ເຫັນວ່າຜ່ານມາການເຂົ້າຫາແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີຄວາມຄອດສ່ອງກັບຫຼັກການທາງກົດໝາຍໃນລະດັບປານກາງ,ຈຳນວນ 44% ເຫັນວ່າຜ່ານມາການກໍ່ສ້າງຜູ້ປະກອບກິດຈະການໃໝ່ຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງມີຄວາມຄອດສ່ອງກັບຫຼັກການທາງກົດໝາຍໃນລະດັບປານກາງ, ຈຳນວນ 51% ເຫັນວ່າຜ່ານມາການໃຫ້ການຊ່ວຍເຫຼືອ ແລະ ການບໍລິການພັດທະນາທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີຄວາມຄອດສ່ອງກັບຫຼັກການທາງກົດໝາຍໃນລະດັບປານກາງ, ຈຳນວນ 61% ເຫັນວ່າຜ່ານມາ

ການເພີ່ມຜະລິດຕະພາບເພື່ອຍົກລະດັບຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ແລະ ການບໍລິການຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີຄວາມຄອດສ່ອງກັບຫຼັກການທາງກົດໝາຍໃນລະດັບປານກາງ, ຈຳນວນ 48% ເຫັນວ່າການເຂົ້າຫາຕະຫຼາດ ແລະ ການຂະຫຍາຍຕະຫຼາດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ຄວາມຄອດສ່ອງກັບຫຼັກການທາງກົດໝາຍສອດຄ່ອງໃນລະດັບປານກາງ.

### 1.2.2 ວິທີການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຢູ່ແຂວງຈຳປາສັກ

ເສັ້ນສະແດງ 14 ມາດຕະການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີຄວາມສອດຄ່ອງກັບສະພາບຕົວຈິງໃນລະດັບ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈຳນວນ | 5 | 34 | 49 | 12 | 0 | 100 |
| ສ່ວນຮ້ອຍ | 5.00 | 34.00 | 49.00 | 12.00 | 0.00 | 100 |

ຈາກເສັ້ນສະແດງ 14, ຜູ້ຕອບແບບສອບຖາມ ຈຳນວນ 49% ເຫັນວ່າ ມາດຕະການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີຄວາມສອດຄ່ອງກັບສະພາບຕົວຈິງໃນລະດັບປານກາງ, ຈຳນວນ 34% ເຫັນວ່າສອດຄ່ອງຫຼາຍ, ຈຳນວນ 12% ເຫັນວ່າສອດຄ່ອງໜ້ອຍ ແລະ ຈຳນວນ 5% ເຫັນວ່າສອດຄ່ອງຫຼາຍ.

ເສັ້ນສະແດງ 15 ວິທີການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີຄວາມສອດຄ່ອງກັບສະພາບຕົວຈິງໃນລະດັບ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈຳນວນ | 8 | 23 | 55 | 9 | 5 | 100 |
| ສ່ວນຮ້ອຍ | 8.00 | 23.00 | 55.00 | 9.00 | 5.00 | 100 |

ຈາກເສັ້ນສະແດງ 15 ຜູ້ຕອບແບບສອບຖາມຈຳນວນ 55% ເຫັນວ່າວິທີການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີຄວາມສອດຄ່ອງກັບສະພາບຕົວຈິງໃນລະດັບປານກາງ, ຈຳນວນ 23% ເຫັນວ່າສອດຄ່ອງຫຼາຍ, ຈຳນວນ 9% ເຫັນວ່າສອດຄ່ອງໜ້ອຍ, ຈຳນວນ 8% ເຫັນວ່າສອດຄ່ອງຫຼາຍທີ່ສຸດ ແລະ ຈຳນວນ 5% ເຫັນວ່າສອດຄ່ອງໜ້ອຍສຸດ.

ເສັ້ນສະແດງ 16 ການເຂົ້າໃຊ້ມາດຕະການສົ່ງເສີມຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີຄວາມສອດຄ່ອງກັບສະພາບຕົວຈິງໃນລະດັບ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈຳນວນ | 6 | 21 | 49 | 21 | 3 | 100 |
| ສ່ວນຮ້ອຍ | 6.00 | 21.00 | 49.00 | 21.00 | 3.00 | 100 |

ຈາກເສັ້ນສະແດງ 16 ຜູ້ຕອບແບບສອບຖາມ ຈຳນວນ 49% ເຫັນວ່າການເຂົ້າໃຊ້ມາດຕະການສົ່ງເສີມຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີຄວາມສອດຄ່ອງກັບສະພາບຕົວຈິງໃນລະດັບປານກາງ, ຈຳນວນ 21% ເຫັນວ່າສອດຄ່ອງຫຼາຍ ແລະ ສອດຄ່ອງໜ້ອຍ, ຈຳນວນ 6% ເຫັນວ່າສອດຄ່ອງຫຼາຍທີ່ສຸດ ແລະ ຈຳນວນ 3% ເຫັນວ່າພຽງພໍໜ້ອຍທີ່ສຸດ.

ເສັ້ນສະແດງ 17 ຄວາມເຂົ້າໃຈຕໍ່ມາດຕະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຂອງອົງການທີ່ກ່ຽວຂ້ອງມີຄວາມພຽງພໍແລ້ວໃນລະດັບ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈຳນວນ | 4 | 30 | 46 | 12 | 8 | 100 |
| ສ່ວນຮ້ອຍ | 4.00 | 30.00 | 46.00 | 12.00 | 8.00 | 100 |

ຈາກເສັ້ນສະແດງ 17 ຜູ້ຕອບແບບສອບຖາມ ຈຳນວນ 46% ເຫັນວ່າ ຄວາມເຂົ້າໃຈຕໍ່ມາດຕະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຂອງອົງການທີ່ກ່ຽວຂ້ອງມີຄວາມພຽງພໍແລ້ວໃນລະດັບປານກາງ, ຈຳນວນ 30% ເຫັນວ່າສອດຄ່ອງຫຼາຍ, ຈຳນວນ 12% ເຫັນວ່າສອດຄ່ອງໜ້ອຍ, ຈຳນວນ 8% ເຫັນວ່າສອດຄ່ອງໜ້ອຍທີ່ສຸດ ແລະ ຈຳນວນ 4% ເຫັນວ່າສອດຄ່ອງຫຼາຍທີ່ສຸດ.

ຈາກເສັ້ນສະແດງ 14-17, ສາມາດສະຫຼຸບທັດສະນະຕໍ່ທັດສະນະຕໍ່ວິທີການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຢູ່ແຂວງຈຳປາສັກ ໄດ້ຄື ຜູ້ຕອບແບບສອບຖາມ ຈຳນວນ 49% ເຫັນວ່າ ມາດຕະການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີຄວາມສອດຄ່ອງກັບສະພາບຕົວຈິງໃນລະດັບປານກາງ, ຈຳນວນ 55% ເຫັນວ່າວິທີການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີຄວາມສອດຄ່ອງກັບສະພາບຕົວຈິງໃນລະດັບປານກາງ, ຈຳນວນ 49% ເຫັນວ່າການເຂົ້າໃຊ້ມາດຕະການສົ່ງເສີມຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີຄວາມສອດຄ່ອງກັບສະພາບຕົວຈິງໃນລະດັບປານກາງ ແລະ ຈຳນວນ 46% ເຫັນວ່າ ຄວາມເຂົ້າໃຈຕໍ່ມາດຕະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຂອງອົງການທີ່ກ່ຽວຂ້ອງມີຄວາມພຽງພໍແລ້ວໃນລະດັບປານກາງ.

### 1.2.3 ບັນຫາ ແລະ ອຸປະສັກ ໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ ແຂວງຈຳປາສັກ

ເສັ້ນສະແດງ 18 ຜ່ານມາການປັບປຸງສະພາບແວດລ້ອມທາງດ້ານລະບຽບການ ແລະ ການຄຸ້ມຄອງຂອງລັດຕໍ່ການເຄື່ອນໄຫວທຸລະກິດຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີບັນຫາໃນລະດັບ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈຳນວນ | 15 | 29 | 41 | 15 | 0 | 100 |
| ສ່ວນຮ້ອຍ | 15 | 29.00 | 41.00 | 15.00 | 0.00 | 100 |

ຈາກເສັ້ນສະແດງ 18 ຜູ້ຕອບແບບສອບຖາມ ຈຳນວນ 41% ເຫັນວ່າຜ່ານມາການປັບປຸງສະພາບແວດລ້ອມທາງດ້ານລະບຽບການ ແລະ ການຄຸ້ມຄອງຂອງລັດຕໍ່ການເຄື່ອນໄຫວທຸລະກິດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ມີບັນຫາໃນລະດັບປານກາງ, ຈຳນວນ 29% ເຫັນວ່າມີບັນຫາຫຼາຍ ແລະ ຈຳນວນ 15% ເຫັນວ່າມີບັນຫາໜ້ອຍ.

ເສັ້ນສະແດງ 19 ຜ່ານມາການເຂົ້າຫາແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີບັນຫາໃນລະດັບ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈຳນວນ | 27 | 16 | 36 | 16 | 5 | 100 |
| ສ່ວນຮ້ອຍ | 27.00 | 16.00 | 36.00 | 16.00 | 5.00 | 100.00 |

ຈາກເສັ້ນສະແດງ 19 ຜູ້ຕອບແບບສອບຖາມ ຈຳນວນ 36% ເຫັນວ່າຜ່ານມາການເຂົ້າຫາແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ມີບັນຫາໃນລະດັບປານກາງ, ຈຳນວນ 27% ເຫັນວ່າມີບັນຫາ, ຈຳນວນ 16% ເຫັນວ່າມີບັນຫາຫຼາຍ ແລະ ມີບັນຫາໜ້ອຍ ແລະ ຈຳນວນ 5% ເຫັນວ່າມີບັນຫາໜ້ອຍທີ່ສຸດ.

ເສັ້ນສະແດງ 20 ຜ່ານມາການກໍ່ສ້າງຜູ້ປະກອບກິດຈະການໃໝ່ຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີບັນຫາໃນລະດັບ




ຈາກເສັ້ນສະແດງ 20 ຜູ້ຕອບແບບສອບຖາມ ຈຳນວນ 41% ເຫັນວ່າຜ່ານມາການກໍ່ສ້າງຜູ້ປະກອບກິດຈະການໃໝ່ຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີບັນຫາໃນລະດັບປານກາງ, ຈຳນວນ 26% ເຫັນວ່າມີບັນຫາຫຼາຍ, ຈຳນວນ 24% ເຫັນວ່າມີບັນຫາຫຼາຍທີ່ສຸດຈຳນວນ 24% ເຫັນວ່າມີບັນຫາໜ້ອຍ ແລະ ຈຳນວນ 3% ເຫັນວ່າ ມີບັນຫາໜ້ອຍທີ່ສຸດ.

ເສັ້ນສະແດງ 21 ຜ່ານມາການໃຫ້ການຊ່ວຍເຫຼືອ ແລະ ການບໍລິການພັດທະນາທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີບັນຫາໃນລະດັບ




ຈາກເສັ້ນສະແດງ 21 ຜູ້ຕອບແບບສອບຖາມ ຈຳນວນ 46% ເຫັນວ່າ ຜ່ານມາການໃຫ້ການຊ່ວຍເຫຼືອ ແລະ ການບໍລິການພັດທະນາທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີບັນຫາໃນລະດັບປານກາງ, ຈຳນວນ 25% ເຫັນວ່າມີບັນຫາຫຼາຍທີ່ສຸດ, ຈຳນວນ 18% ເຫັນວ່າມີບັນຫາຫຼາຍ ແລະ ຈຳນວນ 11% ເຫັນວ່າມີບັນຫາໜ້ອຍ.

ເສັ້ນສະແດງ 22 ຜ່ານມາເພີ່ມຜະລິດຕະພາບ ເພື່ອຍົກລະດັບຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ແລະ ການບໍລິການຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີບັນຫາໃນລະດັບ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈຳນວນ | 22 | 23 | 41 | 12 | 2 | 100 |
| ສ່ວນຮ້ອຍ | 22.00 | 23.00 | 41.00 | 12.00 | 2.00 | 100 |

ຈາກເສັ້ນສະແດງ 22 ຜູ້ຕອບແບບສອບຖາມ ຈຳນວນ 41% ເຫັນວ່າຜ່ານມາເພີ່ມຜະລິດຕະພາບ ເພື່ອຍົກລະດັບຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ແລະ ການບໍລິການຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ມີບັນຫາໃນລະດັບປານກາງ, ຈຳນວນ 23% ເຫັນວ່າມີບັນຫາຫຼາຍ ແລະ ຈຳນວນ 2% ເຫັນວ່າມີບັນຫາໜ້ອຍທີ່ສຸດ.

ເສັ້ນສະແດງ 23 ການເຂົ້າຫາຕະຫຼາດ ແລະ ການຂະຫຍາຍຕະຫຼາດຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີບັນຫາໃນລະດັບ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈຳນວນ | 29 | 14 | 32 | 23 | 2 | 100 |
| ສ່ວນຮ້ອຍ | 29.00 | 14.00 | 32.00 | 23.00 | 2.00 | 100 |

ຈາກເສັ້ນສະແດງ 23 ຜູ້ຕອບແບບສອບຖາມ ຈຳນວນ 32% ເຫັນວ່າການເຂົ້າຫາຕະຫຼາດ ແລະ ການຂະຫຍາຍຕະຫຼາດຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີບັນຫາໃນລະດັບປານກາງ, ຈຳນວນ 29% ເຫັນວ່າມີບັນຫາຫຼາຍທີ່ສຸດ ແລະ ຈຳນວນ 2% ເຫັນວ່າມີບັນຫາໜ້ອຍທີ່ສຸດ.

ເສັ້ນສະແດງ 24 ມາດຕະການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນ ມີບັນຫາໃນລະດັບ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈໍານວນ | 16 | 35 | 38 | 11 | 0 | 100 |
| ສ່ວນຮ້ອຍ | 16.00 | 35.00 | 38.00 | 11.00 | 0.00 | 100 |

ຈາກເສັ້ນສະແດງ 24 ຜູ້ຕອບແບບສອບຖາມ ຈໍານວນ 38% ເຫັນວ່າມາດຕະການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີບັນຫາໃນລະດັບປານກາງ, ຈໍານວນ 35% ເຫັນວ່າມີບັນຫາໜ້ອຍ, ຈໍານວນ 16% ເຫັນວ່າມີບັນຫາຫຼາຍທີ່ສຸດ ແລະ ຈໍານວນ 11% ເຫັນວ່າມີບັນຫາໜ້ອຍ.

ເສັ້ນສະແດງ 25 ວິທີການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີບັນຫາໃນລະດັບ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈໍານວນ | 14 | 30 | 44 | 12 | 0 | 100 |
| ສ່ວນຮ້ອຍ | 14.00 | 30.00 | 44.00 | 12.00 | 0.00 | 100 |

ຈາກເສັ້ນສະແດງ 25 ຜູ້ຕອບແບບສອບຖາມ ຈໍານວນ 44% ເຫັນວ່າວິທີການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີບັນຫາໃນລະດັບປານກາງ, ຈໍານວນ 30% ເຫັນວ່າມີບັນຫາຫຼາຍ, ຈໍານວນ 14% ເຫັນວ່າມີບັນຫາຫຼາຍທີ່ສຸດ ແລະ ຈໍານວນ 12% ເຫັນວ່າມີບັນຫາໜ້ອຍ.

ເສັ້ນສະແດງ 26 ການເຂົ້າໃຊ້ມາດຕະການສົ່ງເສີມຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີບັນຫາໃນລະດັບ




ຈາກເສັ້ນສະແດງ 26 ຜູ້ຕອບແບບສອບຖາມ ຈຳນວນ 45% ເຫັນວ່າການເຂົ້າໃຊ້ມາດຕະການສົ່ງເສີມຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີບັນຫາໃນລະດັບປານກາງ, ຈຳນວນ 30% ເຫັນວ່າມີບັນຫາຫຼາຍ ແລະ ຈຳນວນ 2% ເຫັນວ່າມີບັນຫາໜ້ອຍທີ່ສຸດ.

ເສັ້ນສະແດງ 27 ບັນຫາຄວາມເຂົ້າໃຈຂອງນັກທຸລະກິດ ແລະ ອົງການທີ່ກ່ຽວຂ້ອງຕໍ່ມາດຕະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີໃນລະດັບ




ຈາກເສັ້ນສະແດງ 27 ຜູ້ຕອບແບບສອບຖາມ ຈຳນວນ 44% ເຫັນວ່າບັນຫາຄວາມເຂົ້າໃຈຂອງນັກທຸລະກິດ ແລະ ອົງການທີ່ກ່ຽວຂ້ອງຕໍ່ມາດຕະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີໃນລະດັບປານກາງ, ຈຳນວນ 36% ເຫັນວ່າມີບັນຫາຫຼາຍ ແລະ ຈຳນວນ 1% ເຫັນວ່າມີບັນຫາໜ້ອຍທີ່ສຸດ.

ຈາກເສັ້ນສະແດງ 18-27 ສາມາດສະຫຼຸບບັນຫາ ແລະ ອຸປະສັກ ໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ ແຂວງຈຳປາສັກໄດ້ວ່າຜູ້ຕອບແບບສອບຖາມ ຈຳນວນ 41% ເຫັນວ່າຜ່ານມາການປັບປຸງສະພາບແວດລ້ອມທາງດ້ານລະບຽບການ ແລະ ການຄຸ້ມຄອງຂອງລັດຕໍ່ການເຄື່ອນໄຫວທຸລະກິດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ມີບັນຫາໃນລະດັບປານກາງ, ຈຳນວນ 36% ເຫັນວ່າຜ່ານມາການເຂົ້າຫາແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີບັນຫາໃນລະດັບປານກາງ, ຈຳນວນ 41% ເຫັນວ່າຜ່ານມາການກໍ່ສ້າງຜູ້ປະກອບກິດຈະການໃໝ່ຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີບັນຫາໃນລະດັບປານກາງ, ຈຳນວນ 46% ເຫັນວ່າ ຜ່ານມາການໃຫ້ການຊ່ວຍເຫຼືອ ແລະ ການບໍລິການພັດທະນາທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີບັນຫາໃນລະດັບປານກາງ, ຈຳນວນ 41% ເຫັນວ່າຜ່ານມາເພີ່ມຜະລິດຕະພາບ ເພື່ອຍົກລະດັບຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ແລະ ການບໍລິການຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ມີບັນຫາໃນລະດັບປານກາງ, ຈຳນວນ 32% ເຫັນວ່າການເຂົ້າຫາຕະຫຼາດ ແລະ ການຂະຫຍາຍຕະຫຼາດຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີບັນຫາໃນລະດັບປານກາງ, ຈຳນວນ 38% ເຫັນວ່າມາດຕະການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີບັນຫາໃນລະດັບປານກາງ, ຈຳນວນ 44% ເຫັນວ່າວິທີການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີບັນຫາໃນລະດັບ ປານກາງ, ຈຳນວນ 45% ເຫັນວ່າການເຂົ້າໃຊ້ມາດຕະການສົ່ງເສີມຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີບັນຫາໃນລະດັບປານກາງ, ຈຳນວນ 44% ເຫັນວ່າບັນຫາຄວາມເຂົ້າໃຈຂອງນັກທຸລະກິດ ແລະ ອົງການທີ່ກ່ຽວຂ້ອງຕໍ່ມາດຕະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີໃນລະດັບປານກາງ.

**1.2.4 ການແກ້ໄຂບັນຫາ ແລະ ອຸປະສັກ ໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ ແຂວງຈຳປາສັກ**

ເສັ້ນສະແດງ 28 ຜ່ານມາການປັບປຸງສະພາບແວດລ້ອມທາງດ້ານລະບຽບການ ແລະ ການຄຸ້ມຄອງຂອງລັດຕໍ່ການເຄື່ອນໄຫວທຸລະກິດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ມີການແກ້ໄຂແລ້ວຢູ່ໃນລະດັບ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈຳນວນ | 5 | 30 | 36 | 23 | 6 | 100 |
| ສ່ວນຮ້ອຍ | 5.00 | 30.00 | 36.00 | 23.00 | 6.00 | 100 |

ຈາກເສັ້ນສະແດງ 28, ຜູ້ຕອບແບບສອບຖາມ ຈຳນວນ 36% ເຫັນວ່າຜ່ານມາການປັບປຸງສະພາບແວດລ້ອມທາງດ້ານລະບຽບການ ແລະ ການຄຸ້ມຄອງຂອງລັດຕໍ່ການເຄື່ອນໄຫວທຸລະກິດຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໄດ້ມີການແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 30% ເຫັນວ່າແກ້ໄຂບັນຫາໄດ້ຫຼາຍ ແລະ ຈຳນວນ 5% ເຫັນວ່າແກ້ໄຂມີບັນຫາໄດ້ຫຼາຍທີ່ສຸດ.

ເສັ້ນສະແດງ 29 ຜ່ານມາການແກ້ໄຂບັນຫາການເຂົ້າຫາແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ມີການແກ້ໄຂແລ້ວຢູ່ໃນລະດັບ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈຳນວນ | 4 | 25 | 34 | 23 | 14 | 100 |
| ສ່ວນຮ້ອຍ | 4.00 | 25.00 | 34.00 | 23.00 | 14.00 | 100 |

ຈາກເສັ້ນສະແດງ 29, ຜູ້ຕອບແບບສອບຖາມ ຈຳນວນ 34% ເຫັນວ່າຜ່ານມາການແກ້ໄຂບັນຫາການເຂົ້າຫາແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ມີການແກ້

ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 25% ເຫັນວ່າແກ້ໄຂບັນຫາໄດ້ຫຼາຍ ແລະ ຈຳນວນ 4% ເຫັນວ່າແກ້ໄຂມີບັນຫາໄດ້ຫຼາຍທີ່ສຸດ.

ເສັ້ນສະແດງ 30 ຜ່ານມາການແກ້ໄຂບັນຫາໃນການກໍ່ສ້າງຜູ້ປະກອບກິດຈະການໃໝ່ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງໄດ້ມີການແກ້ໄຂແລ້ວຢູ່ໃນລະດັບ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈຳນວນ | 5 | 21 | 46 | 17 | 11 | 100 |
| ສ່ວນຮ້ອຍ | 5.00 | 21.00 | 46.00 | 17.00 | 11.00 | 100 |

ຈາກເສັ້ນສະແດງ 30, ຜູ້ຕອບແບບສອບຖາມ ຈຳນວນ 46% ເຫັນວ່າຜ່ານມາການແກ້ໄຂບັນຫາໃນການກໍ່ສ້າງຜູ້ປະກອບກິດຈະການໃໝ່ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງໄດ້ມີການແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 21% ເຫັນວ່າແກ້ໄຂບັນຫາໄດ້ຫຼາຍ ແລະ ຈຳນວນ 5% ເຫັນວ່າແກ້ໄຂມີບັນຫາໄດ້ຫຼາຍທີ່ສຸດ.

ເສັ້ນສະແດງ 31 ຜ່ານມາການແກ້ໄຂບັນຫາໃນການຊ່ວຍເຫຼືອ ແລະ ການບໍລິການພັດທະນາທຸລະກິດຂະໜາດນ້ອຍ ແລະ ກາງ ໄດ້ມີການແກ້ໄຂແລ້ວຢູ່ໃນລະດັບ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈຳນວນ | 4 | 19 | 47 | 20 | 10 | 100 |
| ສ່ວນຮ້ອຍ | 4.00 | 19.00 | 47.00 | 20.00 | 10.00 | 100 |

ຈາກເສັ້ນສະແດງ 31, ຜູ້ຕອບແບບສອບຖາມ ຈຳນວນ 47% ເຫັນວ່າຜ່ານມາການແກ້ໄຂບັນຫາໃນການຊ່ວຍເຫຼືອ ແລະ ການບໍລິການພັດທະນາທຸລະກິດຂະໜາດນ້ອຍ ແລະ ກາງ ໄດ້ມີການແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 20% ເຫັນວ່າແກ້ໄຂບັນຫາໄດ້ໜ້ອຍ ແລະ ຈຳນວນ 4% ເຫັນວ່າແກ້ໄຂມີບັນຫາໄດ້ຫຼາຍທີ່ສຸດ.

ເສັ້ນສະແດງ 32 ຜ່ານມາການແກ້ໄຂບັນຫາການເພີ່ມຜະລິດຕະພາບ ເພື່ອຍົກລະດັບຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ແລະ ການບໍລິການຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ມີການແກ້ໄຂແລ້ວຢູ່ໃນລະດັບ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈຳນວນ | 1 | 26 | 36 | 29 | 8 | 100 |
| ສ່ວນຮ້ອຍ | 1.00 | 26.00 | 36.00 | 29.00 | 8.00 | 100 |

ຈາກເສັ້ນສະແດງ 32, ຜູ້ຕອບແບບສອບຖາມ ຈຳນວນ 36% ເຫັນວ່າຜ່ານມາການແກ້ໄຂບັນຫາການເພີ່ມຜະລິດຕະພາບ ເພື່ອຍົກລະດັບຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ແລະ ການບໍລິການຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ມີການແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 29% ເຫັນວ່າແກ້ໄຂບັນຫາໄດ້ໜ້ອຍ, ຈຳນວນ 26% ເຫັນວ່າແກ້ໄຂບັນຫາໄດ້ຫຼາຍ, ຈຳນວນ 8% ເຫັນວ່າແກ້ໄຂບັນຫາໄດ້ໜ້ອຍທີ່ສຸດ ແລະ ຈຳນວນ 1% ເຫັນວ່າແກ້ໄຂມີບັນຫາໄດ້ຫຼາຍທີ່ສຸດ.

ເສັ້ນສະແດງ 33 ການແກ້ໄຂບັນການເຂົ້າຫາຕະຫຼາດ ແລະ ການຂະຫຍາຍຕະຫຼາດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ມີການແກ້ໄຂແລ້ວຢູ່ໃນລະດັບ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈຳນວນ | 4 | 18 | 43 | 21 | 14 | 100 |
| ສ່ວນຮ້ອຍ | 4.00 | 18.00 | 43.00 | 21.00 | 14.00 | 100 |

ຈາກເສັ້ນສະແດງ 33, ຜູ້ຕອບແບບສອບຖາມ ຈຳນວນ 43% ເຫັນວ່າການແກ້ໄຂບັນການເຂົ້າຫາຕະຫຼາດ ແລະ ການຂະຫຍາຍຕະຫຼາດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ມີການແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 21% ເຫັນວ່າແກ້ໄຂບັນຫາໄດ້ໜ້ອຍ, ຈຳນວນ 18% ເຫັນວ່າແກ້ໄຂບັນຫາໄດ້ຫຼາຍ, ຈຳນວນ 14% ເຫັນວ່າແກ້ໄຂບັນຫາໄດ້ໜ້ອຍທີ່ສຸດ ແລະ ຈຳນວນ 4% ເຫັນວ່າແກ້ໄຂມີບັນຫາໄດ້ຫຼາຍທີ່ສຸດ.

ເສັ້ນສະແດງ 34 ມາດຕະການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນ ໄດ້ມີການປັບປຸງແກ້ໄຂແລ້ວຢູ່ໃນລະດັບ




ຈາກເສັ້ນສະແດງ 34, ຜູ້ຕອບແບບສອບຖາມ ຈຳນວນ 41% ເຫັນວ່າມາດຕະການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນ ໄດ້ມີການປັບປຸງແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 24% ເຫັນວ່າແກ້ໄຂບັນຫາໄດ້ໜ້ອຍ, ຈຳນວນ 22% ເຫັນວ່າແກ້ໄຂບັນຫາໄດ້ຫຼາຍ, ຈຳນວນ 9% ເຫັນວ່າແກ້ໄຂບັນຫາໄດ້ໜ້ອຍທີ່ສຸດ ແລະ ຈຳນວນ 4% ເຫັນວ່າແກ້ໄຂມີບັນຫາໄດ້ຫຼາຍທີ່ສຸດ.

ເສັ້ນສະແດງ 35 ວິທີການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະຂະໜາດກາງໃນປັດຈຸບັນໄດ້ມີການແກ້ໄຂແລ້ວຢູ່ໃນລະດັບ




ຈາກເສັ້ນສະແດງ 35, ຜູ້ຕອບແບບສອບຖາມ ຈຳນວນ 43% ເຫັນວ່າວິທີການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນໄດ້ມີການແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 25% ເຫັນວ່າແກ້ໄຂບັນຫາໄດ້ໜ້ອຍ, ຈຳນວນ 21% ເຫັນວ່າແກ້ໄຂບັນຫາໄດ້ຫຼາຍ, ຈຳນວນ 7% ເຫັນວ່າແກ້ໄຂບັນຫາໄດ້ໜ້ອຍທີ່ສຸດ ແລະ ຈຳນວນ 4% ເຫັນວ່າແກ້ໄຂມີບັນຫາໄດ້ຫຼາຍທີ່ສຸດ.

ເສັ້ນສະແດງ 36 ການເຂົ້າໃຊ້ມາດຕະການສົ່ງເສີມຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນໄດ້ມີການແກ້ໄຂແລ້ວຢູ່ໃນລະດັບ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈຳນວນ | 6 | 16 | 46 | 22 | 10 | 100 |
| ສ່ວນຮ້ອຍ | 6.00 | 16.00 | 46.00 | 22.00 | 10.00 | 100 |

ຈາກເສັ້ນສະແດງ 36, ຜູ້ຕອບແບບສອບຖາມ ຈຳນວນ 46% ເຫັນວ່າການເຂົ້າໃຊ້ມາດຕະການສົ່ງເສີມຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນໄດ້ມີການແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 22% ເຫັນວ່າແກ້ໄຂບັນຫາໄດ້ໜ້ອຍ ແລະ ຈຳນວນ 6% ເຫັນວ່າແກ້ໄຂມີບັນຫາໄດ້ຫຼາຍທີ່ສຸດ.

ເສັ້ນສະແດງ 37 ການແກ້ໄຂບັນຫາຄວາມເຂົ້າໃຈຂອງນັກທຸລະກິດ ແລະ ອົງການທີ່ກ່ຽວຂ້ອງຕໍ່ມາດຕະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງມີການແກ້ໄຂແລ້ວຢູ່ໃນລະດັບ




| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ໜ້ອຍ | ໜ້ອຍທີ່ສຸດ | ລວມ |
|---|---|---|---|---|---|---|
| ຈຳນວນ | 5 | 21 | 49 | 24 | 1 | 100 |
| ສ່ວນຮ້ອຍ | 5.00 | 21.00 | 49.00 | 24.00 | 1.00 | 100 |

ຈາກເສັ້ນສະແດງ 37, ຜູ້ຕອບແບບສອບຖາມ ຈຳນວນ 49% ເຫັນວ່າຜ່ານການແກ້ໄຂບັນຫາຄວາມເຂົ້າໃຈຂອງນັກທຸລະກິດ ແລະ ອົງການທີ່ກ່ຽວຂ້ອງຕໍ່ມາດຕະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງມີການແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 24% ເຫັນວ່າແກ້ໄຂບັນຫາໄດ້ໜ້ອຍ ແລະ ຈຳນວນ 1% ເຫັນວ່າແກ້ໄຂມີບັນຫາໄດ້ໜ້ອຍທີ່ສຸດ.

ຈາກເສັ້ນສະແດງ 28-37 ສາມາດຮັບຮູ້ການແກ້ໄຂບັນຫາ ແລະ ອຸປະສັກ ໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ ແຂວງຈຳປາສັກ ໄດ້ວ່າຜູ້ຕອບແບບສອບຖາມ ຈຳນວນ 36% ເຫັນວ່າຜ່ານມາການປັບປຸງສະພາບແວດລ້ອມທາງດ້ານລະບຽບການ ແລະ ການຄຸ້ມຄອງຂອງລັດຕໍ່ການເຄື່ອນໄຫວທຸລະກິດຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໄດ້ມີການແກ້ໄຂແລ້ວຢູ່ໃນລະດັບປານກາງ,ຈຳນວນ 34% ເຫັນວ່າຜ່ານມາການແກ້ໄຂບັນຫາການເຂົ້າຫາແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ມີການແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 46% ເຫັນວ່າຜ່ານມາການແກ້ໄຂບັນຫາໃນການກໍ່ສ້າງຜູ້ປະກອບກິດຈະການໃໝ່ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ມີການແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 47% ເຫັນວ່າຜ່ານມາການແກ້ໄຂບັນຫາໃນການຊ່ວຍເຫຼືອ ແລະ ການບໍລິການພັດທະນາທຸລະກິດຂະໜາດນ້ອຍ ແລະ ກາງ ໄດ້ມີການແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 36% ເຫັນວ່າຜ່ານມາການແກ້ໄຂບັນຫາການເພີ່ມຜະລິດຕະພາບ ເພື່ອຍົກລະດັບຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ແລະ ການບໍລິການຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ມີການແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 43% ເຫັນວ່າການແກ້ໄຂບັນການເຂົ້າຫາຕະຫຼາດ ແລະ ການຂະຫຍາຍຕະຫຼາດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ມີການແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 41% ເຫັນວ່າມາດຕະການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນ ໄດ້ມີການປັບປຸງແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 43% ເຫັນວ່າວິທີການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນໄດ້ມີການແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 46% ເຫັນວ່າການເຂົ້າໃຊ້ມາດຕະການສົ່ງເສີມຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນໄດ້ມີການແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 49% ເຫັນວ່າຜ່ານການແກ້ໄຂບັນຫາຄວາມເຂົ້າໃຈຂອງນັກທຸລະກິດ ແລະ ອົງການທີ່ກ່ຽວຂ້ອງຕໍ່ມາດຕະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງມີການແກ້ໄຂແລ້ວຢູ່ໃນລະດັບປານກາງ.

### 1.3 ສັງລວມຄຳເຫັນຈາກການສຳພາດ

ຈາກການສຳພາດຫົວໜ້າພະແນກແຜນການແລະການລົງທຶນ, ຫົວໜ້າຂະແໜງສົ່ງເສີມການຜະລິດສິນຄ້າ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງຈຳປາສັກ, ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າເມືອງປາກຊ່ອງ, ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ ແລະ ຫົວໜ້າຫ້ອງການແຜນການ ແລະ ການລົງທຶນເມືອງຊະນະສົມບູນ ຜູ້ທີ່ອາວຸໂສ ແລະ ມີປະສົບການໃນການເຮັດວຽກມາເປັນເວລາຫຼາຍປີ ດັ່ງນັ້ນສາມາດສັງລວມເປັນໝວດຄຳເຫັນ ໄດ້ດັ່ງລຸ່ມນີ້:

ຜູ້ໃຫ້ສໍາພາດເຫັນວ່າ ນິຕິກໍາ ແລະ ຫຼັກການຕ່າງໆກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງກໍານົດຂັ້ນຕອນ ແລະ ວິທີການສົ່ງເສີມໄວ້ພຽງພໍ ແລະ ລະອຽດຊັດເຈນແລ້ວ ໃນເມື່ອກ່ອນແມ່ນອີງໃສ່ດໍາລັດວ່າດ້ວຍການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 42/ນຍ ລົງວັນທີ 20 ເມສາ 2004 ໂດຍກໍານົດເອົາ 6 ນະໂຍບາຍ ຫຼືທິດທາງເປັນບຸລິມະສິດເພື່ອເປັນບ່ອນອີງໃນການສ້າງຍຸດທະສາດ ແລະ ແຜນດໍາເນີນງານສໍາລັບສົ່ງເສີມ ແຕ່ປັດຈຸບັນແມ່ນໃຊ້ກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງສະບັບລົງວັນທີ 21 ທັນວາ 2011 ເຫັນວ່າແມ່ນກວ້າງຂວາງ ແລະ ພຽງພໍລະອຽດຊັດເຈນແລ້ວ ໂດຍສະເພາະແມ່ນຂັ້ນຄຸ້ມຄອງ ແລະ ວິທີການສົ່ງເສີມຢູ່ໃນລະບຽບຫຼັກການແມ່ນອີງໃສ່ທ້ອງຖິ່ນເປັນຫົວໜ່ວຍຄອບຄົວຂະໜາດນ້ອຍອີງໃສ່ພູມປັນຍາທ້ອງຖິ່ນເປັນຫຼັກ ພາກລັດອໍານວຍຄວາມສະດວກແກ່ຜູ້ດໍາເນີນທຸລະກິດໂດຍອີງໃສ່ນິຕິກໍາ ແລະ ກໍານົດຂັ້ນຕອນຕາມເງື່ອນໄຂຂອງປະເພດທຸລະກິດນັ້ນໆ ແລະມີອະນຸກໍາມະການຄຸ້ມຄອງຕາມເງື່ອນໄຂແຕ່ລະທ້ອງຖິ່ນພ້ອມກັນປະຕິບັດໄປໃນລວງດຽວກັນ.

ຜູ້ໃຫ້ສໍາພາດ ໃຫ້ທັດສະນະວ່າ ບັນຫາ ແລະ ອຸປະສັກ ໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຢູ່ແຂວງຈໍາປາສັກ ປະກອບມີຫຼາຍບັນຫາເປັນຕົ້ນແມ່ນໂຄງປະກອບການຈັດຕັ້ງພະນັກງານຮັບຜິດຊອບພາກລັດບໍ່ມີ, ຫ້ອງການ ແລະ ພະນັກງານທີ່ເຮັດວຽກກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງໂດຍກົງຍັງບໍ່ມີ, ບໍ່ມີຄະນະຊີ້ນໍາຂັ້ນແຂວງໂດຍສະເພາະເຈາະຈົງ, ບໍ່ມີກອງທຶນສົ່ງເສີມ, ຂາດການປະສານງານລະຫວ່າງຂັ້ນທ້ອງຖິ່ນກັບສູນກາງ ແລະ ພາກສ່ວນທີ່ກ່ຽວຂ້ອງ, ບໍ່ມີຂໍ້ມູນທີ່ຊັດເຈນກ່ຽວກັບບັນຫາຂອງຜູ້ປະກອບການ, ຕະຫຼາດໃນການຈໍາໜ່າຍສິນຄ້າມີຈໍາກັດ, ສິນຄ້າທີ່ຜະລິດໂດຍຄົນພື້ນລະເມືອງລາວຍັງບໍ່ມີຄຸນນະພາບເທົ່າທີ່ຄວນ ແລະ ບໍ່ໄດ້ມາດຕະຖານຕາມຕະຫຼາດຕ້ອງການ ເຮັດໃຫ້ບໍ່ສາມາດແຂ່ງຂັນກັບສິນຄ້າຂອງຜູ້ປະກອບການທີ່ເປັນຄົນຕ່າງປະເທດໄດ້ນອກຈາກນັ້ນລາຄາສິນຄ້າທີ່ຜະລິດອອກມາຍັງບໍ່ໝັ້ນຄົງຍັງຂຶ້ນລົງເລື້ອຍໆ ເປັນຕົ້ນ.

ຜ່ານມາແຂວງຈໍາປາສັກມີວິທີການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຄືຕາມທັດສະນະ ແລະ ປະສົບການຂອງຜູ້ຕອບຄໍາຖາມສໍາພາດ ແມ່ນຫັນເອົາແນວທາງນະໂຍບາຍຂອງພັກລັດໃຫ້ສອດຄ່ອງກັບນະໂຍບາຍສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ, ເປີດກວ້າງສົ່ງເສີມໃຫ້ຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດເຂົ້າມາລົງທຶນດ້ວຍຫຼາຍຮູບແບບ ຕາມເງື່ອນໄຂຄວາມບົ່ມຊ້ອນຂອງແຕ່ລະທ້ອງຖິ່ນ ແລະ ຕາມຄວາມອາດສາມາດຂອງຜູ້ລົງທຶນ, ການຊອກແຫຼ່ງທຶນໃຫ້ຜູ້ປະກອບການ, ການປະຕິບັດນະໂຍບາຍເລື່ອງພາສີອາກອນ ແລະ ຊອກຫາຕະຫຼາດໃຫ້ເພື່ອຈໍາໜ່າຍສິນຄ້າເຊັ່ນ ການເປີດຕະຫຼາດນັດເພື່ອໃຫ້ມີການໂຄສະນາສິນຄ້າຂອງເຂົາເຈົ້າ, ເນັ້ນສົ່ງເສີມວິສາຫະກິດທີ່ເກີດຂຶ້ນໃໝ່, ມີການຮັກສາບາງທຸລະກິດເພື່ອໃຫ້ຄົນລາວໄດ້ດໍາເນີນທຸລະກິດດ້ວຍຕົນເອງ.

ຜູ້ໃຫ້ສຳພາດເຫັນວ່າ ຜ່ານມາແຂວງຈຳປາສັກໄດ້ໃຊ້ມາດຕະການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຄື ໂດຍລວມແລ້ວແມ່ນອີງໃສ່ກົດໝາຍ, ດຳລັດ ແລະ ຄຳສັ່ງແນະນຳຕ່າງໆ, ນະໂຍບາຍດ້ານພາສີອາກອນ, ການຈັດຝຶກອົບຮົມ, ໄດ້ເພີ່ມທະວີການສະໜອງຂໍ້ມູນຂ່າວສານ, ສົ່ງເສີມຂະບວນການສ້າງໜຶ່ງເມືອງໜຶ່ງຜະລິດຕະພັນ, ຊຸກຍູ້ໃຫ້ມີບໍລິສັດເພື່ອເກັບຊື້ ແລະ ຈຳໜ່າຍຜະລິດຕະພັນວິສາຫະກິດຂະໜາດນ້ອຍ ແລະ ກາງ, ປັບປຸງການເຂົ້າຫາແຫຼ່ງທຶນ, ສ້າງສິ່ງອຳນວຍຄວາມສະດວກທາງດ້ານການຄ້າ, ສ້າງເງື່ອນໄຂໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງໄດ້ຮັບການສະໜອງການຈັດຊື້ ແລະ ການບໍລິການຂອງພາກລັດ ນອກຈາກນັ້ນແຂວງຈຳປາສັກໄດ້ມີຄວາມພະຍາຍາມຈັດຕັ້ງເປັນກຸ່ມການຜະລິດ (ເອີ້ນວ່າສະຫະກອນການຜະລິດ) ພ້ອມທັງມີການເຜີຍແຜ່ເອກະສານ ແລະ ຕິດຕາມກວດກາແນະນຳຜູ້ປະກອບການຈັດຕັ້ງປະຕິບັດໃຫ້ໄປຕາມລະບຽບກົດໝາຍກຳນົດໄວ້ກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ.

ຜູ້ໃຫ້ສຳພາດໃຫ້ທັດສະນະວ່າ ວິທີການແກ້ໄຂບັນຫາ ແລະ ອຸປະສັກໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ ແຂວງຈຳປາສັກທີ່ມີປະສິດທິພາບຄວນປະຕິບັດຕາມລະບຽບກົດໝາຍ ໂດຍຜັນຂະຫຍາຍນິຕິກຳລະບຽບການໃຫ້ກວ້າງຂວາງ ແລະ ເຂົ້າເຖິງນັກລົງທຶນທີ່ເປັນຜູ້ປະກອບການວິສາຫະກິດຂະໜາດນ້ອຍຂັ້ນທ້ອງຖິ່ນໃຫ້ທົ່ວເຖິງ ແລະ ຄວນສ້າງວິຊາການທີ່ເຂັ້ມແຂງຂຶ້ນກວ່າເກົ່າ ເພື່ອຝຶກອົບຮົມໃຫ້ແກ່ຜູ້ປະກອບການທີ່ເປັນວິສາຫະກິດຂະໜາດນ້ອຍ; ຕ້ອງມີການເປີດກອງປະຊຸມປຶກສາຫາລືໃຫ້ກຳນົດນະໂຍບາຍທີ່ມີຄວາມເປັນເອກະພາບລະຫວ່າງພາກລັດກັບນັກທຸລະກິດ ໂດຍໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງເປັນໃຈກາງໃນການຄຸ້ມຄອງ ແລະ ອຳນວຍຄວາມສະດວກໃນດ້ານຕ່າງໆ ດັ່ງນັ້ນຕ້ອງມີການສ້າງຂອດປະສານງານກັບທຸກພາກສ່ວນທີ່ກ່ຽວຂ້ອງ ພ້ອມທັງສ້າງພະນັກງານທີ່ມີຄວາມຮູ້ສະເພາະດ້ານເພື່ອສົ່ງເສີມວິສາຫະກິດດັ່ງກ່າວ ນອກຈາກນັ້ນຄວນຈັດໃຫ້ມີໜ່ວຍງານເພື່ອເປັນທີ່ປຶກສາຢ່າງໃກ້ຊິດຕິດຕາມ ແລະ ຊອກຫາຕະຫຼາດພາຍນອກຊ່ວຍເຂົາເຈົ້າ ເປັນຕົ້ນແມ່ນການໄປເປີດໂຕສິນຄ້າທັງຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອເປັນການສົ່ງເສີມ ແລະ ຂະຫຍາຍຕະຫຼາດສູ່ພາຍນອກ, ໃຫ້ມີການພັດທະນາແຫຼ່ງທຶນໃຫ້ຫຼາຍຂຶ້ນເພື່ອໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງໄດ້ເຂົ້າເຖິງແຫຼ່ງທຶນໄດ້ສະດວກກວ່າເກົ່າ.

## 2. ວິເຄາະຜົນການສຶກສາ

ຈາກການທີ່ຜູ້ຕອບແບບສອບຖາມຈຳນວນ 55% ເຫັນວ່າ ກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ກຳນົດເລື່ອງການສົ່ງເສີມໄວ້ຄົບຖ້ວນພຽງພໍແລ້ວລະດັບຫຼາຍ ໂດຍກຳນົດເອົາ 13 ນະໂຍບາຍ ຫຼື ທິດທາງເປັນບຸລິມະສິດເພື່ອເປັນບ່ອນອີງໃນການສ້າງຍຸດທະສາດ ແລະ ແຜນດຳເນີນງານສຳລັບສົ່ງເສີມວິສາຫະກິດຂະໜາດ

ນ້ອຍ ແລະ ຂະໜາດກາງ, ຈຳນວນ 46% ເຫັນວ່າຜ່ານມາການເຂົ້າຫາແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງມີຄວາມຄອດສ່ອງກັບຫຼັກການທາງກົດໝາຍໃນລະດັບປານກາງ ຊຶ່ງທ່ານຫົວໜ້າພະແນກແຜນການ ແລະ ການລົງທຶນ ແຂວງຈຳປາສັກຊຶ່ງເປັນຜູ້ຊີ້ນຳລວມກ່ຽວກັບວຽກງານການສົ່ງເສີມວິສາຫະກິດໄດ້ໃຫ້ທັດສະນະວ່າຜ່ານມາການເຂົ້າເຖິງແຫຼ່ງທຶນຂອງນັກທຸລະກິດຍັງຈຳກັດ ຍ້ອນວ່າຂາດກອງທຶນໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງເປັນອັນສະເພາະເຈາະຈົງ.[58]

ຜູ້ຕອບແບບສອບຖາມຈຳນວນ 49% ເຫັນວ່າ ມາດຕະການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີຄວາມສອດຄ່ອງກັບສະພາບຕົວຈິງໃນລະດັບປານກາງ, ຈຳນວນ 55% ເຫັນວ່າວິທີການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີຄວາມສອດຄ່ອງກັບສະພາບຕົວຈິງໃນລະດັບປານກາງ, ຈຳນວນ 49% ເຫັນວ່າການເຂົ້າໃຊ້ມາດຕະການສົ່ງເສີມຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີຄວາມສອດຄ່ອງກັບສະພາບຕົວຈິງໃນລະດັບປານກາງ ແລະ ຈຳນວນ 46% ເຫັນວ່າ ຄວາມເຂົ້າໃຈຕໍ່ມາດຕະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຂອງອົງການທີ່ກ່ຽວຂ້ອງມີຄວາມພຽງພໍແລ້ວໃນລະດັບປານກາງ ທີ່ຜ່ານມາມາດຕະການ ແລະ ວິທີການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກແມ່ນອີງໃສ່ກົດໝາຍ, ດຳລັດ ແລະ ຄຳສັ່ງແນະນຳຕ່າງໆ, ນະໂຍບາຍດ້ານພາສີອາກອນ, ການຈັດຝຶກອົບຮົມໄດ້ເພີ່ມທະວີການສະໜອງຂໍ້ມູນຂ່າວສານ, ສົ່ງເສີມຂະບວນການສ້າງໜຶ່ງເມືອງໜຶ່ງຜະລິດຕະພັນ, ຊຸກຍູ້ໃຫ້ມີບໍລິສັດເພື່ອເກັບຊື້ ແລະ ຈຳໜ່າຍຜະລິດຕະພັນວິສາຫະກິດຂະໜາດນ້ອຍ ແລະ ກາງ, ປັບປຸງການເຂົ້າຫາແຫຼ່ງທຶນ, ສ້າງສິ່ງອຳນວຍຄວາມສະດວກທາງດ້ານການຄ້າ, ສ້າງເງື່ອນໄຂໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງໄດ້ຮັບການສະໜອງການຈັດຊື້.[59]

ບັນຫາ ແລະ ອຸປະສັກ ໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ ແຂວງຈຳປາສັກໄດ້ວ່າຜູ້ຕອບແບບສອບຖາມຈຳນວນ 36% ເຫັນວ່າຜ່ານມາການເຂົ້າຫາແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີບັນຫາໃນລະດັບປານກາງ, ຈຳນວນ 41% ເຫັນວ່າຜ່ານມາການກໍ່ສ້າງຜູ້ປະກອບກິດຈະການໃໝ່ຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີບັນຫາໃນລະດັບປານກາງ, ຈຳນວນ 46% ເຫັນວ່າຜ່ານມາການໃຫ້ການຊ່ວຍເຫຼືອ ແລະ ການບໍລິການພັດທະນາທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີບັນຫາໃນລະດັບປານກາງ, ຈຳນວນ 41% ເຫັນວ່າຜ່ານມາເພີ່ມຜະລິດຕະ

---

[58] ສຳພາດ ຫົວໜ້າພະແນກແຜນການ ແລະ ການລົງທຶນ ແຂວງຈຳປາສັກ, ຄັ້ງວັນທີ 16 ສິງຫາ 2017.

[59] ສຳພາດ ຫົວໜ້າຂະແໜງສົ່ງເສີມການຜະລິດສິນຄ້າ, ພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ, ຄັ້ງວັນທີ 16 ສິງຫາ 2017

ພາບເພື່ອຍົກລະດັບຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ແລະ ການບໍລິການຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ມີບັນຫາໃນລະດັບປານກາງ, ຈຳນວນ 32% ເຫັນວ່າການເຂົ້າຫາຕະຫຼາດ ແລະ ການຂະຫຍາຍຕະຫຼາດຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີບັນຫາໃນລະດັບປານກາງ, ຈຳນວນ 38% ເຫັນວ່າມາດຕະການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີບັນຫາໃນລະດັບປານກາງ, ຈຳນວນ 44% ເຫັນວ່າວິທີການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີບັນຫາໃນລະດັບປານກາງ.

ຈຳນວນ 45% ເຫັນວ່າການເຂົ້າໃຊ້ມາດຕະການສົ່ງເສີມຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີບັນຫາໃນລະດັບປານກາງ, ຈຳນວນ 44% ເຫັນວ່າບັນຫາຄວາມເຂົ້າໃຈຂອງນັກທຸລະກິດ ແລະ ອົງການທີ່ກ່ຽວຂ້ອງຕໍ່ມາດຕະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີໃນລະດັບປານກາງ ຈາກການສຳພາດຜູ້ອາວຸດໂສເຖິງບັນຫາ ແລະ ອຸປະສັກໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ການເຫັນວ່າເກີດຈາກໂຄງປະກອບການຈັດຕັ້ງພະນັກງານຮັບຜິດຊອບພາກລັດບໍ່ມີ, ຫ້ອງການ ແລະ ພະນັກງານທີ່ເຮັດວຽກກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງໂດຍກົງຍັງບໍ່ມີ, ບໍ່ມີຄະນະຊີ້ນຳຂັ້ນແຂວງໂດຍສະເພາະເຈາະຈົງ, ບໍ່ມີກອງທຶນສົ່ງເສີມ, ຂາດການປະສານງານລະຫວ່າງຂັ້ນທ້ອງຖິ່ນກັບສູນກາງ ແລະ ພາກສ່ວນທີ່ກ່ຽວຂ້ອງ, ບໍ່ມີຂໍ້ມູນທີ່ຊັດເຈນກ່ຽວກັບບັນຫາຂອງຜູ້ປະກອບການ, ຕະຫຼາດໃນການຈຳໜ່າຍສິນຄ້າມີຈຳກັດ, ສິນຄ້າທີ່ຜະລິດໂດຍຄົນພື້ນລະເມືອງລາວຍັງບໍ່ມີຄຸນນະພາບເທົ່າທີ່ຄວນ ແລະ ບໍ່ໄດ້ມາດຕະຖານຕາມຕະຫຼາດຕ້ອງການ ເຮັດໃຫ້ບໍ່ສາມາດແຂ່ງຂັນກັບສິນຄ້າຂອງຜູ້ປະກອບການທີ່ເປັນຄົນຕ່າງປະເທດ.[60]

ການແກ້ໄຂບັນຫາ ແລະ ອຸປະສັກ ໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ ແຂວງຈຳປາສັກ ນັ້ນ ຜູ້ຕອບແບບສອບຖາມ ຈຳນວນ 36% ເຫັນວ່າຜ່ານມາການປັບປຸງສະພາບແວດລ້ອມທາງດ້ານລະບຽບການ ແລະ ການຄຸ້ມຄອງຂອງລັດຕໍ່ການເຄື່ອນໄຫວທຸລະກິດຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີການແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 34% ເຫັນວ່າຜ່ານມາການແກ້ໄຂບັນຫາການເຂົ້າຫາແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ມີການແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 46% ເຫັນວ່າຜ່ານມາການແກ້ໄຂບັນຫາໃນການກໍ່ສ້າງຜູ້ປະກອບກິດຈະການໃໝ່ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ມີການແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 47% ເຫັນວ່າຜ່ານມາການແກ້ໄຂບັນຫາໃນການຊ່ວຍເຫຼືອ ແລະ ການບໍລິການພັດທະນາທຸລະກິດຂະໜາດນ້ອຍ ແລະ ກາງ ມີການແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 36%

---

[60] ສຳພາດ ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງປາກຊ່ອງ, ແຂວງຈຳປາສັກ, ຄັ້ງວັນທີ 17 ສິງຫາ 2017.

ເຫັນວ່າຜ່ານມາການແກ້ໄຂບັນຫາການເພີ່ມຜະລິດຕະພາບ ເພື່ອຍົກລະດັບຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ແລະ ການບໍລິການຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ມີການແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 43% ເຫັນວ່າການແກ້ໄຂບັນການເຂົ້າຫາຕະຫຼາດ ແລະ ການຂະຫຍາຍຕະຫຼາດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ມີການແກ້ໄຂແລ້ວຢູ່ໃນລະດັບປານກາງ ຕໍ່ກັບການແກ້ໄຂບັນຫາດັ່ງກ່າວເຈົ້າໜ້າທີ່ອາວຸດໂສທີ່ເຮັດວຽກງານທີ່ກ່ຽວຂ້ອງກັບການສົ່ງເສີມວິສາຫະກິດໄດ້ໃຫ້ທັດສະນະວ່າ ຄວນຜັນຂະຫຍາຍນິຕິກຳລະບຽບການໃຫ້ກວ້າງຂວາງ ແລະ ເຂົ້າເຖິງນັກລົງທຶນທີ່ເປັນຜູ້ປະກອບການວິສາຫະກິດຂະໜາດນ້ອຍຂັ້ນທ້ອງຖິ່ນ ແລະ ຄວນສ້າງວິຊາການທີ່ເຂັ້ມແຂງຂຶ້ນກວ່າເກົ່າ ເພື່ອຝຶກອົບຮົມໃຫ້ແກ່ຜູ້ປະກອບການທີ່ເປັນວິສາຫະກິດຂະໜາດນ້ອຍ; ຕ້ອງມີການເປີດກອງປະຊຸມປຶກສາຫາລືໃຫ້ກຳນົດນະໂຍບາຍທີ່ມີຄວາມເປັນເອກະພາບລະຫວ່າງພາກລັດກັບນັກທຸລະກິດ ໂດຍໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ເປັນໃຈກາງໃນການຄຸ້ມຄອງ ແລະ ອຳນວຍຄວາມສະດວກໃນດ້ານຕ່າງໆ.[61]

ຈຳນວນ 41% ເຫັນວ່າມາດຕະການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນ ໄດ້ມີການປັບປຸງແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 43% ເຫັນວ່າວິທີການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນໄດ້ມີການແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 46% ເຫັນວ່າການເຂົ້າໃຊ້ມາດຕະການສົ່ງເສີມຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນໄດ້ມີການແກ້ໄຂແລ້ວຢູ່ໃນລະດັບປານກາງ, ຈຳນວນ 49% ເຫັນວ່າຜ່ານການແກ້ໄຂບັນຫາຄວາມເຂົ້າໃຈຂອງນັກທຸລະກິດ ແລະ ອົງການທີ່ກ່ຽວຂ້ອງຕໍ່ມາດຕະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງມີການແກ້ໄຂແລ້ວຢູ່ໃນລະດັບປານກາງ ຜູ້ທີ່ເຮັດວຽກຕົວຈິ່ງໄດ້ໃຫ້ທັດສະນະຕໍ່ການແກ້ໄຂບັນຫາວ່າ ຕ້ອງມີການສ້າງຂອດປະສານງານກັບທຸກພາກສ່ວນທີ່ກ່ຽວຂ້ອງ ພ້ອມທັງສ້າງພະນັກງານທີ່ມີຄວາມຮູ້ສະເພາະດ້ານເພື່ອສົ່ງເສີມວິສາຫະກິດດັ່ງກ່າວ ນອກຈາກນັ້ນຄວນຈັດໃຫ້ມີໜ່ວຍງານເພື່ອເປັນທີ່ປຶກສາຢ່າງໃກ້ຊິດຕິດຕາມ ແລະ ຊອກຫາຕະຫຼາດພາຍນອກຊ່ວຍເຂົາເຈົ້າ ເປັນຕົ້ນແມ່ນການໄປເປີດໂຕສິນຄ້າທັງຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອເປັນການສົ່ງເສີມ ແລະ ຂະຫຍາຍຕະຫຼາດສູ່ພາຍນອກ, ໃຫ້ມີການພັດທະນາແຫຼ່ງທຶນໃຫ້ຫຼາຍຂຶ້ນເພື່ອໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງໄດ້ເຂົ້າເຖິງແຫຼ່ງທຶນໄດ້ສະດວກກວ່າເກົ່າ.[62]

---

[61] ສຳພາດ ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງຊະນະສົມບູນ, ແຂວງຈຳປາສັກ, ຄັ້ງວັນທີ 18 ສິງຫາ 2017.

[62] ສຳພາດ ຫົວໜ້າຫ້ອງການແຜນການ ແລະ ການລົງທຶນ ເມືອງຊະນະສົມບູນ, ແຂວງຈຳປາສັກ, ຄັ້ງວັນທີ 18 ສິງຫາ 2017.

# ພາກທີ V
# ສະຫຼຸບ ແລະ ຂໍ້ສະເໜີ

## 1. ສະຫຼຸບ

ການສຶກສາວິທະຍານິພົນປະລິນຍາໂທນິຕິສາດ ສາຂາກົດໝາຍທຸລະກິດໃນຫົວຂໍ້: ມາດຕະການທາງກົດໝາຍຕໍ່ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ ແຂວງຈຳປາສັກ ມີຈຸດປະສົງເພື່ອສຶກສາຫຼັກການຕ່າງໆກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ; ສຶກສາວິທີການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະຂະໜາດກາງຢູ່ແຂວງຈຳປາສັກ; ສຶກສາບັນຫາ ແລະ ການຊອກຫາວິທີການແກ້ໄຂບັນຫາ ໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ ແລະ ຈາກການຕັ້ງສົມມຸດຕິຖານໄວ້ວ່າການໃຊ້ມາດຕະການທາງດ້ານກົດໝາຍໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກຍັງບໍ່ສອດຄ່ອງກັບສະພາບຕົວຈິງເຮັດໃຫ້ຜູ້ປະກອບກິດຈະການພົບບັນຫາຫຍຸ້ງຍາກໃນການເຂົ້າເຖິງມາດຕະການສົ່ງເສີມການລົງທຶນຂອງລັດ ຊຶ່ງສາມາດສະຫຼຸບຜົນການສຶກສາໃນຄັ້ງນີ້ຄື:

ຈາກຜົນຂອງການສຶກສາສາມາດສະຫຼຸບຕາມຈຸດປະສົງ ແລະ ສົມມຸດຕິຖານທີ່ໄດ້ກຳນົດໄວ້ໃນເບື້ອງຕົ້ນໄດ້ດັ່ງນີ້: ຫຼັກການຕ່າງໆກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໄດ້ກຳນົດເລື່ອງການສົ່ງເສີມໄວ້ຄົບຖ້ວນພຽງພໍແລ້ວລະດັບຫຼາຍ, ຜ່ານມາການປັບປຸງສະພາບແວດລ້ອມທາງດ້ານລະບຽບການ ແລະ ການຄຸ້ມຄອງຂອງລັດຕໍ່ການເຄື່ອນໄຫວທຸລະກິດຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີຄວາມສອດສ່ອງກັບຫຼັກການທາງກົດໝາຍໃນລະດັບຫຼາຍ, ຜ່ານມາການເຂົ້າຫາແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີຄວາມສອດສ່ອງກັບຫຼັກການທາງກົດໝາຍໃນລະດັບປານກາງ, ຜ່ານມາການກໍ່ສ້າງຜູ້ປະກອບກິດຈະການໃໝ່ຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງມີຄວາມສອດສ່ອງກັບຫຼັກການທາງກົດໝາຍໃນລະດັບປານກາງ, ຜ່ານມາການໃຫ້ການຊ່ວຍເຫຼືອ ແລະ ການບໍລິການພັດທະນາທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງມີຄວາມສອດສ່ອງກັບຫຼັກການທາງກົດໝາຍໃນລະດັບປານກາງ, ຜ່ານມາການເພີ່ມຜະລິດຕະພາບເພື່ອຍົກລະດັບຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ແລະ ການບໍລິການຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີຄວາມສອດສ່ອງກັບຫຼັກການທາງກົດໝາຍໃນລະດັບປານກາງ, ການເຂົ້າຫາຕະຫຼາດ ແລະ ການຂະຫຍາຍຕະຫຼາດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ຄວາມສອດສ່ອງກັບຫຼັກການທາງກົດໝາຍສອດຄ່ອງໃນລະດັບປານກາງ ສ່ວນມາດຕະການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນ

ປັດຈຸບັນມີຄວາມສອດຄ່ອງກັບສະພາບຕົວຈິງໃນລະດັບປານກາງ, ວິທີການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີຄວາມສອດຄ່ອງກັບສະພາບຕົວຈິງໃນລະດັບປານກາງ, ການເຂົ້າເຖິງມາດຕະການສົ່ງເສີມຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີຄວາມສອດຄ່ອງກັບສະພາບຕົວຈິງໃນລະດັບປານກາງ ແລະ ຄວາມເຂົ້າໃຈຕໍ່ມາດຕະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຂອງອົງການທີ່ກ່ຽວຂ້ອງມີຄວາມພຽງພໍແລ້ວໃນລະດັບປານກາງ.

ບັນຫາ ແລະ ອຸປະສັກ ໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ ແຂວງຈຳປາສັກ ເຫັນວ່າຜ່ານມາການປັບປຸງສະພາບແວດລ້ອມທາງດ້ານລະບຽບການ ແລະ ການຄຸ້ມຄອງຂອງລັດຕໍ່ການເຄື່ອນໄຫວທຸລະກິດຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງມີບັນຫາໃນລະດັບປານກາງ, ຜ່ານມາການເຂົ້າຫາແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີບັນຫາໃນລະດັບປານກາງ, ຜ່ານມາການກໍ່ສ້າງຜູ້ປະກອບກິດຈະການໃໝ່ຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີບັນຫາໃນລະດັບປານກາງ, ຜ່ານມາການໃຫ້ການຊ່ວຍເຫຼືອ ແລະ ການບໍລິການພັດທະນາທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີບັນຫາໃນລະດັບປານກາງ, ຜ່ານມາເພີ່ມຜະລິດຕະພາບ ເພື່ອຍົກລະດັບຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ແລະ ການບໍລິການຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງມີບັນຫາໃນລະດັບປານກາງ, ການເຂົ້າຫາຕະຫຼາດ ແລະ ການຂະຫຍາຍຕະຫຼາດຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີບັນຫາໃນລະດັບປານກາງ ສ່ວນມາດຕະການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີບັນຫາໃນລະດັບປານກາງ, ວິທີການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີບັນຫາໃນລະດັບປານກາງ, ການເຂົ້າໃຊ້ມາດຕະການສົ່ງເສີມຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີບັນຫາໃນລະດັບປານກາງ, ບັນຫາຄວາມເຂົ້າໃຈຂອງນັກທຸລະກິດ ແລະ ອົງການທີ່ກ່ຽວຂ້ອງຕໍ່ມາດຕະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີໃນລະດັບປານກາງ.

ຈາກການສະຫຼຸບຂ້າງເທິງ ສາມາດເວົ້າໄດ້ວ່າສົມມຸດຕິຖານທີ່ຕັ້ງເອົາໄວ້ເບື້ອງຕົ້ນມີຄວາມເປັນຈິງລະດັບປານກາງຫາຫຼາຍ ເພາະວ່າການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຢູ່ແຂວງຈຳປາສັກຍັງພົບບັນຫາ ແລະ ອຸປະສັກຫຼາຍຢ່າງ ຊຶ່ງໃນນັ້ນສາເຫດອັນສຳຄັນເກີດຈາກການຂາດໜ່ວຍງານທີ່ຮັບຜິດຊອບເປັນອັນສະເພາະເຈາະຈົງໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ເປັນສາເຫດໃຫ້ຂາດການປະສານງານລະຫວ່າງໜ່ວຍງານຂອງລັດກັບນັກທຸລະກິດ ອີກທັງນັກທຸລະກິດຍັງບໍ່ເຂົ້າໃຈຕໍ່ມາດຕະການຕ່າງໆ ເນື່ອງຈາກຂາດການເຜີຍແຜ່ນິຕິກຳ ແລະ ລະບຽບການເຮັດໃຫ້ການຮັບຮູ້ ແລະ ເຂົ້າໃຊ້ມາດຕະການສົ່ງເສີມຍັງບໍ່ທັນໄດ້ດີເທົ່າທີ່ຄວນ.

## 2. ຂໍ້ສະເໜີ

ເພື່ອເປັນປັບປຸງການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ ແຂວງຈຳປາສັກ ຈຶ່ງສະເໜີວ່າ:

- ຕ້ອງມີການເຜີຍແຜ່ກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃຫ້ກັບນັກທຸລະກິດ ແລະ ປະຊາຊົນເພື່ອໃຫ້ຮັບຮູ້ ແລະ ເຂົ້າໃຈເຖິງມາດຕະການຕ່າງໆໃນການສົ່ງເສີມ;

- ຄວນມີການຜັນຂະຫຍາຍກົດໝາຍ ຫຼື ຂໍ້ກຳນົດໃຫ້ລະອຽດ ເພື່ອເປັນບ່ອນອີງທາງດ້ານນິຕິກຳ ແລະ ກໍຈະເປັນການກຳນົດຫຼັກການ, ວິທີການ ແລະ ຂັ້ນຕອນທີ່ລະອຽດຂອງການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃຫ້ຫຼາຍຂື້ນກວ່າປັດຈຸບັນ;

- ຕ້ອງເລັ່ງສ້າງຕັ້ງໜ່ວຍງານທີ່ຮັບຜິດຊອບໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງທີ່ເປັນອັນສະເພາະເຈາະຈົງໃຫ້ໄວຂື້ນ ເພື່ອເປັນໜ່ວຍງານໃນການປະສານງານລະຫວ່າງສູນກາງກັບທ້ອງຖິ່ນ ແລະ ໜ່ວຍງານຂອງລັດກັບພາກທຸລະກິດ ເພື່ອເຮັດວຽກງານການສົ່ງເສີມໄດ້ຮັບການປັບປຸງໂດຍໄວ;

- ຄວນເລັ່ງການສ້າງຕັ້ງກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃຫ້ເປັນຮູບປະທຳໂດຍໄວ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຜູ້ປະກອບກິດຈະການໃຫ້ໄດ້ຕາມວັດຖຸປະສົງ ແລະ ເປັນການເຮັດນັກທຸລະກິດສາມາດເຂົ້າເຖິງແຫຼ່ງທຶນໃນການຂະຫຍາຍທຸລະກິດຂອງຕົນເອງໄດ້ໄວຂື້ນ;

- ຕ້ອງມີການຝຶກອົບຮົມໃຫ້ປະຊາຊົນທີ່ຕ້ອງການປະກອບທຸລະກິດ ໃຫ້ມີຄວາມຮູ້ຫຼືແນວທາງໃນການຜັນຂະຫຍາຍການຜະລິດຂອງຕົນເອງໃຫ້ກາຍເປັນສິນຄ້າທີ່ຕະຫຼາດຍອມຮັບ ເພື່ອໃຫ້ສິນຄ້າໄດ້ມາດຕະຖານ ແລະ ຄຸນນະພາບສູງຂື້ນ;

- ຊອກຫາວິທີທາງໃນການເຂົ້າຫາຕະຫຼາດຂອງຫົວໜ່ວຍທຸລະກິດທີ່ເປັນຜູ້ຜະລິດທ້ອງຖິ່ນ ຫຼື ພູມປັນຍາຊາວບ້ານໃຫ້ເຂົາເຈົ້າຮູ້ຈັກຊ່ອງທາງໃນການຈັດຈຳໜ່າຍ ເມື່ອຜະລິດສິນຄ້າອອກມາແລ້ວຕ້ອງມີຕະຫຼາດຮອງຮັບສິນຄ້າຂອງພວກເຂົາ;

- ຜູ້ທີ່ຮັບຜິດຊອບວຽກງານການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຕ້ອງໄດ້ຮັບການຝຶກອົບຮົມກ່ຽວກັບການສົ່ງເສີມຢ່າງຕໍ່ເນື່ອງ ແລະ ລຽນຕິດ.

# ເອກະສານອ້າງອີງ

## ເອກະສານພາສາລາວ


ມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງ ພັກປະຊາຊົນປະຕິວັດລາວ, ປີ 2016.

ເອກະສານກອງປະຊຸມໃຫຍ່ຄັ້ງທີ IX ຂອງ ພັກປະຊາຊົນປະຕິວັດລາວ, ປີ 2011.

ເອກະສານກອງປະຊຸມໃຫຍຄັ້ງທີ VIII ຂອງ ພັກປະຊາຊົນປະຕິວັດລາວ, ປີ 2006.

ເອກະສານກອງປະຊຸມໃຫຍຄັ້ງທີ VII ຂອງ ພັກປະຊາຊົນປະຕິວັດລາວ, ປີ 2001.

ເອກະສານກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ, ຄັ້ງທີ V, ປີ 1998.

ລັດຖະທຳມະນູນ ແຫ່ງ ສປປ ລາວ (ສະບັບປັບປຸງ), ປີ 2015.

ກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ, ປີ 2011.

ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ), ປີ 2013.

ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ), ປີ 2016.

ກົດໝາຍວ່າດ້ວຍພາສີ (ສະບັບປັບປຸງ), ປີ 2011.

ກົດໝາຍວ່າດ້ວຍພາສີ (ສະບັບປັບປຸງ), ປີ 2014.

ກົດໝາຍວ່າດ້ວຍສ່ວຍສາອາກອນ (ສະບັບປັບປຸງ), ປີ 2015.

ດຳລັດ ວ່າດ້ວຍການຈັດແບ່ງຂະໜາດ ວິສະຫາກິດຂະໜາດນ້ອຍ ແລະ ກາງ, ສະບັບເລກທີ 25/ລບ, ລົງວັນທີ 16 ມັງກອນ 2017.

ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020).

ມະຕິກອງປະຊຸມຄະນະບໍລິຫານງານພັກແຂວງຈຳປາສັກ, ຄັ້ງທີ II, ສະໄໝທີ VII, ປີ 2016.

ແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ VIII (2016-20120), ແຂວງ ຈຳປາສັກ,ປີ 2016.

ແຜນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VII ຂອງຄະນະປະຈຳພັກແຂວງຈຳປາສັກ ແລະ ແຜນພັດທະນາເສດຖະກິດ ຄັ້ງທີ VIII ຂອງແຂວງຈຳປາສັກ ແຕ່ປີ 2016-2020 ໃນຂົງເຂດອຸດສາຫະກຳ ແລະ ການຄ້າ, ປີ 2015.

ການສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມ 5 ປີຄັ້ງທີVII (2011-2015) ແລະທິດທາງແຜນການ 5 ປີ ຄັ້ງທີ VIII (2016-2020) ຂອງແຂວງຈຳປາສັກ, ປີ 2015.

ບົດລາຍງານສະພາບການພັດທະນາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຂອງ ແຂວງ ຈຳປາສັກ ປີ 2016.

ແຜນການສົ່ງເສີມ ແລະ ພັດທະນາສິນຄ້າຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ, ປີ 2015.

ຍອດຊາຍ ດາລາສັກ, ນະໂຍບາຍ ແລະ ກົດໝາຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອຮອງຮັບປະຊາຄົມເສດຖະກິດອາຊຽນ, ວິທະຍານິພົນປະລິຍາມະຫາບັນດິດ, ສາຂາວິຊາ ນິຕິເສດຖະສາດການຄ້າລະຫວ່າງປະເທດ, ມະຫາວິທະຍາໄລທຳມະສາດ, ປີ 2014. (ສະບັບພາສາໄທ)

ຊົງພົນ ທອງສິນ, ມາດຕະການທາງດ້ານກົດໝາຍກ່ຽວກັບການສົ່ງເສີມວິສະຫາກິດຂະໜາດນ້ອຍ ແລະກາງ, ວິທະຍານິພົນປະລິນຍາມະຫາບັນດິດ, ສາຂາວິຊາ ນິຕິສາດບັນດິດວິທະຍາໄລ, ມະຫາວິທະຍາໄລທຸລະກິດບັນດິດ, ປີ 2000. (ສະບັບພາສາໄທ)

ສຳພາດຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງຈຳປາສັກ, ຄັ້ງວັນທີ 16 ສິງຫາ 2017.

ສຳພາດຫົວໜ້າຂະແໜງສົ່ງເສີມການຜະລິດສິນຄ້າ, ພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ, ຄັ້ງວັນທີ 16 ສິງຫາ 2017.

ສຳພາດຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງປາກຊ່ອງ, ແຂວງຈຳປາສັກ, ຄັ້ງວັນທີ 17 ສິງຫາ 2017.

ສຳພາດຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງຊະນະສົມບູນ, ແຂວງຈຳປາສັກ, ຄັ້ງວັນທີ 18 ສິງຫາ 2017

ສຳພາດຫົວໜ້າຫ້ອງການແຜນການ ແລະ ການລົງທຶນ ເມືອງຊະນະສົມບູນ, ແຂວງຈຳປາສັກ, ຄັ້ງວັນທີ 18 ສິງຫາ 2017.

Kyophilavong Phouphet, Determine the Performance of SME in Vientiane and Other Provinces, Lao Journal of Economic and Business Management, December 2007.

# ເອກະສານຊ້ອນທ້າຍ

1. ແບບສອບຖາມ
2. ຄຳຖາມສຳພາດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ມະຫາວິທະຍາໄລແຫ່ງຊາດ
ຄະນະນິຕິສາດ ແລະ ລັດຖະສາດ

# ແບບສອບຖາມ

**ຮຽນ**: ບັນດາທ່ານທີ່ນັບຖື.

**ເລື່ອງ**: ຂໍຂໍ້ມູນເພື່ອປະກອບການຂຽນວິທະຍານິພົນຫົວຂໍ້: **ມາດຕະການທາງກົດໝາຍຕໍ່ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ ແຂວງຈຳປາສັກ.**

ຂ້າພະເຈົ້າ ນາງ ບຸນເພັງ ມະນີປະກອນ, ເປັນອາຈານສອນຢູ່ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລຈຳປາສັກ ແລະ ກຳລັງສຶກສາປະລິນຍາໂທນິຕິສາດ ສາຂາກົດໝາຍທຸລະກິດ ທີ່ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ ປັດຈຸບັນນີ້ແມ່ນຢູ່ໃນໄລຍະຂຽນວິທະຍານິພົນໃນຫົວຂໍ້ທີ່ກ່າວມາຂ້າງເທິງ ຂໍຖືເປັນກຽດຮຽນສະເໜີມາຍັງທ່ານໄດ້ຊ່ວຍປະກອບຄຳຄິດເຫັນໃສ່ຂໍ້ຄວາມທີ່ທ່ານເຫັນຖືກຕ້ອງ ແລະ ເໝາະສົມ ໂດຍການໝາຍ (√) ໃສ່ຊ່ອງຫວ່າງຕາມແບບສອບຖາມນີ້ ເພື່ອຈະໄດ້ນຳເຂົ້າເປັນບ່ອນອີງໃນການຂຽນວິທະຍານິພົນ ດັ່ງລຸ່ມນີ້:

## I. ຄຸນລັກສະນະທົ່ວໄປຂອງຜູ້ຕອບແບບສອບຖາມ

1. ເພດ:
   - ( ) ຊາຍ
   - ( ) ຍິງ
2. ອາຍຸ:
   - ( ) 25 – 30 ປີ
   - ( ) 31 - 35 ປີ
   - ( ) 36 - 40 ປີ
   - ( ) ຫຼາຍກວ່າ 40 ປີຂຶ້ນໄປ
3. ລະດັບວິຊາສະເພາະ:
   - ( ) ຊັ້ນຕົ້ນ
   - ( ) ຊັ້ນກາງ

( ) ຊັ້ນສູງ

( ) ປະລິນຍາຕີ

( ) ປະລິນຍາໂທ

( ) ປະລິນຍາເອກ

( ) ອື່ນໆ (ກາລຸນາບອກແຈ້ງ)..........................

4. ວິຊາສະເພາະທີ່ຮຽນມາ:

( ) ນິຕິສາດ

( ) ລັດຖະສາດ

( ) ການເມືອງ

( ) ເສດຖະສາດ

( ) ບໍລິຫານທຸລະກິດ

( ) ອື່ນໆ (ກາລຸນາບອກແຈ້ງ)..........................

5. ປະສົບການເຮັດວຽກ:

( ) 2-10 ປີ

( ) 11 - 15 ປີ

( ) 16 - 20 ປີ

( ) 21 - 25 ປີ

( ) ຫຼາຍກວ່າ 26 ປີຂຶ້ນໄປ

6. ບ່ອນປະຈຳການຂອງຜູ້ຕອບແບບສອບຖາມແມ່ນ:

( ) ພະແນກອຸດສາຫະກຳ ແລະ ການຄ້າ ແຂວງຈຳປາສັກ

( ) ພະແນກແຜນການ ແລະ ການລົງທຶນ ແຂວງຈຳປາສັກ

( ) ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ.....................

( ) ຫ້ອງການແຜນການ ແລະ ການລົງທຶນ ເມືອງ...................

( ) ບໍລິສັດ..............................

( ) ຮ້ານຄ້າ............................

( ) ອື່ນໆ (ກາລຸນາບອກແຈ້ງ)..........................

7. ໜ້າທີ່ຕຳແໜ່ງຂອງຜູ້ຕອບແບບສອບຖາມ

( ) ຫົວໜ້າ ແລະ ຮອງຫົວໜ້າ

( ) ວິຊາການ

( ) ພະນັກງານບໍລິຫານ

( ) ນັກທຸລະກິດ

( ) ອື່ນໆ (ກາລຸນາບອກແຈ້ງ).........................................................

II. **ທັດສະນະຜູ້ຕອບແບບສອບຖາມ ກ່ຽວກັບມາດຕະການທາງກົດໝາຍຕໍ່ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ ແຂວງຈໍາປາສັກ**

(ຄໍາຕອບ ຫ້ອງລະດັບ 5 ແມ່ນເຫັນດີສຸດ, ລະດັບ 4 ເຫັນດີຫຼາຍ, ລະດັບ 3 ປານກາງ, ລະດັບ 2 ໜ້ອຍ ແລະ ລະດັບ 1 ໜ້ອຍທີ່ສຸດ)

| ລດ | ເນື້ອໃນຄໍາຖາມ | 5 | 4 | 3 | 2 | 1 |
|---|---|---|---|---|---|---|
| | 1. ນິຕິກໍາ ແລະ ຫຼັກການຕ່າງໆກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ | | | | | |
| 1 | ທ່ານຄິດວ່າກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ກໍານົດເລື່ອງການສົ່ງເສີມໄວ້ຄົບຖ້ວນພຽງພໍແລ້ວລະດັບໃດ? | | | | | |
| 2 | ຜ່ານມາການປັບປຸງສະພາບແວດລ້ອມທາງດ້ານລະບຽບການ ແລະ ການຄຸ້ມຄອງຂອງລັດຕໍ່ການເຄື່ອນໄຫວທຸລະກິດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ມີຄວາມຄອດສ່ອງກັບຫຼັກການທາງກົດໝາຍໃນລະດັບ? | | | | | |
| 3 | ຜ່ານມາການເຂົ້າຫາແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ຄວາມຄອດສ່ອງກັບຫຼັກການທາງກົດໝາຍໃນລະດັບ? | | | | | |
| 4 | ຜ່ານມາການກໍ່ສ້າງຜູ້ປະກອບກິດຈະການໃໝ່ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງຄວາມຄອດສ່ອງກັບຫຼັກການທາງກົດໝາຍໃນລະດັບ? | | | | | |
| 5 | ຜ່ານມາການໃຫ້ການຊ່ວຍເຫຼືອ ແລະ ການບໍລິການພັດທະນາທຸລະກິດຂະໜາດນ້ອຍ ແລະ ກາງ ຄວາມຄອດສ່ອງກັບຫຼັກການທາງກົດໝາຍໃນລະດັບ? | | | | | |
| 6 | ຜ່ານມາການເພີ່ມຜະລິດຕະພາບ ເພື່ອຍົກລະດັບຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ແລະ ການບໍລິການຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ຄວາມຄອດສ່ອງກັບຫຼັກການທາງກົດໝາຍໃນລະດັບ? | | | | | |
| 7 | ການເຂົ້າຫາຕະຫຼາດ ແລະ ການຂະຫຍາຍຕະຫຼາດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ຄວາມຄອດສ່ອງກັບຫຼັກການທາງກົດໝາຍໃນລະດັບ? | | | | | |
| | 2. ວິທີການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຢູ່ແຂວງຈໍາປາສັກ | | | | | |
| 1 | ມາດຕະການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີຄວາມສອດຄ່ອງກັບສະພາບຕົວຈິງ | | | | | |

| | | | | | | |
|---|---|---|---|---|---|---|
| | ໃນລະດັບໃດ? | | | | | |
| 2 | ວິທີການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີຄວາມສອດຄ່ອງກັບສະພາບຕົວຈິງໃນລະດັບໃດ? | | | | | |
| 3 | ການເຂົ້າໃຊ້ມາດຕະການສົ່ງເສີມຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີຄວາມສອດຄ່ອງກັບສະພາບຕົວຈິງໃນລະດັບໃດ? | | | | | |
| 4 | ຄວາມເຂົ້າໃຈຕໍ່ມາດຕະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຂອງອົງການທີ່ກ່ຽວຂ້ອງມີຄວາມພຽງພໍແລ້ວໃນລະດັບໃດ? | | | | | |
| 3. ບັນຫາ ແລະ ອຸປະສັກຕໍ່ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ | | | | | | |
| 1 | ຜ່ານມາການປັບປຸງສະພາບແວດລ້ອມທາງດ້ານລະບຽບການ ແລະ ການຄຸ້ມຄອງຂອງລັດຕໍ່ການເຄື່ອນໄຫວທຸລະກິດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ມີບັນຫາໃນລະດັບ? | | | | | |
| 2 | ຜ່ານມາການເຂົ້າຫາແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ມີບັນຫາໃນລະດັບໃດ? | | | | | |
| 3 | ຜ່ານມາການກໍ່ສ້າງຜູ້ປະກອບກິດຈະການໃໝ່ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ມີບັນຫາໃນລະດັບໃດ? | | | | | |
| 4 | ຜ່ານມາການໃຫ້ການຊ່ວຍເຫຼືອ ແລະ ການບໍລິການພັດທະນາທຸລະກິດຂະໜາດນ້ອຍ ແລະ ກາງ ມີບັນຫາໃນລະດັບໃດ? | | | | | |
| 5 | ຜ່ານມາເພີ່ມຜະລິດຕະພາບ ເພື່ອຍົກລະດັບຄຸນນະພາບ ແລະມາດຕະຖານຜະລິດຕະພັນ ແລະ ການບໍລິການຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ມີບັນຫາໃນລະດັບໃດ? | | | | | |
| 6 | ການເຂົ້າຫາຕະຫຼາດ ແລະ ການຂະຫຍາຍຕະຫຼາດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ມີບັນຫາໃນລະດັບໃດ? | | | | | |
| 7 | ມາດຕະການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະຂະໜາດກາງໃນປັດຈຸບັນ ມີບັນຫາໃນລະດັບໃດ? | | | | | |
| 8 | ວິທີການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີບັນຫາໃນລະດັບໃດ? | | | | | |
| 9 | ການເຂົ້າໃຊ້ມາດຕະການສົ່ງເສີມຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນມີບັນຫາໃນລະດັບໃດ? | | | | | |

| | | | | | | |
|---|---|---|---|---|---|---|
| 10 | ບັນຫາຄວາມເຂົ້າໃຈຂອງນັກທຸລະກິດ ແລະ ອົງການທີ່ກ່ຽວຂ້ອງຕໍ່ມາດຕະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ມີໃນລະດັບໃດ? | | | | | |
| 4. ການແກ້ໄຂບັນຫາ ແລະ ອຸປະສັກຕໍ່ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ ແຂວງຈຳປາສັກ | | | | | | |
| 1 | ຜ່ານມາການປັບປຸງສະພາບແວດລ້ອມທາງດ້ານລະບຽບການ ແລະ ການຄຸ້ມຄອງຂອງລັດຕໍ່ການເຄື່ອນໄຫວທຸລະກິດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ມີການແກ້ໄຂແລ້ວຢູ່ໃນລະດັບໃດ? | | | | | |
| 2 | ຜ່ານມາການແກ້ໄຂບັນຫາການເຂົ້າຫາແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ມີການແກ້ໄຂແລ້ວຢູ່ໃນລະດັບໃດ? | | | | | |
| 3 | ຜ່ານມາການແກ້ໄຂບັນຫາໃນການກໍ່ສ້າງຜູ້ປະກອບກິດຈະການໃໝ່ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງໄດ້ມີການແກ້ໄຂແລ້ວຢູ່ໃນລະດັບໃດ? | | | | | |
| 4 | ຜ່ານມາການແກ້ໄຂບັນຫາໃນການຊ່ວຍເຫຼືອ ແລະ ການບໍລິການພັດທະນາທຸລະກິດຂະໜາດນ້ອຍ ແລະ ກາງ ໄດ້ມີການແກ້ໄຂແລ້ວຢູ່ໃນລະດັບໃດ? | | | | | |
| 5 | ຜ່ານມາການແກ້ໄຂບັນຫາການເພີ່ມຜະລິດຕະພາບ ເພື່ອຍົກລະດັບຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ແລະ ການບໍລິການຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ມີການແກ້ໄຂແລ້ວຢູ່ໃນລະດັບໃດ? | | | | | |
| 6 | ການແກ້ໄຂບັນການເຂົ້າຫາຕະຫຼາດ ແລະ ການຂະຫຍາຍຕະຫຼາດຂອງວິສາຫະກິດຂະໜາດນ້ອຍ ແລະ  ກາງ ໄດ້ມີການແກ້ໄຂແລ້ວຢູ່ໃນລະດັບໃດ? | | | | | |
| 7 | ມາດຕະການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນ ໄດ້ມີການປັບປຸງແກ້ໄຂແລ້ວຢູ່ໃນລະດັບໃດ? | | | | | |
| 8 | ວິທີການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນໄດ້ມີການແກ້ໄຂແລ້ວຢູ່ໃນລະດັບໃດ? | | | | | |
| 9 | ການເຂົ້າໃຊ້ມາດຕະການສົ່ງເສີມຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປັດຈຸບັນໄດ້ມີການແກ້ໄຂແລ້ວຢູ່ | | | | | |

| | | | | | | |
|---|---|---|---|---|---|---|
| | ໃນລະດັບໃດ? | | | | | |
| 10 | ການແກ້ໄຂບັນຫາຄວາມເຂົ້າໃຈຂອງນັກທຸລະກິດ ແລະ ອົງການທີ່ກ່ຽວຂ້ອງຕໍ່ມາດຕະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງມີການແກ້ໄຂແລ້ວຢູ່ໃນລະດັບໃດ? | | | | | |

**ນອກຈາກຄຳຖາມຂ້າງເທິງນັ້ນແລ້ວ ທ່ານຍັງມີຫຍັງຢາກສະເໜີຕື່ມ**

..........................................................................................................
..........................................................................................................
..........................................................................................................
..........................................................................................................
..........................................................................................................
..........................................................................................................
..........................................................................................................
..........................................................................................................
...............................................

ຂ້າພະເຈົ້າຈະເກັບຂໍ້ມູນນີ້ໄວ້ ເພື່ອໃຊ້ເຂົ້າໃນການຄົ້ນຄວ້າເທົ່ານັ້ນ ແລະ ຂໍ້ມູນທີ່ທ່ານໃຫ້ມາຈະຮັກສາຄວາມລັບຈະບໍ່ໃຫ້ແຕະຕ້ອງເຖິງຊື່ສຽງກຽດສັກສີຂອງທ່ານ; ສຸດທ້າຍນີ້, ຂ້າພະເຈົ້າຂໍອວຍພອນໃຫ້ທ່ານ ຂໍໃຫ້ມີສຸຂະພາບແຂງແຮງ, ມີຄວາມຈະເລີນ, ຄວາມສຸກຕະຫຼອດໄປເທີ້ນ.

**ຂໍຂອບໃຈ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ມະຫາວິທະຍາໄລແຫ່ງຊາດ
ຄະນະນິຕິສາດ ແລະ ລັດຖະສາດ

**ຄໍາຖາມສໍາພາດ**

**ຮຽນ**: ບັນດາທ່ານທີ່ນັບຖື.

**ເລື່ອງ**: ຂໍຂໍ້ມູນເພື່ອປະກອບການຂຽນວິທະຍານິພົນຫົວຂໍ້: **ມາດຕະການທາງກົດໝາຍຕໍ່ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ ແຂວງຈໍາປາສັກ.**

ຂ້າພະເຈົ້າ ນາງ ບຸນເພັງ ມະນີປະກອນ, ເປັນອາຈານສອນຢູ່ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລຈໍາປາສັກ ແລະ ກໍາລັງສຶກສາປະລິນຍາໂທນິຕິສາດ ສາຂາກົດໝາຍທຸລະກິດ ທີ່ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ ປັດຈຸບັນນີ້ແມ່ນຢູ່ໃນໄລຍະຂຽນວິທະຍານິພົນໃຫ້ຫົວຂໍ້ທີ່ກ່າວມາຂ້າງເທິງ ຂໍຖືເປັນກຽດຮຽນສະເໜີມາຍັງທ່ານໄດ້ຊ່ວຍປະກອບຄໍາຄິດເຫັນໃສ່ຂໍ້ຄວາມທີ່ທ່ານເຫັນຖືກຕ້ອງ ແລະ ເໝາະສົມ ໂດຍການຕອບຄໍາຖາມລຸ່ມນີ້ ເພື່ອຈະໄດ້ນໍາເຂົ້າເປັນບ່ອນອີງໃນການຂຽນວິທະຍານິພົນ ດັ່ງລຸ່ມນີ້:

1) ນິຕິກໍາ ແລະ ຫຼັກການຕ່າງໆກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງກໍານົດຂັ້ນຕອນ ແລະ ວິທີການສົ່ງເສີມໄວ້ຄືແນວໃດແດ່? (ພຽງພໍ ແລະ ລະອຽດຊັດເຈນແລ້ວບໍ?) ຖ້າບໍ່ພຽງພໍ ແລະ ບໍ່ຊັດເຈນ ຍ້ອນຫຍັງ?

.....................................................................................................................
.....................................................................................................................
.....................................................................................................................
.....................................................................................................................
.....................................................................................................................
.....................................................................................................................
.....................................................................................................................
.....................................................................................................................
.....................................................................................................................
.....................................................................................................................
.....................................................................................................................

2) ບັນຫາ ແລະ ອຸປະສັກ ໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ແຂວງຈຳປາສັກ ປະກອບມີຫຍັງແດ່ ແລະ ເກີດມາຈາກສາເຫດອັນໃດ?

............................................................................................................................

............................................................................................................................

............................................................................................................................

............................................................................................................................

............................................................................................................................

............................................................................................................................

............................................................................................................................

............................................................................................................................

............................................................................................................................

............................................................................................................................

............................................................................................................................

............................................................................................................................

............................................................................................................................

3) ຜ່ານມາແຂວງຈຳປາສັກມີວິທີການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ຄືແນວໃດ?

............................................................................................................................

............................................................................................................................

............................................................................................................................

............................................................................................................................

............................................................................................................................

............................................................................................................................

............................................................................................................................

............................................................................................................................

............................................................................................................................

............................................................................................................................

............................................................................................................................

............................................................................................................................

............................................................................................................................

............................................................................................................................

............................................................................................................................

............................................................................................................................

............................................................................................................................

............................................................................................................................

4) ຜ່ານມາແຂວງຈຳປາສັກໄດ້ໃຊ້ມາດຕະການໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງແນວໃດແດ່?

........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................

5) ວິທີການແກ້ໄຂບັນຫາ ແລະ ອຸປະສັກໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ ແຂວງຈຳປາສັກທີ່ມີປະສິດທິພາບຄວນດຳເນີນຄືແນວໃດ?

........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................

6) ນອກຈາກຄຳຖາມຂ້າງເທິງນັ້ນແລ້ວ ທ່ານຍັງເຫັນວ່າ ມີຄຳຄິດເຫັນຫຍັງເພີ່ມເຕີມຕື່ມ

....................................................................................................................................

....................................................................................................................................

....................................................................................................................................

....................................................................................................................................

....................................................................................................................................

....................................................................................................................................

....................................................................................................................................

....................................................................................................................................

....................................................................................................................................

....................................................................................................................................

....................................................................................................................................

....................................................................................................................................

ຂ້າພະເຈົ້າຈະເກັບຂໍ້ມູນນີ້ໄວ້ ເພື່ອໃຊ້ເຂົ້າໃນການຄົ້ນຄວ້າເທົ່ານັ້ນ ແລະ ຂໍ້ມູນທີ່ທ່ານໃຫ້ມາຈະຮັກສາຄວາມລັບຈະບໍ່ໃຫ້ແຕະຕ້ອງເຖິງຊື່ສຽງກຽດສັກສີຂອງທ່ານ; ສຸດທ້າຍນີ້, ຂ້າພະເຈົ້າຂໍອວຍພອນໃຫ້ທ່ານ ຂໍໃຫ້ມີສຸຂະພາບແຂງແຮງ, ມີຄວາມຈະເລີນ, ຄວາມສຸກຕະຫຼອດໄປເທີ້ນ.

**ຂໍຂອບໃຈ**

# ປະຫວັດຫຍໍ້ຜູ້ສຶກສາ



ຊື່ ແລະ ນາມສະກຸນ: ບຸນເພັງ ມະນີປະກອນ
ເພດ: ຍິງ
ວັນເດືອນປີເກີດ: 08 ພະຈິກ 1983
ບ້ານເກີດ: ໂນນສີລາ ເມືອງ ໜອງບົກ ແລະ ແຂວງ ຄຳມ່ວນ
ບ້ານຢູ່ປັດຈຸບັນ: ຫົວແຊ ເມືອງ ບາຈຽງ ແລະ ແຂວງ ຈຳປາສັກ

**ປະຫວັດການສຶກສາ**

ປີ 1989-1994 ຮຽນປະຖົມຢູ່ໂນລີລາ ເມືອງ ໜອງບົກ ແລະ ແຂວງ ຄຳມ່ວນ
ປີ 1994-2001 ຮຽນມັດທະຍົມຢູ່ ມສ ໜອງບົກ ແຂວງ ຄຳມ່ວນ
ປີ 2002-2008 ຮຽນຢູ່ພາກວິຊາລັດຖະສາດ ຢູ່ຄະນະນິຕິສາດ ແລະ ລັດຖະສາດ
ປີ 2016-2018 ຮຽນປະລິນຍາໂທນິຕິສາດ ສາຂາກົດໝາຍທຸລະກິດ ຄນລ

**ປະຫວັດການເຮັດວຽກ**

ປີ 2009-ປັດຈຸບັນ ເຮັດວຽກຢູ່ຄະນະນິຕິສາດ-ລັດຖະສາດ ມະຫາວິທະຍາໄລຈຳປາສັກ
ເບີໂທລະສັບຕິດຕໍ່ 020 2216 5881
ທຶນການສຶກສາ ທຶນຕົນເອງ